# ບົດລາຍງານສະຖິຕິການທ່ອງທ່ຽວ ຂອງ ສປປ ລາວ

# 2022



ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ກົມພັດທະນາການທ່ອງທ່ຽວ

ພະແນກສະຖິຕິ ແລະ ວິໄຈການທ່ອງທ່ຽວ

LAOS

# ບົດນຳ

ກົມພັດທະນາການທ່ອງທ່ຽວ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ປະສານສົມທົບກັບພະແນກ ຖວທ ບັນດາແຂວງທົ່ວປະເທດ ເກັບກຳຂໍ້ມູນ ແລະ ພິມ ເຜີຍແຜ່ບົດລາຍງານສະຖິຕິການທ່ອງທ່ຽວຂອງ ສປປ ລາວ ໃນທຸກໆປີ. ສະຖິຕິການທ່ອງທ່ຽວ ປະກອບມີຈຳນວນນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ, ລາຍຮັບຈາກການທ່ອງທ່ຽວ, ລາຍຈ່າຍຂອງນັກທ່ອງທ່ຽວ, ໄລຍະການພັກເຊົາຂອງນັກທ່ອງທ່ຽວ, ສະຖິຕິການພັກແຮມ ແລະ ອື່ນໆ.

ປະຈຸບັນສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ໃນທົ່ວໂລກ ແລະ ພາກພື້ນນັບມື້ໄດ້ຫຼຸດໜ້ອຍຖອຍລົງ ເຮັດໃຫ້ການທ່ອງທ່ຽວມີທ່າອ່ຽງທີ່ດີຂຶ້ນ ຈຶ່ງເຮັດໃຫ້ນັກທ່ອງທ່ຽວເດີນທາງໃນທົ່ວໂລກຫຼາຍຂຶ້ນ. ເລີ່ມແຕ່ ສປປ ລາວ ໄດ້ເປີດປະເທດຢ່າງເປັນທາງການໃນວັນທີ່ 9 ພຶດສະພາ 2022 ເປັນຕົ້ນມາ ເຮັດໃຫ້ ສປປ ລາວ ມີຂໍ້ມູນສະຖິຕິນັກທ່ອງທ່ຽວສາກົນໃນປີ 2022. ຂໍ້ມູນໃນບົດລາຍງານສະຖິຕິການທ່ອງທ່ຽວສະບັບນີ້ ຈະເປັນຂໍ້ມູນພື້ນຖານໃຫ້ພາກສ່ວນທີ່ກ່ຽວຂ້ອງນຳໄປສືບຕໍ່ຄົ້ນຄວ້າ ແລະ ສຶກສາຂໍ້ມູນດ້ານການທ່ອງທ່ຽວ ແລະ ຂໍ້ມູນທີ່ກ່ຽວຂ້ອງ ເນື່ອງຈາກວ່າຂະແໜງການທ່ອງທ່ຽວເປັນຂະແໜງເສດຖະກິດ ທີ່ຕິດພັນກັບຫຼາຍຂະແໜງການ ຂອງ ສປປ ລາວ.

ກົມພັດທະນາການທ່ອງທ່ຽວ ຂໍສະແດງຄວາມຂອບໃຈມາຍັງພາກສ່ວນຕ່າງໆທີ່ກ່ຽວຂ້ອງ ທີ່ສະໜອງຂໍ້ມູນປະກອບເຂົ້າໃນປຶ້ມສະຖິຕິການທ່ອງທ່ຽວສະບັບນີ້ ເຊັ່ນ: ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ, ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ, ບັນດາບໍລິສັດທ່ອງທ່ຽວ, ໂຮງແຮມ ແລະ ທຸລະກິດທີ່ປັ່ນອ້ອມໃນຂະແໜງການທ່ອງທ່ຽວ ທີ່ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກໃນການສຳຫຼວດ ແລະ ເກັບຂໍ້ມູນສະຖິຕິການທ່ອງທ່ຽວມາໂດຍຕະຫຼອດ.

ຂໍສະແດງຄວາມຂອບໃຈມາຍັງ ອົງການພັດທະນາສາກົນປະເທດສະຫະລັດອາເມລິກາ ໂດຍຜ່ານໂຄງການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ທຸລະກິດລາວ (USAID LAOS BUSINESS ENVIRONMENT PROJECT) ທີ່ໃຫ້ການສະໜັບສະໜູນທາງດ້ານຊ່ຽວຊານ ໃນການວິເຄາະຂໍ້ມູນ ແລະ ແປປຶ້ມບົດລາຍງານສະຖິຕິການທ່ອງທ່ຽວ ປີ 2022 ຈາກສະບັບພາສາລາວ ເປັນພາສາອັງກິດ.

ຫວັງຢ່າງຍິ່ງວ່າບົດລາຍງານສະຖິຕິການທ່ອງທ່ຽວ ປະຈຳປີ 2022 ຢູ່ ສປປ ລາວ ສະບັບນີ້ ຈະເປັນປະໂຫຍດໃຫ້ແກ່ທຸກພາກສ່ວນທີ່ກ່ຽວຂ້ອງ.

**ຫົວໜ້າກົມ**



**ທ່ານ ນາງ ພອນມະລີ ອິນທະພົມ**

# ສາລະບານ


ບົດນຳ .......... i

ພາກສະເໜີ.......... 1

ພາກທີ I: ຈຳນວນນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ ໃນປີ 2022.......... 5

ສະຫຼຸບໂດຍຫຍໍ້.......... 5

ສະພາບການທ່ອງທ່ຽວຈາກນັກທ່ອງທ່ຽວຕ່າງປະເທດ .......... 5

ຕາຕະລາງທີ 1: ຈຳນວນນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ, ລາຍຮັບຈາກການທ່ອງທ່ຽວ ແລະ ອັດຕາເພີ່ມສະເລ່ຍແຕ່ປີ 1990-2022.......... 7

ຕາຕະລາງທີ 2: ສົມທຽບລາຍຮັບຈາກການທ່ອງທ່ຽວ ກັບມູນຄ່າການສົ່ງອອກ ແຕ່ປີ 2017-2022.......... 8

ເສັ້ນສະແດງທີ 1: ອັດຕາການເພີ່ມຂຶ້ນຈຳນວນນັກທ່ອງທ່ຽວຕ່າງປະເທດ ແລະ ລາຍຮັບຈາກການທ່ອງທ່ຽວ.......... 8

ເສັ້ນສະແດງທີ 2: ຈຳນວນນັກທ່ອງທ່ຽວຕ່າງປະເທດແຕ່ປີ 2012-2022.......... 9

ເສັ້ນສະແດງທີ 3: ຈຳນວນນັກທ່ອງທ່ຽວຕ່າງປະເທດແຕ່ລະເດືອນ ໃນປີ 2018-2022.......... 9

ສະພາບການທ່ອງທ່ຽວຈາກນັກທ່ອງທ່ຽວແຕ່ລະພາກພື້ນ.......... 10

ເສັ້ນສະແດງທີ 4: ນັກທ່ອງທ່ຽວພາກພື້ນ ໃນປີ 2022.......... 10

ຕາຕະລາງທີ 3: ນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ ໃນປີ 2022 .......... 11

ຕາຕະລາງທີ 4: ອັດຕາສ່ວນແບ່ງຕະຫຼາດຂອງນັກທ່ອງທ່ຽວແຕ່ລະພາກພື້ນ (%) 2016-2022.......... 11

ຕາຕະລາງທີ 5: ອັດຕາເພີ່ມຂຶ້ນ ໃນແຕ່ລະປີ (%).......... 11

ການເດີນທາງເຂົ້າມາຂອງນັກທ່ອງທ່ຽວ.......... 12

ຕາຕະລາງທີ 6: ຈຳນວນນັກທ່ອງທ່ຽວຕາມແຕ່ລະປະເພດ ປີ 2022.......... 13

ຕາຕະລາງທີ 7: ລາຍຮັບຈາກການທ່ອງທ່ຽວຕ່າງປະເທດໃນປີ 2022 .......... 13

ຕາຕະລາງທີ 8: ລັກສະນະເດີນທາງຂອງນັກທ່ອງທ່ຽວຕ່າງປະເທດ ແລະ ຈຸດປະສົງຂອງການທ່ອງທ່ຽວ ແຕ່ປີ 2016-2022.......... 14

ນັກທ່ອງທ່ຽວຈາກຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ .......... 14

ຕາຕະລາງທີ 9: ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ແບ່ງຕາມແຕ່ລະສັນຊາດ (ອັດຕາເພີ່ມຂຶ້ນເປັນເປີເຊັນ) ແຕ່ປີ 2017–2022 .......... 16

ຕາຕະລາງທີ 10: ນັກທ່ອງທ່ຽວແບ່ງຕາມແຕ່ລະສັນຊາດ (ອັດຕາສ່ວນແບ່ງຕະຫຼາດ) ແຕ່ປີ 2017-2022.......... 17

ຕາຕະລາງທີ 11: ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ແຕ່ລະເດືອນ ໃນປີ 2022.......... 18

ຕາຕະລາງທີ 12: ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ເປັນໄຕມາດ ແຕ່ປີ 2015-2022 .......... 19

ຕາຕະລາງທີ 13: ປະເພດນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ໃນແຕ່ລະເດືອນ 2018-2022.......... 19

ເສັ້ນສະແດງທີ 5: 10ອັນດັບຂອງນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ປີ 2022 .......... 20

ເສັ້ນສະແດງທີ 6: ຈຳນວນນັກທ່ອງທ່ຽວຕ່າງປະເທດແຕ່ລະໄຕມາດ ໃນປີ 2022 .......... 20

ຊ່ອງທາງການເດີນທາງ ເຂົ້າ-ອອກ ຂອງນັກທ່ອງທ່ຽວ .......... 21

ຕາຕະລາງທີ 14: ນັກທ່ອງທ່ຽວທີ່ຜ່ານດ່ານສາກົນເຂົ້າ–ອອກເມືອງ ແຍກຕາມດ່ານ ແຕ່ປີ 2017-2022......23
ຕາຕະລາງທີ 15: ນັກທ່ອງທ່ຽວທີ່ຜ່ານດ່ານສາກົນເຂົ້າ–ອອກເມືອງ ແຍກຕາມສັນຊາດ ໃນປີ 2022......23
ຕາຕະລາງທີ 16: ນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມໃນແຕ່ລະແຂວງ ແຕ່ປີ 2016-2022......25
ຄົນລາວທີ່ເດີນທາງໄປຕ່າງປະເທດ......25
ຕາຕະລາງທີ 17: ຄົນລາວໃນແຕ່ລະແຂວງທີ່ເດີນທາງໄປຕ່າງປະເທດ ແຕ່ປີ 2016-2022......26
ຕາຕະລາງທີ 18: ຈຸດປະສົງຂອງຄົນລາວທີ່ເດີນທາງໄປຕ່າງປະເທດ ແຕ່ປີ 2019-2022......27
ການທ່ອງທ່ຽວຢູ່ຫຼວງພະບາງ......28
ຕາຕະລາງທີ 19: ຈຳນວນນັກທ່ອງທ່ຽວທີ່ຢ້ຽມຢາມແຂວງຫຼວງພະບາງ ແຕ່ປີ 2017-2022......30
ສະພາບການທ່ອງທ່ຽວພາຍໃນປີ 2022......31
ຕາຕະລາງທີ 20: ນັກທ່ອງທ່ຽວພາຍໃນ ແຕ່ປີ 2016-2022......33
ເສັ້ນສະແດງທີ 7: ຈຳນວນນັກທ່ອງທ່ຽວພາຍໃນ ແຕ່ປີ 2016-2022......33
ຕາຕະລາງທີ 21: ນັກທ່ອງທ່ຽວພາຍໃນທີ່ເຂົ້າມາຢ້ຽມຢາມແຂວງ ແຕ່ລະເດືອນ ໃນປີ 2022......34
ເສັ້ນສະແດງທີ 8: ຈຳນວນນັກທ່ອງທ່ຽວພາຍໃນ ແຕ່ລະເດືອນ ໃນປີ 2022......35
ເສັ້ນສະແດງທີ 9: ຈຳນວນນັກທ່ອງທ່ຽວພາຍໃນ ແຕ່ລະໄຕມາດ ໃນປີ 2022......35
ເສັ້ນສະແດງທີ 10: ຈຳນວນນັກທ່ອງທ່ຽວພາຍໃນ ແຕ່ລະແຂວງໃນປີ 2022......36
ຕາຕະລາງທີ 22: ລາຍຮັບຈາກການທ່ອງທ່ຽວພາຍໃນ ປີ 2022......36
ເສັ້ນສະແດງທີ 11: ອັດຕາການເພີ່ມຂຶ້ນຈຳນວນນັກທ່ອງທ່ຽວພາຍໃນ ແລະ ລາຍຮັບຈາກການທ່ອງທ່ຽວ......37
ການສະໜອງການບໍລິການດ້ານການທ່ອງທ່ຽວ......37
ຕາຕະລາງທີ 23: ຈຳນວນໂຮງແຮມ, ເຮືອນພັກ, ຣີສອດ, ອາພາດເມັ້ນ, ພັດຕະຄານ, ສວນອາຫານ, ຮ້ານອາຫານ, ຮ້ານຄາລະໂອເກະ ແລະ ຮ້ານບັນເທີງ ໃນປີ 2022......40
ຕາຕະລາງທີ 24: ຈຳນວນສະຖານທີ່ພັກແຮມ ແລະ ຫ້ອງນອນ ແຕ່ປີ 2017-2022......40
ຕາຕະລາງທີ 25: ຈຳນວນໂຮງແຮມ, ເຮືອນພັກ, ຣີສອດ, ອາພາດເມັ້ນ, ຫ້ອງນອນ ແລະ ຕຽງ ໃນປີ 2022......41
ຕາຕະລາງທີ 26: ອັດຕາການພັກແຮມຢູ່ແຕ່ລະແຂວງ ແຕ່ປີ 2014-2022......41
ຕາຕະລາງທີ 27: ຈຳນວນແຫຼ່ງທ່ອງທ່ຽວຢູ່ ສປປ ລາວ......42
ຕາຕະລາງທີ 28: ຈຳນວນເຮືອນພັກແຮມປະຊາຊົນ ຢູ່ ສປປ ລາວ ໃນປີ 2022......42
ຕາຕະລາງທີ 29: ຈຳນວນບໍລິສັດທ່ອງທ່ຽວລາວ ແຕ່ປີ 2017-2022......43
ພາກທີ II: ການສຳຫຼວດນັກທ່ອງທ່ຽວ ໃນປີ 2022......44
ການສຳຫຼວດນັກທ່ອງທ່ຽວຕ່າງປະເທດ......44
ຕາຕະລາງທີ 30: ລັກສະນະຂອງນັກທ່ອງທ່ຽວຕ່າງປະເທດທີ່ມາທ່ອງທ່ຽວ ແຕ່ປີ 2018-2022......46
ການສຳຫຼວດນັກທ່ອງທ່ຽວພາຍໃນ......49
ຕາຕະລາງທີ 26: ລັກສະນະຂອງນັກທ່ອງທ່ຽວພາຍໃນທີ່ມາທ່ອງທ່ຽວ ແຕ່ປີ 2020-2022......50
ພາກທີ III: ການຄາດຄະເນສະຖິຕິການທ່ອງທ່ຽວ.......52

ຕາຕະລາງທີ 31: ຄາດຄະເນຈຳນວນນັກທ່ອງທ່ຽວຕ່າງປະເທດ, ລາຍຮັບຈາກການທ່ອງທ່ຽວ ແລະ ສະເລ່ຍໄລຍະພັກເຊົາ, ແຕ່ປີ 2023-2026 ..... 53
ຕາຕະລາງທີ 32: ຄາດຄະເນຈຳນວນນັກທ່ອງທ່ຽວຕ່າງປະເທດໃນແຕ່ລະເດືອນ ແຕ່ປີ 2023-2026 ..... 54
ຕາຕະລາງທີ 33: ການຄາດຄະເນຈຳນວນນັກທ່ອງທ່ຽວພາຍໃນ, ລາຍຮັບຈາກການທ່ອງທ່ຽວ ແລະ ສະເລ່ຍໄລຍະພັກເຊົາ ແຕ່ປີ 2023-2026 ..... 55

## ພາກສະເໜີ

ໃນພາກສ່ວນນີ້ເປັນການອະທິບາຍເຖິງຄວາມໝາຍຂອງຂໍ້ມູນທີ່ໄດ້ມີການເກັບກຳໃນບົດລາຍງານ ເພື່ອໃຫ້ມີຄວາມເຂົ້າໃຈແກ່ຜູ້ນຳໃຊ້ ລວມເຖິງວິທີການເກັບຂໍ້ມູນ ແລະ ແຫຼ່ງທີ່ມາຂອງຂໍ້ມູນທີ່ຢູ່ໃນບົດລາຍງານສະບັບນີ້.

## ປະເພດຂອງນັກທ່ອງທ່ຽວຕ່າງປະເທດ

ປະເພດຂອງນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາລາວຈັດອອກເປັນ 2 ປະເພດ ເຊັ່ນ : ນັກທ່ອງທ່ຽວສາກົນ ແລະ ນັກທ່ອງທ່ຽວຊາຍແດນ ຫຼື ພາກພື້ນ.

☐ ນັກທ່ອງທ່ຽວສາກົນແມ່ນນັກທ່ອງທ່ຽວທີ່ເຂົ້າມາລາວ ໂດຍມີໜັງສືຜ່ານແດນ ແລະ ຂໍເອົາວີຊາຢູ່ສະຖານທູດລາວ ຫຼື ສະຖານກົງສູນລາວ ຫຼື ເອົາວີຊາຢູ່ກັບດ່ານສາກົນ.

☐ ນັກທ່ອງທ່ຽວຊາຍແດນ ຫຼື ພາກພື້ນ ແມ່ນນັກທ່ອງທ່ຽວມາຈາກບັນດາປະເທດໃກ້ຄຽງ ທີ່ມີຊາຍແດນຕິດຈອດກັບ ສປປ ລາວ ເຊັ່ນ: ໄທ, ຈີນ, ຫວຽດນາມ, ກຳປູເຈຍ ແລະ ມຽນມາ. ນັກທ່ອງທ່ຽວຈາກປະເທດເຫຼົ່ານີ້ ເຂົ້າມາ ສປປ ລາວ ໂດຍການໃຊ້ໃບຜ່ານແດນ.

ນັກທ່ອງທ່ຽວລຳຍວັນ / ບໍ່ຄ້າງຄືນ (Same day visitor / Day Tripper / Excursionist) ໝາຍເຖິງ: ນັກທ່ອງທ່ຽວທີ່ມາທ່ຽວພາຍໃນວັນດຽວ ຄືມາຕອນເຊົ້າແລ້ວກັບຕອນແລງ ຫລື ມາຢ້ຽມຢາມໜ້ອຍກວ່າ24 ຊົ່ວໂມງ.

ແຕ່ປີ 1991 ເຖິງ 2002 ມີນັກທ່ອງທ່ຽວປະເພດໜຶ່ງຊຶ່ງເອີ້ນວ່າ "ນັກທ່ອງທ່ຽວຕໍ່ວີຊາ" ຊຶ່ງແມ່ນຜູ້ເຮັດວຽກຢູ່ປະເທດໃກ້ຄຽງ. ໃນທຸກໆ 3 ເດືອນ ຈະຕ້ອງໄດ້ເຂົ້າມາ ສປປ ລາວ ເພື່ອຂໍເອົາວີຊາໃໝ່ເພື່ອສາມາດເຂົ້າໄປໃນຍັງປະເທດໃກ້ຄຽງໄດ້ອີກ, ສ່ວນໃຫຍ່ແມ່ນນັກທ່ອງທ່ຽວຈາກປະເທດອິນເດຍ, ປາກິດສະຖານ, ສີລັງກາ, ເນປານ ແລະ ບັງກາລາເດດ. ນັບຕັ້ງແຕ່ປີ 2003 ເປັນຕົ້ນມາປະເພດນັກທ່ອງທ່ຽວດັ່ງກ່າວ ໄດ້ຈັດເຂົ້າໃນປະເພດ "ນັກທ່ອງທ່ຽວສາກົນ".

## ແຫຼ່ງຂໍ້ມູນ

☐ ສຳລັບຂໍ້ມູນສະຖິຕິນັກທ່ອງທ່ຽວ ພາກພື້ນ ແລະ ສາກົນ ແມ່ນໄດ້ມາຈາກບັດເຂົ້າ-ອອກເມືອງ ຈາກກົມຕຳຫຼວດກວດຄົນ ເຂົ້າ-ອອກເມືອງ, ພະແນກ ຖວທ ນະຄອນຫຼວງ ແລະ ບັນດາແຂວງທົ່ວປະເທດ ເຊັ່ນ: ສັນຊາດ, ເພດ, ໜັງສືຜ່ານແດນ, ໄລຍະພັກເຊົາ, ດ່ານເຂົ້າ-ອອກເມືອງ ແລະ ບ່ອນພັກເຊົາ.

ນັບແຕ່ປີ 1995 ເປັນຕົ້ນມາຂໍ້ມູນນັກທ່ອງທ່ຽວພາກພື້ນ ແລະ ສາກົນໄດ້ເກັບກຳມາຈາກບັດເຂົ້າ-ອອກເມືອງຂອງກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ.

☐ ຂໍ້ມູນນັກທ່ອງທ່ຽວຊາຍແດນ ຫຼື ພາກພື້ນ ໄດ້ມາຈາກຕາຕະລາງບັນທຶກຄົນ ຄົນເຂົ້າ-ອອກເມືອງ ຂອງດ່ານສາກົນກວດຄົນເຂົ້າ-ອອກເມືອງ ທົ່ວປະເທດ.

☐ ຂໍ້ມູນກ່ຽວກັບລັກສະນະຂອງນັກທ່ອງທ່ຽວ, ໄລຍະພັກເຊົາ ແລະ ລາຍຈ່າຍຕໍ່ມື້ຕໍ່ຄົນ ແມ່ນໄດ້ມາຈາກຜົນຂອງການສຳຫຼວດນັກທ່ອງທ່ຽວ ທີ່ເຂົ້າມາຢ້ຽມຢາມ ສປປ ລາວ.

## ດ່ານສາກົນທີ່ນັກທ່ອງທ່ຽວເຂົ້າ-ອອກ ສປປ ລາວ.

## ສະໜາມບິນສາກົນ :

☐ **ສະໜາມບິນສາກົນວັດໄຕ** ມີຫຼາຍສາຍການບິນສາກົນທີ່ເປີດບໍລິການບິນໄປບິນມາສະໜາມບິນນີ້ ເຊິ່ງມີ 12 ສາຍ ການບິນເຊັ່ນ: Thai AirAsia, Lucky Air, Sishuan Airline, Vietnam Airline, Lao Airline State Enterprise, Thai Smile Airways, Jeju Air, China Eastern Airlines, China Express Airlines, Scoot Tiger Air, China Southern Airlines from Vientiane to Bangkok, Hanoi, Chongqing, Hochiminh, Kunming, PhanomPenh, Incheon-South-S, Korea, Shangi-Singapore and GuangZhou.

☐ **ສະໜາມບິນສາກົນຫຼວງພະບາງ** ແມ່ນເປັນດ່ານເຂົ້າ-ອອກເມືອງສາກົນອີກແຫ່ງໜຶ່ງຂອງ ສປປ ລາວ, ປະຈຸບັນມີສາຍການບິນເຊັ່ນ: Lao Airline, Bangkok Airways, Thai AirAsia, Vietnam Airline, Lucky Air, China Eastern Airlines and Charter Flight

☐ **ສະໜາມບິນສາກົນສະຫວັນນະເຂດ** ແມ່ນເປັນສະໜາມສາກົນອີກແຫ່ງໜຶ່ງ ມີການບິນລະຫວ່າງປະເທດ ໂດຍແມ່ນສາຍການບິນລາວ (ປະຈຸບັນຢຸດການບໍລິການຊົ່ວຄາວ).

☐ **ສະໜາມບິນສາກົນປາກເຊ** ມີພຽງແຕ່ສາຍການບິນຂອງ Lao Airline ບິນໄປພຽງແຕ່ Phanom Penh, Hochinminh.

☐ ນອກຈາກນີ້, ກໍຍັງມີສະໜາມບິນຢູ່ແຂວງຕ່າງໆ, ແຕ່ໃຫ້ການບໍລິການສຳລັບການບິນພາຍໃນ ສປປ ລາວ ເທົ່ານັ້ນ.

## ທາງບົກ:

## ດ່ານສາກົນລະຫວ່າງ ລາວ-ໄທ:

| | |
|---|---|
| ☐ ດ່ານ ສາມຫຼ່ຽມຄຳ | ແຂວງ ບໍ່ແກ້ວ - ສາມຫຼ່ຽມຄຳ ແຂວງຊຽງຣາຍ |
| ☐ ດ່ານ ຂົວມິດຕະພາບລາວ - ໄທ IV | ແຂວງ ບໍ່ແກ້ວ - ແຂວງຊຽງຣາຍ |
| ☐ ດ່ານ ນ້ຳເງິນ | ແຂວງ ໄຊຍະບູລີ - ຫ້ວຍໂກນ ແຂວງຫວັດນ່ານ |
| ☐ ດ່ານ ຂົວມິດຕະພາບນ້ຳເຫືອງ | ແຂວງ ໄຊຍະບູລີ - ແຂວງ ເລີຍ |
| ☐ ດ່ານ ພູດູ່ | ແຂວງ ໄຊຍະບູລີ - ແຂວງ ອຸດຕະຣະດິດ |
| ☐ ດ່ານ ຂົວມິດຕະພາບລາວ - ໄທ I | ນະຄອນຫຼວງວຽງຈັນ - ແຂວງ ໜອງຄາຍ |
| ☐ ດ່ານ ສະຖານີລົດໄຟທ່ານາແລ້ງ | ນະຄອນຫຼວງວຽງຈັນ |
| ☐ ດ່ານ ທ່າເຮືອປາກຊັນ | ແຂວງ ບໍລິຄຳໄຊ - ແຂວງ ບຶງການ |
| ☐ ດ່ານ ຂົວມິດຕະພາບລາວ - ໄທ III | ແຂວງຄຳມ່ວນ - ແຂວງ ນະຄອນພະນົມ |
| ☐ ດ່ານ ຂົວມິດຕະພາບລາວ - ໄທ II | ແຂວງ ສະຫວັນນະເຂດ - ແຂວງ ມຸກດາຫານ |
| ☐ ດ່ານ ວັງເຕົ່າ | ແຂວງ ຈຳປາສັກ - ຊ່ອງເມັກ ແຂວງ ອຸບົນຣາຊະທານີ |
| ☐ ດ່ານ ປາງມອນ | ແຂວງ ໄຊຍະບູລີ - ບ້ານຮອກ ແຂວງ ພະເຢົາ |

☐ ດ່ານ ທ່າບົກທ່ານາແລ້ງ　　　　　　　　ນະຄອນຫຼວງວຽງຈັນ

**ດ່ານສາກົນລະຫວ່າງ ລາວ-ຈີນ:**

☐ ດ່ານ ລານຕຸຍ　　　　　　　　ແຂວງ ຜົ້ງສາລີ - ເມືອງຄຳ "ເມືອງເຄັງ" ແຂວງ ຢຸນນານ

☐ ດ່ານ ບໍ່ເຕັນ　　　　　　　　ແຂວງ ຫຼວງນ້ຳທາ - ບໍ່ຫານ ແຂວງ ຢຸນນານ

☐ ດ່ານ ທາງລົດໄຟລາວ-ຈີນ　　　　　　　　ແຂວງ ຫຼວງນ້ຳທາ - ບໍ່ຫານ ແຂວງ ຢຸນນານ

**ດ່ານສາກົນລະຫວ່າງ ລາວ-ຫວຽດນາມ:**

☐ ດ່ານ ປາງຫົກ　　　　　　　　ແຂວງ ຜົ້ງສາລີ - ໄຕຈາງ ແຂວງ ດຽນບຽນ

☐ ດ່ານ ນ້ຳໂສຍ　　　　　　　　ແຂວງ ຫົວພັນ - ນາແມວ ແຂວງ ແທ່ງຮວາ

☐ ດ່ານ ນ້ຳກັ່ນ　　　　　　　　ແຂວງ ຊຽງຂວາງ - ນ້ຳກັ່ນ ແຂວງ ເຫງະອານ

☐ ດ່ານ ນ້ຳພາວ　　　　　　　　ແຂວງ ບໍລິຄຳໄຊ - ເກົາແຈວ ແຂວງ ຮາຕິງ

☐ ດ່ານ ນາເພົ້າ　　　　　　　　ແຂວງ ຄຳມ່ວນ - ຈະລໍ ແຂວງ ກວາງບິງ

☐ ດ່ານ ແດນສະຫວັນ　　　　　　　　ແຂວງ ສະຫວັນນະເຂດ - ລາວບາວ ແຂວງ ກວາງຈີ

☐ ດ່ານ ລະໄລ　　　　　　　　ແຂວງ ສາລະວັນ - ລະໄລ ແຂວງ ກວາງຈີ

☐ ດ່ານ ພູເກືອ　　　　　　　　ແຂວງ ອັດຕະປື - ເບີອີ ແຂວງ ກອນຕູມ

☐ ດ່ານ ດາກຕະອອກ　　　　　　　　ແຂວງ ເຊກອງ - ນ້ຳມຢາງ ແຂວງ ກວາງນາມ

**ດ່ານສາກົນລະຫວ່າງ ລາວ-ກຳປູເຈຍ:**

☐ ດ່ານ ໜອງນົກຂຽນ　　　　　　　　ແຂວງ ຈຳປາສັກ - ຕຣາປຽນ ແຂວງ ຊຽງແຕງ

**ດ່ານສາກົນລະຫວ່າງ ລາວ-ມຽນມາ:**

☐ ດ່ານ ບ້ານເມືອງມອມ　　　　　　　　ແຂວງ ບໍ່ແກ້ວ - ວັງປຸ່ງ ແຂວງ ທ່າຂີ້ເຫຼັກ

# ດ່ານສາກົນເຂົ້າ-ອອກເມືອງ ໃນ ສປປ ລາວ



## ພາກທີ I: ຈຳນວນນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ ໃນປີ 2022

## ສະຫຼຸບໂດຍຫຍໍ້

## ສະພາບການທ່ອງທ່ຽວຈາກນັກທ່ອງທ່ຽວຕ່າງປະເທດ

ເນື່ອງຈາກ ສປປ ລາວ ຕັ້ງຢູ່ໃຈກາງຂອງແຫຼມອິນດູຈີນ ແລະ ອາຊີຕາເວັນອອກສຽງໃຕ້, ສປປ ລາວ ຈຶ່ງເປັນໜຶ່ງໃນຈຸດໝາຍປາຍທາງການທ່ອງທ່ຽວ ຂອງນັກທ່ອງທ່ຽວທີ່ເດີນທາງມາຈາກທາງໄກ ທີ່ມາທ່ຽວປະເທດອ້ອມຂ້າງ ເຊັ່ນ: ປະເທດໄທ, ສສ ຫວຽດນາມ ແລະ ກຳປູເຈຍ ແລ້ວເດີນທາງຕໍ່ເຂົ້າມາຍັງ ສປປ ລາວ. ການເດີນທາງເຂົ້າມາຢ້ຽມຢາມ ສປປ ລາວ ຂອງນັກທ່ອງທ່ຽວຕ່າງປະເທດແມ່ນຂຶ້ນກັບຫຼາຍປັດໄຈ ເຊັ່ນ: ການອຳນວຍຄວາມສະດວກດ້ານການຂົນສົ່ງ, ການເຂົ້າ-ອອກປະເທດ, ຄວາມໂດດເດັ່ນທາງດ້ານສະຖານທີ່ທ່ອງທ່ຽວທີ່ຫຼາກຫຼາຍ ແລະ ຄຸນນະພາບຂອງຜະລິດຕະພັນການທ່ອງທ່ຽວ, ຄວາມສະຫງົບ, ຄວາມປອດໄພຂອງນັກທ່ອງທ່ຽວ ແລະ ອື່ນໆ. ນອກຈາກນັ້ນກໍຍັງມີປັດໄຈອື່ນໆ ເຊັ່ນ: ສະພາບການແຜ່ລະບາດຂອງພະຍາດ ໂຄວິດ-19, ໄພພິບັດທາງທຳມະຊາດ, ສະພາບການທາງດ້ານເສດຖະກິດ, ດ້ານການເມືອງ, ການກໍ່ການຮ້າຍ ແລະ ອື່ນໆ.

ຂະແໜງການທ່ອງທ່ຽວແມ່ນໜຶ່ງ ໃນ 6 ຂະແໜງບູລິມະສິດທີ່ສຳຄັນໃນການພັດທະນາເສດຖະ ກິດ - ສັງຄົມຂອງ ສປປ ລາວ. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຈຶ່ງໄດ້ສ້າງແຜນພັດທະນາການທ່ອງທ່ຽວ ຂອງ ສປປ ລາວ ສຳລັບປີ 2021-2025 ເພື່ອໃຫ້ສອດຄ່ອງກັບນະໂຍບາຍຂອງລັດຖະບານລາວ ໃນການສົ່ງເສີມການທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ, ປະຫວັດສາດ ແລະ ກະສິກຳ ຕາມທິດສີຂຽວ ແລະ ຍືນຍົງ. ແຜນພັດທະນາການທ່ອງທ່ຽວຂອງ ສປປ ລາວ ໄດ້ກຳນົດ 6 ເປົ້າໝາຍ ຄື: 1. ພັດທະນາບຸກຄະລາກອນໃນຂະແໜງການທ່ອງທ່ຽວ ໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມສາມາດທາງດ້ານວິຊາການຮັບປະກັນທາງດ້ານປະລິມານ, ຄຸນນະພາບ, 2. ພັດທະນາ ແລະ ປັບປຸງໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ ຮັບປະກັນທາງດ້ານປະລິ ມານ ແລະ ຄຸນນະພາບ, 3. ສ້າງ, ປັບປຸງ ແລະ ເຜີຍແຜ່ບັນດາກົດໝາຍ, ນິຕິກຳໃນຂະແໜງການທ່ອງທ່ຽວໃຫ້ຮັດກຸມ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ, 4. ພັດທະນາ ແລະ ປັບປຸງສະ ຖານທີ່ທ່ອງທ່ຽວ, ຜະລິດຕະພັນທ່ອງທ່ຽວ ແລະ ການບໍລິການທ່ອງທ່ຽວໃຫ້ມີຄຸນນະພາບ, ມີຄວາມຍືນຍົງ, 5. ສົ່ງ ເສີມ ແລະ ໂຄສະນາການທ່ອງທ່ຽວລາວໃຫ້ເຂົ້າເຖິງກຸ່ມຕະຫຼາດເປົ້າໝາຍໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ, 6. ປະສານສົມທົບ ແລະ ຮ່ວມມືກັບບັນດາຂະແໜງການທີ່ກ່ຽວຂ້ອງທັງພາກລັດ ແລະ ພາກທຸລະກິດທັງພາຍໃນ ແລະ ຕ່າງປະເທດໃນການພັດທະນາ, ໂຄສະນາ ແລະ ຄຸ້ມຄອງການທ່ອງທ່ຽວໃຫ້ມີປະສິດທິພາບ.

ໃນໄລຍະປີ 1990 ຫາ 2015 ຈຳນວນນັກທ່ອງທ່ຽວຕ່າງປະເທດເຂົ້າມາລາວເພີ່ມຂຶ້ນຢ່າງຕໍ່ເນື່ອງໃນປີ 1990 ມີຈຳນວນ 14,400 ເທື່ອຄົນ, ມາເປັນ 4,684,429 ເທື່ອຄົນ ປີ 2015. ໃນປີ 2016 ທ່າອ່ຽງດັ່ງກ່າວໄດ້ຫຼຸດລົງ ເມື່ອທຽບໃສ່ປີ 2015 ຫຼຸດລົງ -10% ແລະ ຫຼຸດລົງອີກ -8.7% ໃນປີ 2017 (3,868,838 ເທື່ອຄົນ) ເຖິງແນວໃດກໍ່ຕາມຂະແໜງການທ່ອງທ່ຽວຍັງເປັນຕົວຂັບເຄື່ອນໃນການພັດທະນາເສດຖະກິດ–ສັງຄົມ ແລະ ປີທ່ອງທ່ຽວລາວ 2018 ປະສົບຜົນສຳເລັດ, ທ່າອ່ຽງທາງລົບນີ້ເລີ່ມມີທ່າອ່ຽງປີ້ນກັບນັກທ່ອງທ່ຽວເພີ່ມຂຶ້ນເລັກນ້ອຍ 8.2% ເມື່ອທຽບໃສ່ປີ 2017, ໃນປີ 2019 ການຂະຫຍາຍຕົວຢ່າງຕໍ່ເນື່ອງດ້ວຍການເພີ່ມຂຶ້ນຂອງນັກທ່ອງທ່ຽວຕ່າງປະເທດ 14.4% ເມື່ອທຽບໃສ່ປີ 2018.

ໂດຍລວມແລ້ວ, ຈຳນວນຕົວເລກນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ ເຖິງວ່າຈະມີບາງໄລຍະຈະເພີ່ມຂຶ້ນຫຼາຍ ແລະ ບາງໄລຍະຈຳນວນຫຼຸດລົງຫຼາຍກໍຕາມ, ແຕ່ຈຳນວນຕົວເລກນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມກໍຍັງມີທ່າອ່ຽງຄ່ອຍໆເພີ່ມຂຶ້ນ.

ໃນປ 2020 ພະຍາດໂຄວິດ-19 ໄດ້ສົ່ງຜົນກະທົບຢ່າງຮ້າຍແຮງຕໍ່ການທ່ອງທ່ຽວທົ່ວໂລກ. ເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດດັ່ງກ່າວ, ລັດຖະບານໄດ້ປະກາດມາດຕະການປ້ອງກັນ ແລະ ຄວບຄຸມພະຍາດຢ່າງເຂັ້ມງວດ ລວມທັງການປິດດ່ານສາກົນຕ່າງໆ ນັບແຕ່ເດືອນ ເມສາ 2020 ເປັນຕົ້ນ ມາເຮັດໃຫ້ນັກທ່ອງທ່ຽວຕ່າງປະເທດໃນປີ 2020 ຫຼຸດລົງເຖິງ - 81.5% ຫຼຸດຈາກ 4,791,065 ເທື່ອຄົນ ໃນປີ 2019 ມີພຽງ 886,447 ເທື່ອຄົນ. ນັບຕັ້ງແຕ່ເດືອນເມສາ 2020 ເປັນຕົ້ນມາຈົນຮອດ ເດືອນ ທັນວາ ປີ 2021, ລັດຖະບານແຫ່ງ ສປປ ລາວ ໄດ້ປະຕິບັດມາດຕະການຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19 ໂດຍບໍ່ໄດ້ເປີດຕ້ອນຮັບນັກທ່ອງທ່ຽວ ຈຶ່ງເປັນສາເຫດເຮັດໃຫ້ ສປປ ລາວ ບໍ່ມີຕົວເລກນັກທ່ອງທ່ຽວ ຈາກພາກພື້ນ ແລະ ສາກົນ ໃນປີ 2021.

ໃນເດືອນມັງກອນ ຫາ ທ້າຍເດືອນເມສາ ປີ 2022, ສປປ ລາວ ໄດ້ເລີ່ມເປີດເຂດທ່ອງທ່ຽວສີຂຽວ ທີ່ອະນຸຍາດໃຫ້ນັກທ່ອງທ່ຽວ ເຂົ້າມາທ່ຽວແບບເປັນກຸ່ມຜ່ານບໍລິສັດທ່ອງທ່ຽວ, ແຕ່ຍັງມີມາດຕະການທີ່ເຂັ້ມງວດໃນການເດີນທາງ. ມາຮອດວັນທີ 9 ພຶດສະພາ 2022 ສປປ ລາວ ໄດ້ປະກາດເປີດປະເທດແບບເຕັມຮູບແບບ, ໄດ້ຫຼຸດຜ່ອນມາດຕະການຫຼາຍຢ່າງລົງ. ແຕ່ນັກທ່ອງທ່ຽວສາກົນກໍຍັງບໍ່ທັນເຂົ້າມາຫຼາຍ ຖ້າທຽບໃສ່ກັບໄລຍະດຽວກັນກ່ອນເກີດການແຜ່ລະບາດຂອງພະຍາດໂຄວິດ-19 ອັນເນື່ອງມາຈາກຜົນກະທົບຈາກລາຄາຂອງສາຍການບິນທີ່ຍັງມີລາຄາສູງ, ສະພາບໄພເງິນເຟີ້ຢູ່ໃນພາກພື້ນ ແລະ ສາກົນ, ການເພີ່ມຂຶ້ນຂອງລາຄານໍ້າມັນ ແລະ ການຂາດແຮງງານໃນຂະແໜງການທ່ອງທ່ຽວ ເປັນສາເຫດຕົ້ນຕໍເຮັດໃຫ້ຕົ້ນທຶນການທ່ອງທ່ຽວເພີ່ມຂຶ້ນເປັນຢ່າງຫຼວງຫຼາຍ. ສັງເກດໄດ້ຈາກຈໍານວນນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ແມ່ນມີຈໍານວນຫຼຸດລົງ ຈາກຈໍານວນ 4,791,065 ເທື່ອຄົນ ໃນປີ 2019 ຫລຸດລົງ 1,294,365 ເທື່ອຄົນ ໃນປີ 2022 (ຫຼຸດລົງ -73%).

ຈາກການຫຼຸດລົງຂອງຈໍານວນນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ ຈຶ່ງເຮັດໃຫ້ລາຍຮັບຈາກການທ່ອງທ່ຽວຂອງ ສປປ ລາວ ກໍຫຼຸດລົງຈາກ 934,710,409 ໂດລາສະຫະລັດ ໃນປີ 2019 ຫລຸດລົງເຫຼືອ 264,511,231 ໂດລາສະຫະລັດ ໃນປີ 2022 (ຫຼຸດລົງ -71.7%). ເຫັນເຊັ່ນການຫຼຸດລົງຂອງລາຍຮັບ ກໍຄ້າຍຄຽງກັບອັດຕາສ່ວນທີ່ນັກທ່ອງທ່ຽວທີ່ຫຼຸດລົງ 72.9%, ຊຶ່ງສະແດງໃຫ້ເຫັນວ່າ ພຶດຕິກໍາການໃຊ້ຈ່າຍຂອງນັກທ່ອງທ່ຽວ ຍັງບໍ່ມີການປ່ຽນແປງເມື່ອປຽບທຽບກັບຊ່ວງກ່ອນມີການລະບາດຂອງພະຍາດໂຄວິດ-19.

ເມື່ອປຽບທຽບຄວາມສໍາຄັນຂອງການທ່ອງທ່ຽວ, ດ້ານລາຍຮັບທີ່ເປັນເງິນຕາຕ່າງປະເທດ ອຸດສາຫະກໍາການທ່ອງທ່ຽວໃນປີ 2022 ສ້າງລາຍຮັບໄດ້ 537.5 ລ້ານໂດລາສະຫະລັດ, ຈັດໃນລໍາດັບທີ 5 ຂອງມູນຄ່າການສົ່ງອອກເມື່ອທຽບກັບອຸດສາຫະກໍາອື່ນໆ. ໃນປີ 2017-2019 ຢູ່ໃນລໍາດັບທີ 4 ຂອງມູນຄ່າການສົ່ງອອກ ເຊິ່ງມູນຄ່າລາຍຮັບໃນປີ 2017 ຈໍານວນ 648.0 ລ້ານໂດລາສະຫະລັດ, ປີ 2018 ຈໍານວນ 811.0 ລ້ານໂດລາສະຫະລັດ ແລະ ປີ 2019 ຈໍານວນ 934.7 ລ້ານໂດລາສະຫະລັດ. ຖືວ່າອຸດສາຫະກໍາການທ່ອງທ່ຽວ ເປັນແຫຼ່ງລາຍຮັບທາງໜຶ່ງທີ່ສໍາຄັນຂອງ ສປປ ລາວ ຮອງຈາກອຸດສາຫະກໍາໄຟຟ້າ, ອຸດສາຫະກໍາແຮ່ທາດ ແລະ ຜະລິດຕະພັນກະສິກໍາ.

## ຕາຕະລາງທີ 1: ຈໍານວນນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ, ລາຍຮັບຈາກການທ່ອງທ່ຽວ ແລະ ອັດຕາເພີ່ມສະເລ່ຍແຕ່ປີ 1990-2022

| ປີ | ຈໍານວນນັກທ່ອງທ່ຽວ | (%) △ | ໄລຍະພັກເຊົາສະເລ່ຍ ຂອງນັກທ່ອງທ່ຽວ ສາກົນ | ໄລຍະພັກເຊົາສະເລ່ຍ ຂອງນັກທ່ອງທ່ຽວ ພາກພື້ນ | ໄລຍະພັກເຊົາສະເລ່ຍຂອງ ນັກທ່ອງທ່ຽວທັງໝົດ ທີ່ເຂົ້າມາຢ້ຽມຢາມ | ລາຍຮັບຈາກ ການທ່ອງທ່ຽວ |
|---|---|---|---|---|---|---|
| 1990 | 14,400 | - | - | - | - | - |
| 1991 | 37,613 | 161.2 | - | - | - | 2,250,000 |
| 1992 | 87,571 | 132.8 | - | - | - | 4,510,000 |
| 1993 | 102,946 | 17.5 | 3.5 | - | - | 6,280,000 |
| 1994 | 146,155 | 41.9 | 5.1 | - | - | 7,557,600 |
| 1995 | 346,460 | 137.0 | 4.3 | - | - | 24,738,480 |
| 1996 | 403,000 | 16.3 | 4.8 | 1.8 | 3.3 | 43,592,263 |
| 1997 | 463,200 | 14.9 | 5.0 | 3.0 | 4.0 | 73,276,904 |
| 1998 | 500,200 | 7.9 | 5.0 | 2.4 | 3.7 | 79,960,145 |
| 1999 | 614,278 | 22.8 | 5.5 | 2.4 | 4.0 | 97,265,324 |
| 2000 | 737,208 | 20.0 | 5.5 | 2.4 | 4.0 | 113,898,285 |
| 2001 | 673,823 | -9.0 | 8.0 | 2.4 | 5.2 | 103,786,323 |
| 2002 | 735,662 | 9.1 | 6.5 | 2.1 | 4.3 | 113,409,883 |
| 2003 | 636,361 | -14.0 | 6.0 | 2.0 | 4.0 | 87,302,412 |
| 2004 | 894,806 | 41.0 | 6.5 | 2.0 | 4.3 | 118,947,707 |
| 2005 | 1,095,315 | 22.0 | 7.0 | 2.0 | 4.5 | 146,770,074 |
| 2006 | 1,215,106 | 11.0 | 7.0 | 2.0 | 4.5 | 173,249,896 |
| 2007 | 1,623,943 | 34.0 | 7.0 | 2.0 | 4.5 | 233,304,695 |
| 2008 | 1,736,787 | 7.0 | 6.5 | 2.0 | 4.3 | 275,515,758 |
| 2009 | 2,008,363 | 16.0 | 7.0 | 2.0 | 4.5 | 267,700,224 |
| 2010 | 2,513,028 | 25.0 | 7.0 | 2.0 | 4.5 | 381,669,031 |
| 2011 | 2,723,564 | 8.0 | 7.0 | 2.0 | 4.5 | 406,184,338 |
| 2012 | 3,330,072 | 22.3 | 7.2 | 2.0 | 4.6 | 506,022,586 |
| 2013 | 3,779,490 | 13.0 | 8.4 | 2.0 | 5.2 | 595,909,127 |
| 2014 | 4,158,719 | 10.0 | 7.9 | 2.0 | 4.9 | 641,636,543 |
| 2015 | 4,684,429 | 13.0 | 7.5 | 2.0 | 4.8 | 725,365,681 |
| 2016 | 4,239,047 | -10.0 | 7.5 | 2.0 | 4.8 | 724,191,957 |
| 2017 | 3,868,838 | -8.7 | 8.3 | 2.0 | 5.2 | 648,067,008 |
| 2018 | 4,186,432 | 8.2 | 7.9 | 2.0 | 5.0 | 811,010,661 |
| 2019 | 4,791,065 | 14.4 | 7.9 | 2.0 | 5.0 | 934,710,409 |
| 2020 | 886,447 | -81.5 | 7.9 | 2.0 | 5.0 | 213,367,141 |
| **2021** | - | - | - | - | - | - |
| **2022** | **1,294,365** | -73 | 9.6 | 2.0 | 5.8 | 264,511,231 |

## ຕາຕະລາງທີ 2: ສົມທຽບລາຍຮັບຈາກການທ່ອງທ່ຽວ ກັບມູນຄ່າການສົ່ງອອກ ແຕ່ປີ 2017-2022

| ຜະລິດຕະພັນ | 2022 | | 2021 | | 2020 | | 2019 | | 2018 | | 2017 | |
|---|---|---|---|---|---|---|---|---|---|---|---|---|
| | ລາຍຮັບ | ລຳດັບ | ລາຍຮັບ | ລຳດັບ | ລາຍຮັບ | ລຳດັບ | ລາຍຮັບ | ລຳດັບ | ລາຍຮັບ | ລຳດັບ | ລາຍຮັບ | ລຳດັບ |
| **ທ່ອງທ່ຽວ** | **537.5** | **5** | **93.5** | **7** | **213.3** | **5** | **934.7** | **4** | **811.0** | **4** | **648.0** | **4** |
| ຕັດຫຍິບ | 256.7 | 6 | 190.0 | 5 | 192.5 | 6 | 213.5 | 6 | 193.9 | 6 | 182.3 | 6 |
| ໄຟຟ້າ | 2,503.3 | 2 | 2,317.3 | 1 | 1,976.4 | 1 | 1,326.8 | 3 | 1,408.1 | 3 | 1,280.3 | 3 |
| ຜະລິດຕະພັນໄມ້ | 46.4 | 8 | 42.4 | 8 | 27.2 | 8 | 58.9 | 8 | 184.5 | 7 | 48.6 | 8 |
| ກາເຟ | 98.9 | 7 | 95.2 | 6 | 90.8 | 7 | 69.4 | 7 | 102.6 | 8 | 105.1 | 7 |
| ຜະລິດຕະພັນກະສິກຳ | 969.1 | 4 | 1,155.1 | 4 | 1,186.2 | 4 | 921.0 | 5 | 586.4 | 5 | 582.5 | 5 |
| ແຮ່ທາດ | 1,792.1 | 3 | 1,701.2 | 3 | 1,314.4 | 3 | 1,438.0 | 2 | 1,439.4 | 2 | 1,390.5 | 1 |
| ຫັດຖະກຳ | 14.2 | 9 | 12.9 | 9 | 4.6 | 9 | 54.3 | 9 | 18.0 | 9 | 3.2 | 9 |
| ອຸດສະຫະກຳອື່ນໆ | 2,516.9 | 1 | 2,112.5 | 2 | 1,375.7 | 2 | 1,781.7 | 1 | 1,476.9 | 1 | 1,295.0 | 2 |

ແຫຼ່ງຂໍ້ມູນຈາກ: ກະຊວງອຸດສະຫະກຳ ແລະການຄ້າ (ຫົວໜ່ວຍ: ລ້ານໂດລາ)

## ເສັ້ນສະແດງທີ 1: ອັດຕາການເພີ່ມຂຶ້ນຈຳນວນນັກທ່ອງທ່ຽວຕ່າງປະເທດ ແລະ ລາຍຮັບຈາກການທ່ອງທ່ຽວ

### ຈຳນວນນັກທ່ອງທ່ຽວຕ່າງປະເທດ

**2019** **2022**

**4,791,065** **1,294,365**

**ອັດຕາເພີ່ມຂຶ້ນເປັນ % −72.9**




### ລາຍຮັບ

**2019** **2022**

**$ 934,710,409** **$ 264,511,231**

**ອັດຕາເພີ່ມຂຶ້ນເປັນ % −71.7**



**ເສັ້ນສະແດງທີ 2: ຈຳນວນນັກທ່ອງທ່ຽວຕ່າງປະເທດແຕ່ປີ 2012-2022**




**ເສັ້ນສະແດງທີ 3: ຈຳນວນນັກທ່ອງທ່ຽວຕ່າງປະເທດແຕ່ລະເດືອນ ໃນປີ 2018-2022**



## ສະພາບການທ່ອງທ່ຽວຈາກນັກທ່ອງທ່ຽວແຕ່ລະພາກພື້ນ

ຜ່ານການວິເຄາະຂໍ້ມູນເຫັນວ່ານັກທ່ອງທ່ຽວຈາກພາກພື້ນອາຊຽນ ເປັນກຸ່ມ ທີ່ມີຄວາມສຳຄັນຕໍ່ການທ່ອງທ່ຽວຂອງ ສປປ ລາວ. ໃນປີ 2022 ມີ ນັກທ່ອງທ່ຽວ ທັງໝົດຈຳນວນ 1,124,376 ເທື່ອຄົນ, ສະເລ່ຍ 86.87% ຂອງນັກທ່ອງທ່ຽວທັງໝົດ ແລະ ເມື່ອປຽບທຽບກັບອັດຕາສ່ວນຂອງນັກທ່ອງທ່ຽວໃນປີ 2016 ສະເລ່ຍ 72.74%, ປີ 2017, 71.01%, ປີ 2018, 68.96%, ປີ 2019, 66.77% ແລະ ປີ 2020, 62.67%. ເນື່ອງຈາກວ່າ ສປປ ລາວ ເປັນປະເທດທີ່ບໍ່ຕິດກັບທາງອອກຂອງທະເລ ແລະ ຍັງບໍ່ທັນມີສາຍການບິນໂດຍກົງກັບຫຼາຍເສັ້ນທາງໃນທົ່ວໂລກ ຈຶ່ງເຮັດໃຫ້ການເດີນທາງຕ້ອງໄດ້ ເຊື່ອມຕໍ່ກັບສາຍການບິນຂອງບັນດາປະເທດໃນພາກພື້ນ ເຊັ່ນ: ໄທ, ສສ ຫວຽດນາມ, ສ. ເກົາຫຼີ, ສປ ຈີນ ແລະ ກຳປູເຈຍ. ດັ່ງນັ້ນ ນັກທ່ອງທ່ຽວໃນພາກພື້ນອາຊີຈຶ່ງມີຄວາມສະດວກໃນການເດີນທາງເຂົ້າມາຢ້ຽມຢາມ ສປປ ລາວ ຫຼາຍກວ່ານັກທ່ອງທ່ຽວໃນພາກພື້ນອື່ນໆ.

ແຕ່ກໍຍັງມີຂໍ້ສັງເກດທີ່ໜ້າສົນໃຈກ່ຽວກັບນັກທ່ອງທ່ຽວທີ່ມາຈາກພາກພື້ນ ອາຊຽນ, ອາຊີ ແລະ ປາຊີຟິກ ກ່ອນການແຜ່ລະບາດຂອງພະຍາດ ໂຄວິດ-19 ໄດ້ມີການຂະຫຍາຍຕົວຢ່າງໄວວາ ແລະ ເປັນກຸ່ມ ທີ່ເຂົ້າມາຢ້ຽມຢາມເປັນລຳດັບທີ 2. ໃນປີ 2016 ມີອັດຕາສ່ວນ 19.73%, ເພີ່ມຂຶ້ນ 7%, ໃນປີ 2017 ມີອັດຕາສ່ວນ 22.87% ເພີ່ມຂຶ້ນ 6%, ໃນປີ 2018 ມີອັດຕາສ່ວນ 25.21% ເພີ່ມຂຶ້ນ 19%, ໃນປີ 2019 ມີອັດຕາສ່ວນ 27.50% ເພີ່ມຂຶ້ນ 25%. ແຕ່ພາຍຫຼັງຈາກມີການແຜ່ລະບາດຂອງພະຍາດໂຄວິດ-19, ໃນປີ 2022 ມີອັດຕາສ່ວນພຽງແຕ່ 7.21% ເນື່ອງຈາກຫຼາຍປະເທດຍັງບໍ່ທັນມີນະໂຍບາຍເປີດປະເທດຢ່າງເຕັມຮູບແບບ ລວມທັງ ສປ ຈີນ ແລະ ຍີ່ປຸ່ນ ເຊິ່ງກຸ່ມປະເທດເຫຼົ່ານີ້ ເປັນກຸ່ມຕະຫຼາດທີ່ສຳຄັນຫຼັງຈາກມີການເປີດປະເທດຢ່າງເຕັມຮູບແບບ.

### ເສັ້ນສະແດງທີ 4: ນັກທ່ອງທ່ຽວພາກພື້ນ ໃນປີ 2022



## ຕາຕະລາງທີ 3: ນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ ໃນປີ 2022

| ປີ | 2016 | 2017 | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|---|---|
| ອາຊຽນ | 3,083,383 | 2,747,096 | 2,886,844 | 3,198,829 | 555,519 | - | 1,124,376 |
| ອາຊີ ແລະ ປາຊີຟິກ | 836,282 | 884,875 | 1,055,415 | 1,317,478 | 226,297 | - | 93,297 |
| ເອີຣົບ | 221,908 | 161,194 | 165,808 | 182,465 | 70,459 | - | 46,729 |
| ອາເມລິກາ | 86,211 | 64,227 | 69,101 | 82,652 | 30,176 | - | 25,440 |
| ອາຟຣິກາ ແລະ ຕາເວັນອອກກາງ | 11,263 | 11,446 | 9,264 | 9,641 | 3,996 | - | 4,523 |
| **ລວມທັງໝົດ** | **4,239,047** | **3,868,838** | **4,186,432** | **4,791,065** | **886,447** | - | **1,294,365** |

## ຕາຕະລາງທີ 4: ອັດຕາສ່ວນແບ່ງຕະຫຼາດຂອງນັກທ່ອງທ່ຽວແຕ່ລະພາກພື້ນ (%) 2016-2022

| ປີ | 2016 | 2017 | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|---|---|
| ອາຊຽນ | 72.74% | 71.01% | 68.96% | 66.77% | 62.67% | - | 86.87% |
| ອາຊີ ແລະ ປາຊີຟິກ | 19.73% | 22.87% | 25.21% | 27.50% | 25.53% | - | 7.21% |
| ເອີຣົບ | 5.23% | 4.17% | 3.96% | 3.81% | 7.95% | - | 3.61% |
| ອາເມລິກາ | 2.03% | 1.66% | 1.65% | 1.73% | 3.40% | - | 1.97% |
| ອາຟຣິກາ ແລະ ຕາເວັນອອກກາງ | 0.27% | 0.30% | 0.22% | 0.20% | 0.45% | - | 0.35% |
| **ລວມທັງໝົດ** | **100%** | **100%** | **100%** | **100%** | **100%** | - | **100%** |

## ຕາຕະລາງທີ 5: ອັດຕາເພີ່ມຂຶ້ນ ໃນແຕ່ລະປີ (%)

| ປີ | 16/15 | 17/16 | 18/17 | 19/18 | 20/19 | 21/20 | 22/19 |
|---|---|---|---|---|---|---|---|
| ອາຊຽນ | -14% | -11% | 5% | 11% | -83% | - | -65% |
| ອາຊີ ແລະ ປາຊີຟິກ | 7% | 6% | 19% | 25% | -83% | - | -93% |
| ເອີຣົບ | 2% | -27% | 3% | 10% | -61% | - | -74% |
| ອາເມລິກາ | -3% | -26% | 8% | 20% | -63% | - | -69% |
| ອາຟຣິກາ ແລະ ຕາເວັນອອກກາງ | 6% | 2% | -19% | 4% | -59% | - | -53% |
| **ລວມທັງໝົດ** | **-10%** | **-8.73%** | **8.2%** | **14.4%** | **-81.5%** | - | **-73%** |

## ການເດີນທາງເຂົ້າມາຂອງນັກທ່ອງທ່ຽວ

ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ໃນປີ 2022 ສ່ວນຫຼາຍແມ່ນນັກທ່ອງທ່ຽວທີ່ນຳໃຊ້ໜັງສືຜ່ານແດນ ຈຳນວນ 1,058,439 ເທື່ອຄົນ ສະເລ່ຍ 81.77%, ນັກທ່ອງທ່ຽວຕ່າງປະເທດ143,426 ເທື່ອຄົນ ແລະ ນັກທ່ອງທ່ຽວຊາຍແດນ 915,013 ເທື່ອຄົນ. ສັງເກດເຫັນວ່ານັກທ່ອງທ່ຽວຊາຍແດນສ່ວນຫຼາຍແມ່ນໃຊ້ໜັງສືຜ່ານແດນເປັນຫຼັກ, ສາເຫດຍ້ອນວ່າ ບັດຜ່ານແດນສາມາດເດີນທາງໄດ້ສະເພາະໃນພື້ນທີ່ຈຳກັດ. ແຕ່ນັກທ່ອງທ່ຽວທີ່ເຂົ້າມາ ສປປ ລາວ ໃນປີ 2022 ສ່ວນຫຼາຍຕ້ອງການເດີນທາງໄປຫຼາຍບ່ອນ ໂດຍສະເພາະການນຳໃຊ້ລົດໄຟ ລາວ-ຈີນ ໃນໄລຍະທີມີການແຜ່ລະບາດຂອງພະຍາດໂຄວິດ–19 ເພື່ອເດີນທາງໄປສະຖານທີ່ຕ່າງໆ ເຊັ່ນ: ຫຼວງພະບາງ, ວັງວຽງ, ອຸດົມໄຊ ແລະ ບໍ່ເຕັນ ຈຶ່ງຈຳເປັນທີ່ ຕ້ອງໃຊ້ໜັງສືເດີນທາງ (PASSPORT) ປະເທດທີ່ນຳໃຊ້ໜັງສືຜ່ານແດນເຂົ້າມາ ສປປ ລາວ ຫຼາຍທີ່ສຸດ ແມ່ນນັກທ່ອງທ່ຽວທີ່ມາຈາກປະເທດໄທ ທີ່ມີຊາຍແດນຕິດກັບ ສປປ ລາວ ມີຈຳນວນ 539,405 ເທື່ອຄົນ ສະເລ່ຍ 46.87% ຂອງຜູ້ທີ່ນຳໃຊ້ໜັງສືຜ່ານແດນທັງໝົດ. ຕໍ່ມາແມ່ນນັກທ່ອງທ່ຽວຈາກ ສສ ຫວຽດນາມ ມີຈຳນວນ 330.052 ເທື່ອຄົນ ສະເລ່ຍ 28.68% ສຳຫຼັບນັກທ່ອງທ່ຽວທີ່ໃຊ້ບັດຜ່ານແດນ (BORDER PASS) ມີຈຳນວນທັງໝົດ 235,926 ເທື່ອຄົນ ສ່ວນຫຼາຍເປັນນັກທ່ອງທ່ຽວມາຈາກປະເທດໄທ ຈຳນວນ 192,349 ເທື່ອຄົນ ສະເລ່ຍ 81.53% ຂອງນັກທ່ອງທ່ຽວທີ່ໃຊ້ບັດຜ່ານແດນທັງໝົດ ແລະ ສ່ວນຫຼາຍເປັນນັກທ່ອງທ່ຽວລາຍວັນ ແລະ ພັກເຊົາຊົ່ວຄາວ ທີ່ໃຊ້ບໍລິການຕາມສະຖານທີ່ພັກແຮມຕ່າງໆ.

ຈາກການເຂົ້າມາຂອງນັກທ່ອງທ່ຽວທັງໝົດ ມີພຶດຕິກຳໄລຍະການພັກແຮມ ສະເລ່ຍ 5.84 ວັນ, ມີຄ່າໃຊ້ຈ່າຍສະເລ່ຍ 63.97 ໂດລາ/ຄົນ/ວັນ ໂດຍນັກທ່ອງທ່ຽວສາກົນຈະມີໄລຍະເວລາພັກເຊົາດົນກວ່ານັກທ່ອງທ່ຽວຊາຍແດນ ເນື່ອງຈາກການເດີນທາງໄລຍະໄກ ໄລຍະເວລາພັກເຊົາສະເລ່ຍ 9.67 ວັນ, ມີຄ່າໃຊ້ຈ່າຍສະເລ່ຍ 98.63 ໂດລາ/ຄົນ/ວັນ, ຖືວ່າເປັນກຸ່ມນັກທ່ອງທ່ຽວທີ່ສ້າງລາຍໄດ້ຫຼັກໃຫ້ກັບການທ່ອງທ່ຽວຂອງ ສປປ ລາວ. ສຳລັບນັກທ່ອງທ່ຽວຊາຍແດນ ທີ່ໃຊ້ໜັງສືຜ່ານແດນ ເດີນທາງມາຈາກ ປະເທດ ໄທ, ສສ ຫວຽດນາມ, ສປ ຈີນ, ກຳປູເຈຍ ແລະ ມຽນມາ ຈະມີໄລຍະເວລາພັກເຊົາຢູ່ໃນ ສປປ ລາວ ປະມານ 3 ວັນ, ມີຄ່າໃຊ້ຈ່າຍສະເລ່ຍປະມານ 30-52 ໂດລາ/ຄົນ/ວັນ. ແຕ່ສຳລັບນັກທ່ອງທ່ຽວທີ່ໃຊ້ບັດຜ່ານແດນ ຈະຢູ່ໃນ ສປປ ລາວ ປະມານ 1-2 ວັນ ແລະ ໃຊ້ຈ່າຍໜ້ອຍກວ່າກຸ່ມອື່ນໆ ປະມານ 12-20 ໂດລາ/ຄົນ/ວັນ.

ເປົ້າໝາຍໃນການເດີນທາງຂອງນັກທ່ອງທ່ຽວສາກົນໃນປີ 2022 ໂດຍສ່ວນຫຼາຍແລ້ວ ເດີນທາງເຂົ້າມາເພື່ອການທ່ອງທ່ຽວມີຈຳນວນ 1,216,703 ເທື່ອຄົນ, ສະເລ່ຍ 94% ຖ້າທຽບໃສ່ປີ 2019 ແມ່ນມີ 83.70%, ສຳລັບນັກທ່ອງທ່ຽວທີ່ເດີນທາງເຂົ້າມາ ໃນນາມ ທຸລະກິດ ຈຳນວນ 38,831 ເທື່ອຄົນ, ສະເລ່ຍ 3%. ທຽບກັບປີ 2019 ແລ້ວແມ່ນສະເລ່ຍ 6%; ການເດີນທາງເພື່ອມາຢ້ຽມຢາມຄອບຄົວ ມີຈຳນວນ 16,827 ເທື່ອຄົນ, ສະເລ່ຍ 1.3% ເທົ່າກັບປີ 2021 ແມ່ນ 1.3%. ແຕ່ເປັນຈຸດທີ່ໜ້າສັງເກດວ່າ ນັກທ່ອງທ່ຽວທີ່ເຂົ້າມາເພື່ອທັດສະນະສຶກສາ ໃນປີ 2019 ມີຈຳນວນ 301,837 ຄົນ ແມ່ນຍັງບໍ່ທັນປາກົດຂຶ້ນໃນປີ 2022. ໃນຂະນະທີ່ປີ 2022 ເປັນຊ່ວງເວລາທີ່ມີການເປີດປະເທດ ແຕ່ການເດີນທາງບໍ່ຫຼາຍວັນປານໃດ ແລະ ຫຼາຍປະເທດກໍຍັງມີມາດຕະການຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່. ສຳລັບການເດີນທາງເປັນກຸ່ມເພື່ອມາທັດສະນະສຶກສາ ອາດຈະມີຄວາມສ່ຽງໃນການຕິດເຊື້ອຈາກການແຜ່ລະບາດຂອງພະຍາດໂຄວິດ-19 ຈຶ່ງເຮັດໃຫ້ນັກທ່ອງທ່ຽວກຸ່ມນີ້ ຍັງບໍ່ທັນເຂົ້າມາໃນປີ 2022.

ການເດີນທາງເຂົ້າ ສປປ ລາວ ຂອງນັກທ່ອງທ່ຽວຕ່າງປະເທດທີ່ເດີນທາງດ້ວຍເຮືອບິນ ຈຳນວນ 578,581 ຄົນ, ສະເລ່ຍ 44.7%, ຖ້າທຽບກັບປີ 2018 ສະເລ່ຍ 14.6% ແລະ ປີ 2019 ສະເລ່ຍ 45.49%. ສາເຫດທີ່ມີນັກທ່ອງທ່ຽວເດີນທາງດ້ວຍເຮືອບິນເພີ່ມຂຶ້ນຜ່ານມາ ແມ່ນຍ້ອນເປີດເສັ້ນທາງບິນໃໝ່ ເພື່ອຮອງຮັບນັກທ່ອງທ່ຽວຈາກ ສປ ຈີນ ແລະ ສ. ເກົາຫຼີ ເຂົ້າມາໃນ ສປປ ລາວ. ແຕ່ໃນປີ 2022 ການເດີນທາງ ທາງອາກາດຍັງບໍ່ທັນມີນັກທ່ອງທ່ຽວຈາກ ສປ ຈີນ ຍ້ອນວ່າຍັງບໍ່ອະນຸຍາດໃຫ້ນັກທ່ອງທ່ຽວຈາກຈີນເດີນທາງອອກປະເທດໄດ້ ແຕ່ກໍຍັງມີສາຍການບິນຈາກປະເທດ ໄທ, ສສ ຫວຽດນາມ, ສ. ເກົາຫຼີ ເພື່ອຮອງຮັບການເຊື່ອມຕໍ່ຖ້ຽວບິນຈາກປະເທດເຫຼົ່ານີ້ມາທີ່ ສປປ ລາວ. ສຳລັບການເດີນທາງ ທາງບົກ ສ່ວນຫຼາຍຈະເປັນການເດີນທາງຂອງນັກທ່ອງທ່ຽວພາກພື້ນໃກ້ຄຽງ ມີຈຳນວນ 715,784 ເທື່ອຄົນ ສະເລ່ຍ 55.3%.

## ຕາຕະລາງທີ 6: ຈຳນວນນັກທ່ອງທ່ຽວຕາມແຕ່ລະປະເພດ ປີ 2022

| ປະເພດ | ບັດຜ່ານແດນ | | ບັດຜ່ານແດນ | ໜັງສືຜ່ານແດນ | ລວມທັງໝົດ |
|---|---|---|---|---|---|
| | ນັກທ່ອງທ່ຽວລາຍວັນ | ນັກທ່ອງທ່ຽວຄ້າງຄືນ | | | |
| | 2022 | | 2022 | 2022 | 2022 |
| **ລວມທັງໝົດ** | **91,704** | **144,222** | **235,926** | **1,058,439** | **1,294,365** |
| **ນັກທ່ອງທ່ຽວສາກົນ** | | | | **143,426** | **143,426** |
| **ນັກທ່ອງທ່ຽວຊາຍແດນ ຫຼື ພາກພື້ນ** | **91,704** | **144,222** | **235,926** | **915,013** | **1,150,939** |
| ໄທ | 76,940 | 115,409 | 192,349 | 539,405 | 731,754 |
| ຫວຽດນາມ | 9,898 | 20,095 | 29,993 | 330,052 | 360,045 |
| ຈີນ | 3,217 | 6,244 | 9,461 | 35,788 | 45,249 |
| ກຳປູເຈຍ | 1,649 | 2,474 | 4,123 | 7,420 | 11,543 |
| ມຽນມາ | - | - | - | 2,348 | 2,348 |

## ຕາຕະລາງທີ 7: ລາຍຮັບຈາກການທ່ອງທ່ຽວຕ່າງປະເທດໃນປີ 2022

| ປະເພດນັກທ່ອງທ່ຽວ | ຈຳນວນນັກທ່ອງທ່ຽວທັງໝົດ (ຄົນ) | ໄລຍະພັກເຊົາສະເລ່ຍ (ມື້) | ກຳນົດການໃຊ້ຈ່າຍໂດຍສະເລ່ຍ ຕໍ່ຄົນ ຕໍ່ມື້ (ໂດລາສະຫະລັດ) | ລາຍຮັບຈາກການທ່ອງທ່ຽວໃນປີ 2022 (ໂດລາສະຫະລັດ) |
|---|---|---|---|---|
| **ລວມທັງໝົດ** | **1,294,365** | **5.84** | **63.97** | **264,511,231** |
| **ນັກທ່ອງທ່ຽວສາກົນ** | **143,426** | **9.67** | **98.63** | **136,792,849** |
| **ນັກທ່ອງທ່ຽວຊາຍແດນ ຫຼື ພາກພື້ນ** | **1,150,939** | | | **127,718,383** |
| ໄທ (ໜັງສືຜ່ານແດນ ຫຼື ປັດສະປໍ) | 539,405 | 3 | 52 | 84,147,176 |
| ໄທ (ບັດຜ່ານແດນ) | 192,349 | 1 | 20 | 3,846,981 |
| ຫວຽດນາມ (ໜັງສືຜ່ານແດນ ຫຼື ປັດສະປໍ) | 330,052 | 3 | 30 | 29,704,680 |
| ຫວຽດນາມ (ນັກທ່ອງທ່ຽວລາຍວັນ) | 29,993 | 1 | 12 | 359,916 |
| ຈີນ (ໜັງສືຜ່ານແດນ ຫຼື ປັດສະປໍ) | 35,788 | 3 | 80 | 8,589,120 |
| ຈີນ (ນັກທ່ອງທ່ຽວລາຍວັນ) | 9,461 | 1 | 15 | 141,915 |
| ກຳປູເຈຍ (ໜັງສືຜ່ານແດນ ຫຼື ປັດສະປໍ) | 7,420 | 3 | 30 | 667,800 |
| ກຳປູເຈຍ (ນັກທ່ອງທ່ຽວລາຍວັນ) | 4,123 | 1 | 12 | 49,476 |
| ມຽນມາ (ໜັງສືຜ່ານແດນ ຫຼື ປັດສະປໍ) | 2,348 | 3 | 30 | 211,320 |
| ມຽນມາ (ນັກທ່ອງທ່ຽວລາຍວັນ) | - | 1 | 12 | - |

### ຕາຕະລາງທີ 8: ລັກສະນະເດີນທາງຂອງນັກທ່ອງທ່ຽວຕ່າງປະເທດ ແລະ ຈຸດປະສົງຂອງການທ່ອງທ່ຽວ ແຕ່ປີ 2016-2022

| ປີ | 2016 | 2017 | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|---|---|
| **ລວມທັງໝົດ** | **4,239,047** | **3,868,838** | **4,186,432** | **4,791,065** | **-** | **-** | **1,294,365** |
| **ຮູບແບບການເດີນທາງ** | | | | | | | |
| ທາງອາກາດ | 578,925 | 520,176 | 612,967 | 1,906,844 | - | - | 578,581 |
| ທາງບົກ | 3,660,122 | 3,348,662 | 3,573,465 | 2,884,221 | - | - | 715,784 |
| **ຈຸດປະສົງຂອງການຢ້ຽມຢາມ** | | | | | | | |
| ທຸລະກິດ | 373,036 | 479,735 | 309,796 | 287,464 | - | - | 38,831 |
| ທ່ອງທ່ຽວ | 3,403,955 | 2,816,509 | 3,391,010 | 4,010,121 | - | - | 1,216,703 |
| ຢ້ຽມຢາມຄອບຄົວ | 178,039 | 352,064 | 138,152 | 62,284 | - | - | 16,827 |
| ທາງການ, ກອງປະຊຸມ ແລະ ສຳມະນາ | 93,259 | 81,245 | 58,610 | 100,612 | - | - | 5,177 |
| ທັດສະນະສຶກສາ | | 61,902 | 121,407 | 301,837 | - | - | - |
| ທາງຜ່ານ | | 11,606 | 20,932 | - | - | - | 2,589 |
| ອື່ນໆ | 190,758 | 65,777 | 146,525 | 28,746 | - | - | 12,944 |

## ນັກທ່ອງທ່ຽວຈາກຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ

ນັກທ່ອງທ່ຽວທີ່ເດີນທາງເຂົ້າມາຢ້ຽມຢາມ ສປປ ລາວ ສ່ວນຫຼາຍມາຈາກປະເທດ ໄທ, ສສ ຫວຽດນາມ, ສປ ຈີນ, ກຳປູເຈຍ, ສ. ເກົາຫຼີ, ອາເມລິກາ, ແລະ ຝຣັ່ງ. ໃນນີ້ນັກທ່ອງທ່ຽວຈາກພາກພື້ນອາຊີ ຫຼາຍທີ່ສຸດ ເນື່ອງຈາກການເດີນທາງເຂົ້າມາສະດວກ, ມີຊາຍແດນຕິດຈອດກັນ ແລະ ມີສາຍການບິນໂດຍກົງເຂົ້າມາ ສປປ ລາວ.

ນັກທ່ອງທ່ຽວຈາກປະເທດໄທ ເປັນອັນດັບທີ່ໜຶ່ງທີ່ເຂົ້າມາທ່ຽວ ສປປ ລາວ ຫຼາຍທີ່ສຸດ ໃນປີ 2022, ມີຈຳນວນທັງໝົດ 731,754 ເທື່ອຄົນ, ສະເລ່ຍ 56.53%. ເນື່ອງຈາກວ່າມີຄວາມສະດວກໃນການເດີນທາງ, ພາສາ, ວັດທະ ນະທຳທີ່ມີຄວາມຄ້າຍຄືກັນ, ນັກທ່ອງທ່ຽວບໍ່ຈຳເປັນຕ້ອງປັບຕົວຫຼາຍ ແລະ ຄຸ້ມຄ່າໃນການໃຊ້ຈ່າຍສຳລັບການທ່ອງ ທ່ຽວ. ອັນດັບສອງ ນັກທ່ອງທ່ຽວຈາກ ສສ ຫວຽດນາມ ມີຈຳນວນທັງໝົດ 360,045 ເທື່ອຄົນ, ສະເລ່ຍ 27.82% ຊຶ່ງ ສສ ຫວຽດນາມກໍເປັນປະເທດໜຶ່ງ ທີ່ມີຊາຍແດນຕິດກັບທິດຕາເວັນອອກຂອງ ສປປ ລາວ ແລະ ໄດ້ມີການເດີນທາງ ເຂົ້າ-ອອກ ປະເທດຢ່າງຕໍ່ເນື່ອງ, ເຮັດໃຫ້ມີຈຳນວນນັກທ່ອງທ່ຽວເຂົ້າມາໃນ ສປປ ລາວ ເປັນຈຳນວນຫຼວງຫຼາຍ ແລະ ຍັງມີປະຊາຊົນລາວຈຳນວນໜຶ່ງທີ່ສາມາດສື່ສານພາສາຫວຽດນາມໄດ້ ເຮັດໃຫ້ມີຄວາມສະດວກໃນການເດີນທາງ. ອັນດັບທີ່ສາມ ແມ່ນນັກທ່ອງທ່ຽວຈາກ ສປ ຈີນ, ເຖິງວ່າໃນປີ 2022 ສປ ຈີນ ຍັງບໍ່ທັນເປີດປະເທດ ແລະ ບໍ່ສາມາດເຂົ້າ-ອອກປະເທດໄດ້, ແຕ່ນັກທ່ອງທ່ຽວຈາກ ສປ ຈີນ ທີ່ເຂົ້າມາໃນ ສປປ ລາວ ເປັນນັກທ່ອງທ່ຽວທີ່ເຂົ້າມາຕໍ່ວີຊາ ຫຼື ເຂົ້າມາຜ່ານ ສປປ ລາວ ເພື່ອເດີນທາງໄປຍັງປະເທດອື່ນ ຈຶ່ງເຮັດໃຫ້ມີນັກທ່ອງທ່ຽວຂອງ ສປ ຈີນ ມີຈຳນວນທັງໝົດ 45,249 ເທື່ອຄົນ, ສະເລ່ຍ 3.50%.

ໃນປີ 2022 ມີນັກທ່ອງທ່ຽວເຂົ້າມາໃນ ສປປ ລາວ ທັງໝົດ 1,294,365 ເທື່ອຄົນ, ສະເລ່ຍ 27.01% ຂອງຈຳນວນນັກທ່ອງທ່ຽວທັງໝົດໃນປີ 2019. ຖ້າຫາກວິເຄາະຈາກການຟື້ນຟູຂອງການທ່ອງທ່ຽວໃນປະເທດ ເຫັນໄດ້ວ່ານັກທ່ອງທ່ຽວຈາກປະເທດໄທເປັນກຸ່ມນັກທ່ອງທ່ຽວທີ່ສຳຄັນ, ນັກທ່ອງທ່ຽວໄທທີ່ກັບມາທ່ອງທ່ຽວຄືນ ແມ່ນມີປະມານ 33.87%, ສສ ຫວຽດນາມ ມີປະມານ 38.92% ຊຶ່ງຖືວ່າເປັນອັດຕາສ່ວນທີ່ຂ້ອນຂ້າງສູງ ເມື່ອທຽບໃສ່ກັບຈຳນວນນັກ

ທ່ອງທ່ຽວທັງໝົດ ສຳລັບນັກທ່ອງທ່ຽວ ສປ ຈີນ ທີ່ກັບມາທ່ອງທ່ຽວຄືນ ມີປະມານ 4.42% ເນື່ອງຈາກວ່າ ສປ ຈີນ ຍັງບໍ່ ທັນເປີດປະເທດໃນປີ 2022.

ຖ້າວິເຄາະການກັບຄືນມາ ຂອງນັກທ່ອງທ່ຽວ ໃນແຕ່ລະພາກພື້ນ, ຈາກພາກພື້ນອາຊຽນກັບຄືນມາທ່ຽວ 35.14%, ອາຊີ ແລະ ປາຊີຟິກ 7.08%, ເອີຣົບ 25.60%, ອາເມລິກາ 30.77% ແລະ ອາຟຣິກາ ແລະ ຕາເວັນອອກກາງ 46.91%. ຂໍ້ສັງເກດທີ່ຄວນເອົາໃຈໃສ່ແມ່ນ ນັກທ່ອງທ່ຽວຈາກເອີຣົບ ເປັນກຸ່ມທີ່ມີກຳລັງໃນການໃຊ້ຈ່າຍສູງ, ພັກເຊົາຢູ່ໃນ ສປປ ລາວ ໄລຍະເວລາຍາວ ແລະ ກັບຄືນມາທ່ຽວ ສປປ ລາວ ຂ້ອນຂ້າງໄວ ນັບແຕ່ ສປປ ລາວ ເປີດປະເທດ ເຕັມຮູບແບບ ໃນວັນທີ 9 ພຶດສະພາ 2022 ເປັນຕົ້ນມາ ເປັນເວລາ 8 ເດືອນ. ເນື່ອງຈາກວ່າ ສປປ ລາວ ເປັນໜຶ່ງໃນເປົ້າໝາຍການເດີນທາງຂອງຄົນເອີຣົບ ທີ່ຕ້ອງການມາທ່ຽວຊົມທຳມະຊາດ ແລະ ວັດທະນະທຳທີ່ງຽບສະຫງົບ.

ນັກທ່ອງທ່ຽວກຸ່ມທຳອິດທີ່ກັບຄືນເຂົ້າມາ ແມ່ນນັກທ່ອງທ່ຽວຈາກປະເທດໄທ ໂດຍເລີ່ມເຂົ້າມາເລີ່ມແຕ່ເດືອນມິຖຸນາ ປີ 2022, ເນື່ອງຈາກມີກະແສຄວາມຕ້ອງການທົດລອງມາໃຊ້ບໍລິການ ລົດໄຟຄວາມໄວສູງ ລາວ-ຈີນ ເຮັດໃຫ້ມີນັກທ່ອງທ່ຽວ ຈຳນວນ 114,451 ເທື່ອຄົນ, ເດືອນກໍລະກົດ ຈຳນວນຫລຸດລົງ 77,463 ເທື່ອຄົນ, ເດືອນສິງຫາ ຄ່ອຍໆເພີ່ມຂຶ້ນຈົນຮອດເດືອນທັນວາ ເຊິ່ງເປັນລະດູການການທ່ອງທ່ຽວ. ເນື່ອງຈາກວ່າ ໄລຍະທ້າຍປີແມ່ນອາກາດທີ່ເຢັນ ເຮັດໃຫ້ການທ່ອງທ່ຽວມີຄວາມສະດວກຫຼາຍຂຶ້ນ. ສຳລັບນັກທ່ອງທ່ຽວຈາກປະເທດຫວຽດນາມ ເຫັນວ່າເຂົ້າມາທ່ອງທ່ຽວໃນ ສປປ ລາວ ຂ້ອນຂ້າງສະໝໍ່າສະເໝີ ປະມານ 40,000-50,000 ເທື່ອຄົນ/ເດືອນ. ສຳລັບນັກທ່ອງທ່ຽວໃນພາກພື້ນເອີຣົບ ສ່ວນຫຼາຍທ່ອງທ່ຽວຕາມລະດູການຢ່າງຊັດເຈນ, ໂດຍຈະເຂົ້າມາຢ້ຽມຢາມ ສປປ ລາວ ໃນໄລຍະເດືອນ ຕຸລາເປັນຕົ້ນໄປ ຈົນ ໝົດລະດູໜາວ ເນື່ອງຈາກສະພາບອາກາດໃນ ສປປ ລາວ ມີອາກາດທີ່ອົບອຸ່ນກວ່າເອີຣົບ ແລະ ບໍ່ຮ້ອນຈົນເກີນໄປເໝາະແກ່ການທ່ອງທ່ຽວ.

ເຖິງຢ່າງໃດກໍຕາມ, ເນື່ອງຈາກ ສປປ ລາວ ມີນັກທ່ອງທ່ຽວທີ່ມາຈາກຫຼາຍພາກພື້ນ ເຊິ່ງສະລັບກັນເຂົ້າມາຢ້ຽມຢາມໃນແຕ່ລະໄລຍະ. ຖ້າຫາກວິເຄາະການເຂົ້າມາຂອງນັກທ່ອງທ່ຽວເປັນໄຕມາດ ຫຼື ລາຍເດືອນ ຍ້ອນຫຼັງ ຈະເຫັນວ່າ ຈຳນວນຂອງນັກທ່ອງທ່ຽວໃນແຕ່ລະໄຕມາດ ມີຄວາມໃກ້ຄຽງກັນ ຕັ້ງແຕ່ປີ 2015 ຈົນເຖິງ 2019. ສັງເກດເຫັນວ່າໃນໄລຍະໄຕມາດທີ 3 ຂອງແຕ່ລະປີ ຈຳນວນນັກທ່ອງທ່ຽວຈະຫຼຸດລົງເລັກນ້ອຍ ເນື່ອງຈາກເປັນໄລຍະລະດູຝົນ ການເດີນທາງບໍ່ສະດວກ. ຖ້າປຽບທຽບກັບປີ 2022, ເຫັນວ່າການເດີນທາງ 6 ເດືອນທ້າຍປີ ແມ່ນຄ້າຍຄືກັບໄລຍະກ່ອນການເກີດພະຍາດໂຄວິດ-19. ເມື່ອປຽບທຽບແບບເດືອນຕໍ່ເດືອນ ໃນໄລຍະເດືອນ ຕຸລາ ປີ 2022 ມີນັກທ່ອງທ່ຽວເຂົ້າມາໃນປະເທດ 211,000 ເທື່ອຄົນ ທຽບກັບເດືອນ ຕຸລາ ຂອງປີ 2019 ສະເລ່ຍ 51.00%, ເດືອນ ພະຈິກ ມີນັກທ່ອງທ່ຽວ 228,550 ເທື່ອຄົນ ສະເລ່ຍ 48.25% ແລະ ເດືອນ ທັນວາ ມີນັກທ່ອງທ່ຽວ 205,658 ເທື່ອຄົນ ສະເລ່ຍ 44.9%. ສະແດງໃຫ້ເຫັນວ່າ ແນວໂນ້ມຂອງການທ່ອງທ່ຽວກຳລັງຟື້ນຕົວຢ່າງຕໍ່ເນື່ອງ ເມື່ອທຽບກັບຄ່າສະເລ່ຍໝົດປີ 27.01%.

## ຕາຕະລາງທີ 9: ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ແບ່ງຕາມແຕ່ລະສັນຊາດ (ອັດຕາເພີ່ມຂຶ້ນເປັນເປີເຊັນ) ແຕ່ປີ 2017–2022

| ປະເທດ / ປີ | 2017 | 2018 | 2019 | 2020 | % ∇ | 2021 | 2022 | %∇ 22/19 |
|---|---|---|---|---|---|---|---|---|
| **ລວມທັງໝົດ** | **3,868,838** | **4,186,432** | **4,791,065** | **886,447** | **-81.5** | **-** | **1,294,365** | **-73** |
| **ອາຊຽນ** | **2,747,096** | **2,886,844** | **3,198,829** | **555,519** | **-83** | **-** | **1,124,376** | **-65** |
| ບຣູນາຍ | 342 | 278 | 389 | 103 | -74 | - | 172 | **-56** |
| ກຳປູເຈຍ | 15,108 | 18,908 | 28,342 | 5,012 | -82 | - | 11,543 | **-59** |
| ອິນໂດເນເຊຍ | 3,241 | 3,487 | 5,161 | 1,217 | -76 | - | 2,134 | **-59** |
| ມາເລເຊຍ | 19,114 | 26,002 | 28,321 | 5,800 | -80 | - | 6,382 | **-77** |
| ມຽນມາ | 2,848 | 22,132 | 22,524 | 1,417 | -94 | - | 2,348 | **-90** |
| ຟີລິບປິນ | 10,168 | 10,826 | 17,187 | 3,679 | -79 | - | 4,986 | **-71** |
| ສິງກະໂປ | 6,829 | 7,692 | 11,730 | 2,008 | -83 | - | 5,012 | **-57** |
| ໄທ | 1,797,803 | 1,929,934 | 2,160,300 | 350,103 | -84 | - | 731,754 | **-66** |
| ຫວຽດນາມ | 891,643 | 867,585 | 924,875 | 186,180 | -80 | - | 360,045 | **-61** |
| **ອາຊີ ແລະ ປາຊີຟິກ** | **884,875** | **1,055,415** | **1,317,478** | **226,297** | **-83** | **-** | **93,297** | **-93** |
| ອົດສະຕຣາລີ | 20,886 | 19,607 | 24,750 | 7,271 | -71 | - | 6,501 | **-74** |
| ຈີນ | 639,185 | 805,833 | 1,022,727 | 138,466 | -86 | - | 45,249 | **-96** |
| ອິນເດຍ | 4,343 | 4,864 | 8,152 | 1,743 | -79 | - | 3,568 | **-56** |
| ຍີ່ປຸ່ນ | 32,064 | 38,985 | 41,736 | 11,085 | -73 | - | 6,848 | **-84** |
| ເກົາຫລີໃຕ້ | 170,571 | 174,405 | 203,191 | 40,210 | -80 | - | 26,008 | **-87** |
| ນິວຊີແລນ | 3,202 | 3,460 | 3,965 | 1,226 | -69 | - | 864 | **-78** |
| ໄຕ້ຫວັນ | 4,329 | 4,823 | 6,956 | 1,714 | -75 | - | 1,514 | **-78** |
| ອື່ນໆ | 10,295 | 3,438 | 6,001 | 24,582 | 310 | - | 2,745 | **-54** |
| **ເອີຣົບ** | **161,194** | **165,808** | **182,465** | **70,459** | **-61** | **-** | **46,729** | **-74** |
| ໂອຕຼິດ | 2,874 | 3,237 | 3,320 | 1,250 | -62 | - | 568 | **-83** |
| ແບນຊິກ | 4,371 | 5,322 | 6,099 | 1,970 | -68 | - | 1,492 | **-76** |
| ເດນມາກ | 3,198 | 3,892 | 3,134 | 1,591 | -49 | - | 985 | **-69** |
| ແຟງລັງ | 2,023 | 2,287 | 1,719 | 780 | -55 | - | 454 | **-74** |
| ຝຣັ່ງ | 36,760 | 39,315 | 44,416 | 15,509 | -65 | - | 10,355 | **-77** |
| ເຢຍລະມັນ | 23,776 | 22,915 | 25,346 | 8,632 | -66 | - | 6,077 | **-76** |
| ເກຼັກ | 481 | 520 | 586 | 246 | -58 | - | 128 | **-78** |
| ອີຕາລີ | 7,537 | 6,198 | 7,330 | 2,751 | -62 | - | 1,320 | **-82** |
| ໂຮນລັງ | 5,500 | 7,804 | 8,877 | 2,287 | -74 | - | 2,564 | **-71** |
| ນອກແວ | 2,334 | 2,913 | 2,248 | 874 | -61 | - | 500 | **-78** |
| ລັດເຊຍ | 10,986 | 8,963 | 12,054 | 3,144 | -74 | - | 4,410 | **-63** |
| ແອດສະປາຍ | 4,589 | 5,309 | 6,157 | 1,476 | -76 | - | 1,416 | **-77** |
| ຊູແອັດ | 3,483 | 4,802 | 3,475 | 1,419 | -59 | - | 767 | **-78** |
| ສະວິດສະແລນ | 7,956 | 9,749 | 8,512 | 2,921 | -66 | - | 1,537 | **-82** |
| ອັງກິດ | 27,723 | 26,801 | 31,976 | 11,592 | -64 | - | 8,664 | **-73** |
| ອື່ນໆ | 17,603 | 15,781 | 17,216 | 14,017 | -19 | - | 5,492 | **-68** |
| **ອາເມລິກາ** | **64,227** | **69,101** | **82,652** | **30,176** | **-63** | **-** | **25,440** | **-69** |
| ການາດາ | 13,467 | 10,759 | 12,873 | 4,638 | -64 | - | 2,974 | **-77** |
| ສະຫະລັດອາເມລິກາ | 38,765 | 49,178 | 61,184 | 18,116 | -70 | - | 18,447 | **-70** |
| ອື່ນໆ | 11,995 | 9,164 | 8,595 | 7,422 | -14 | - | 4,019 | **-53** |
| **ອາຟຣິກາ ແລະ ຕາເວັນອອກກາງ** | **11,446** | **9,264** | **9,641** | **3,996** | **-59** | **-** | **4,523** | **-53** |
| ອິດສະຣາແອນ | 2,128 | 2,997 | 4,041 | 1,664 | -59 | - | 1,170 | **-71** |
| ອື່ນໆ | 9,318 | 6,267 | 5,600 | 2,332 | -58 | - | 3,353 | **-40** |

# ຕາຕະລາງທີ 10: ນັກທ່ອງທ່ຽວແບ່ງຕາມແຕ່ລະສັນຊາດ (ອັດຕາສ່ວນແບ່ງຕະຫຼາດ) ແຕ່ປີ 2017-2022

| ປະເທດ / ປີ | 2017 | | 2018 | | 2019 | | 2020 | | 2021 | 2022 | |
|---|---|---|---|---|---|---|---|---|---|---|---|
| **ລວມທັງໝົດ** | **3,868,838** | **100%** | **4,186,432** | **100%** | **4,791,065** | **100%** | **886,447** | **100%** | **-** | **1,294,365** | **100%** |
| **ອາຊຽນ** | **2,747,096** | **71.01** | **2,886,844** | **68.96** | **3,198,829** | **66.77** | **555,519** | **62.67** | **-** | **1,124,376** | **86.87** |
| ບຣູໄນ | 342 | 0.01 | 278 | 0.01 | 389 | 0.01 | 103 | 0.01 | - | 172 | 0.01 |
| ກຳປູເຈຍ | 15,108 | 0.39 | 18,908 | 0.45 | 28,342 | 0.59 | 5,012 | 0.57 | - | 11,543 | 0.89 |
| ອິນໂດເນເຊຍ | 3,241 | 0.08 | 3,487 | 0.08 | 5,161 | 0.11 | 1,217 | 0.14 | - | 2,134 | 0.16 |
| ມາເລເຊຍ | 19,114 | 0.49 | 26,002 | 0.62 | 28,321 | 0.59 | 5,800 | 0.65 | - | 6,382 | 0.49 |
| ມຽນມາ | 2,848 | 0.07 | 22,132 | 0.53 | 22,524 | 0.47 | 1,417 | 0.16 | - | 2,348 | 0.18 |
| ຟີລິບປິນ | 10,168 | 0.26 | 10,826 | 0.26 | 17,187 | 0.36 | 3,679 | 0.42 | - | 4,986 | 0.39 |
| ສິງກະໂປ | 6,829 | 0.18 | 7,692 | 0.18 | 11,730 | 0.24 | 2,008 | 0.23 | - | 5,012 | 0.39 |
| ໄທ | 1,797,803 | 46.47 | 1,929,934 | 46.10 | 2,160,300 | 45.09 | 350,103 | 39.50 | - | 731,754 | 56.53 |
| ຫວຽດນາມ | 891,643 | 23.05 | 867,585 | 20.72 | 924,875 | 19.30 | 186,180 | 21.00 | - | 360,045 | 27.82 |
| **ອາຊີ ແລະ ປາຊີຟິກ** | **884,875** | **22.87** | **1,055,415** | **25.21** | **1,317,478** | **27.50** | **226,297** | **25.53** | **-** | **93,297** | **7.21** |
| ອົດສະຕຣາລີ | 20,886 | 0.54 | 19,607 | 0.47 | 24,750 | 0.52 | 7,271 | 0.82 | - | 6,501 | 0.50 |
| ຈີນ | 639,185 | 16.52 | 805,833 | 19.25 | 1,022,727 | 21.35 | 138,466 | 15.62 | - | 45,249 | 3.50 |
| ອິນເດຍ | 4,343 | 0.11 | 4,864 | 0.12 | 8,152 | 0.17 | 1,743 | 0.20 | - | 3,568 | 0.28 |
| ຍີ່ປຸ່ນ | 32,064 | 0.83 | 38,985 | 0.93 | 41,736 | 0.87 | 11,085 | 1.25 | - | 6,848 | 0.53 |
| ເກົາຫລີໃຕ້ | 170,571 | 4.41 | 174,405 | 4.17 | 203,191 | 4.24 | 40,210 | 4.54 | - | 26,008 | 2.01 |
| ນິວຊີແລນ | 3,202 | 0.08 | 3,460 | 0.08 | 3,965 | 0.08 | 1,226 | 0.14 | - | 864 | 0.07 |
| ໄຕ້ຫວັນ | 4,329 | 0.11 | 4,823 | 0.12 | 6,956 | 0.15 | 1,714 | 0.19 | - | 1,514 | 0.12 |
| ອື່ນໆ | 10,295 | 0.27 | 3,438 | 0.08 | 6,001 | 0.13 | 24,582 | 2.77 | - | 2,745 | 0.21 |
| **ເອີຣົບ** | **161,194** | **4.17** | **165,808** | **3.96** | **182,465** | **3.81** | **70,459** | **7.95** | **-** | **46,729** | **3.61** |
| ໂອຕຼິດ | 2,874 | 0.07 | 3,237 | 0.08 | 3,320 | 0.07 | 1,250 | 0.14 | - | 568 | 0.04 |
| ແບນຊິກ | 4,371 | 0.11 | 5,322 | 0.13 | 6,099 | 0.13 | 1,970 | 0.22 | - | 1,492 | 0.12 |
| ເດນມາກ | 3,198 | 0.08 | 3,892 | 0.09 | 3,134 | 0.07 | 1,591 | 0.18 | - | 985 | 0.08 |
| ແຟງລັງ | 2,023 | 0.05 | 2,287 | 0.05 | 1,719 | 0.04 | 780 | 0.09 | - | 454 | 0.04 |
| ຝຣັ່ງ | 36,760 | 0.95 | 39,315 | 0.94 | 44,416 | 0.93 | 15,509 | 1.75 | - | 10,355 | 0.80 |
| ເຢຍລະມັນ | 23,776 | 0.61 | 22,915 | 0.55 | 25,346 | 0.53 | 8,632 | 0.97 | - | 6,077 | 0.47 |
| ເກຼັກ | 481 | 0.01 | 520 | 0.01 | 586 | 0.01 | 246 | 0.03 | - | 128 | 0.01 |
| ອີຕາລີ | 7,537 | 0.19 | 6,198 | 0.15 | 7,330 | 0.15 | 2,751 | 0.31 | - | 1,320 | 0.10 |
| ໂຮນລັງ | 5,500 | 0.14 | 7,804 | 0.19 | 8,877 | 0.19 | 2,287 | 0.26 | - | 2,564 | 0.20 |
| ນອກແວ | 2,334 | 0.06 | 2,913 | 0.07 | 2,248 | 0.05 | 874 | 0.10 | - | 500 | 0.04 |
| ລັດເຊຍ | 10,986 | 0.28 | 8,963 | 0.21 | 12,054 | 0.25 | 3,144 | 0.35 | - | 4,410 | 0.34 |
| ແອດສະປາຍ | 4,589 | 0.12 | 5,309 | 0.13 | 6,157 | 0.13 | 1,476 | 0.17 | - | 1,416 | 0.11 |
| ຊູແອັດ | 3,483 | 0.09 | 4,802 | 0.11 | 3,475 | 0.07 | 1,419 | 0.16 | - | 767 | 0.06 |
| ສະວິດສະແລນ | 7,956 | 0.21 | 9,749 | 0.23 | 8,512 | 0.18 | 2,921 | 0.33 | - | 1,537 | 0.12 |
| ອັງກິດ | 27,723 | 0.72 | 26,801 | 0.64 | 31,976 | 0.67 | 11,592 | 1.31 | - | 8,664 | 0.67 |
| ອື່ນໆ | 17,603 | 0.45 | 15,781 | 0.38 | 17,216 | 0.36 | 14,017 | 1.58 | - | 5,492 | 0.42 |
| **ອາເມລິກາ** | **64,227** | **1.66** | **69,101** | **1.65** | **82,652** | **1.73** | **30,176** | **3.40** | **-** | **25,440** | **1.97** |
| ການາດາ | 13,467 | 0.35 | 10,759 | 0.26 | 12,873 | 0.27 | 4,638 | 0.52 | - | 2,974 | 0.23 |
| ສະຫະລັດອາເມລິກາ | 38,765 | 1.00 | 49,178 | 1.17 | 61,184 | 1.28 | 18,116 | 2.04 | - | 18,447 | 1.43 |
| ອື່ນໆ | 11,995 | 0.31 | 9,164 | 0.22 | 8,595 | 0.18 | 7,422 | 0.84 | - | 4,019 | 0.31 |
| **ອາຟຣິກາ ແລະ ຕາເວັນອອກກາງ** | **11,446** | **0.30** | **9,264** | **0.22** | **9,641** | **0.20** | **3,996** | **0.45** | **-** | **4,523** | **0.35** |
| ອິດສະຣາແອນ | 2,128 | 0.06 | 2,997 | 0.07 | 4,041 | 0.08 | 1,664 | 0.19 | - | 1,170 | 0.09 |
| ອື່ນໆ | 9,318 | 0.24 | 6,267 | 0.15 | 5,600 | 0.12 | 2,332 | 0.26 | - | 3,353 | 0.26 |

# ຕາຕະລາງທີ 11: ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ແຕ່ລະເດືອນ ໃນປີ 2022

| ປະເທດ / ປີ | ເດືອນ | | | | | | | | | | | | 2022 |
|---|---|---|---|---|---|---|---|---|---|---|---|---|---|
| | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ | ລວມ |
| **ລວມທັງໝົດ** | **30** | **128** | **266** | **122** | **36,006** | **175,419** | **133,673** | **157,489** | **146,024** | **211,000** | **228,550** | **205,658** | **1,294,365** |
| **ອາຊຽນ** | **5** | **17** | **125** | **44** | **33,443** | **165,404** | **120,383** | **136,435** | **125,487** | **178,005** | **194,304** | **170,724** | **1,124,376** |
| ບຣູໄນ | - | - | - | - | 3 | 12 | 16 | 19 | 37 | 45 | 17 | 23 | 172 |
| ກຳປູເຈຍ | - | - | - | - | 130 | 613 | 3,407 | 1,033 | 1,218 | 1,326 | 2,516 | 1,300 | 11,543 |
| ອິນໂດເນເຊຍ | - | - | - | 1 | 65 | 138 | 211 | 166 | 300 | 442 | 476 | 335 | 2,134 |
| ມາເລເຊຍ | - | - | 3 | 9 | 57 | 390 | 770 | 1,075 | 1,236 | 972 | 977 | 893 | 6,382 |
| ມຽນມາ | - | - | - | - | 26 | 114 | 181 | 263 | 493 | 484 | 430 | 357 | 2,348 |
| ຟີລິບປິນ | - | 2 | 26 | 6 | 47 | 292 | 458 | 720 | 695 | 831 | 996 | 913 | 4,986 |
| ສິງກະໂປ | - | - | - | 2 | 43 | 225 | 241 | 366 | 2,660 | 438 | 613 | 424 | 5,012 |
| ໄທ | 5 | 14 | 88 | 26 | 18,622 | 114,451 | 77,436 | 85,555 | 70,609 | 120,548 | 130,710 | 113,690 | 731,754 |
| ຫວຽດນາມ | - | 1 | 8 | - | 14,450 | 49,169 | 37,663 | 47,238 | 48,239 | 52,919 | 57,569 | 52,789 | 360,045 |
| **ອາຊີ ແລະ ປາຊີຟິກ** | **23** | **100** | **33** | **50** | **1,703** | **6,447** | **7,514** | **12,360** | **11,449** | **21,453** | **16,674** | **15,491** | **93,297** |
| ອົດສະຕຣາລີ | - | - | - | 2 | 224 | 456 | 551 | 809 | 891 | 1,048 | 1,462 | 1,058 | 6,501 |
| ຈີນ | - | 9 | 9 | - | 1,148 | 3,448 | 3,410 | 5,938 | 5,030 | 13,361 | 6,501 | 6,395 | 45,249 |
| ອິນເດຍ | - | 1 | - | - | 83 | 316 | 273 | 498 | 536 | 578 | 698 | 585 | 3,568 |
| ຍີ່ປຸ່ນ | - | 1 | 1 | - | 110 | 489 | 636 | 1,175 | 1,161 | 1,101 | 1,187 | 987 | 6,848 |
| ເກົາຫລີໃຕ້ | 23 | 33 | 16 | 30 | 43 | 1,347 | 2,074 | 3,240 | 3,136 | 4,439 | 5,905 | 5,722 | 26,008 |
| ນິວຊີແລນ | - | - | - | - | 6 | 44 | 75 | 124 | 121 | 165 | 180 | 149 | 864 |
| ໄຕ້ຫວັນ | - | - | - | - | 38 | 159 | 137 | 235 | 230 | 275 | 232 | 208 | 1,514 |
| ອື່ນໆ | - | 56 | 7 | 18 | 51 | 188 | 358 | 341 | 344 | 486 | 509 | 387 | 2,745 |
| **ເອີຣົບ** | **-** | **11** | **80** | **6** | **375** | **1,974** | **2,828** | **5,054** | **4,975** | **6,411** | **11,608** | **13,407** | **46,729** |
| ໂອຕຣິດ | - | - | - | - | 4 | 28 | 23 | 40 | 52 | 66 | 158 | 197 | 568 |
| ແບນຊິກ | - | - | - | - | 25 | 69 | 113 | 193 | 169 | 212 | 358 | 353 | 1,492 |
| ເດນມາກ | - | - | - | - | 3 | 45 | 43 | 107 | 94 | 203 | 209 | 281 | 985 |
| ແຟງລັງ | - | - | 35 | - | 3 | 26 | 14 | 28 | 33 | 74 | 108 | 133 | 454 |
| ຝຣັ່ງ | - | - | - | 4 | 134 | 539 | 562 | 1,173 | 928 | 1,378 | 2,605 | 3,032 | 10,355 |
| ເຢຍລະມັນ | - | - | - | - | 52 | 269 | 331 | 595 | 644 | 877 | 1,417 | 1,892 | 6,077 |
| ເກຼັກ | - | - | - | - | - | 17 | 9 | 27 | 14 | 15 | 24 | 22 | 128 |
| ອິຕາລີ | - | - | 6 | - | 8 | 61 | 96 | 235 | 169 | 167 | 283 | 295 | 1,320 |
| ໂຮນລັງ | - | 1 | - | - | 5 | 108 | 184 | 309 | 270 | 280 | 667 | 740 | 2,564 |
| ນອກແວ | - | - | - | - | - | 29 | 52 | 62 | 67 | 84 | 97 | 109 | 500 |
| ລັດເຊຍ | - | - | - | - | 14 | 94 | 208 | 244 | 371 | 529 | 1,405 | 1,545 | 4,410 |
| ແອດສະປາຍ | - | - | - | - | 4 | 40 | 76 | 244 | 160 | 211 | 300 | 381 | 1,416 |
| ຊູແອັດ | - | - | - | - | 7 | 36 | 46 | 82 | 78 | 102 | 201 | 215 | 767 |
| ສະວິດສະແລນ | - | - | 16 | 1 | 8 | 76 | 9 | 30 | 16 | 263 | 519 | 599 | 1,537 |
| ອັງກິດ | - | 7 | 19 | 1 | 61 | 352 | 553 | 825 | 900 | 1,328 | 2,212 | 2,406 | 8,664 |
| ອື່ນໆ | - | 3 | 4 | - | 47 | 185 | 509 | 860 | 1,010 | 622 | 1,045 | 1,207 | 5,492 |
| **ອາເມລິກາ** | **2** | **-** | **25** | **20** | **466** | **1,375** | **2,296** | **2,972** | **3,029** | **4,479** | **5,384** | **5,392** | **25,440** |
| ການາດາ | - | - | - | 1 | 39 | 161 | 188 | 269 | 331 | 494 | 739 | 752 | 2,974 |
| ສະຫະລັດອາເມລິກາ | 2 | - | 25 | 19 | 400 | 1,094 | 1,217 | 2,076 | 2,165 | 2,880 | 4,310 | 4,259 | 18,447 |
| ອື່ນໆ | - | - | - | - | 27 | 120 | 891 | 627 | 533 | 1,105 | 335 | 381 | 4,019 |
| **ອາຟຣິກາ ແລະ ຕາເວັນອອກກາງ** | **-** | **-** | **3** | **2** | **19** | **219** | **652** | **668** | **1,084** | **652** | **580** | **644** | **4,523** |
| ອິດສະຣາແອນ | - | - | - | 1 | 2 | 39 | 73 | 78 | 174 | 335 | 150 | 318 | 1,170 |
| ອື່ນໆ | - | - | 3 | 1 | 17 | 180 | 579 | 590 | 910 | 317 | 430 | 326 | 3,353 |

## ຕາຕະລາງທີ 12: ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ເປັນໄຕມາດ ແຕ່ປີ 2015-2022

| ເດືອນ | 2015 | 2016 | 2017 | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|---|---|---|
| **ລວມທັງໝົດ** | **4,684,429** | **4,239,047** | **3,868,838** | **4,186,432** | **4,791,065** | **886,447** | **-** | **1,294,365** |
| **ໄຕມາດ 1** | **1,284,896** | **1,248,017** | **1,045,329** | **1,067,696** | **1,062,377** | **886,447** | **-** | **424** |
| ມັງກອນ | 436,358 | 400,140 | 339,768 | 358,248 | 331,524 | 351,104 | - | 30 |
| ກຸມພາ | 426,697 | 450,902 | 350,344 | 347,227 | 337,356 | 345,900 | - | 128 |
| ມີນາ | 421,841 | 396,975 | 355,217 | 362,221 | 393,497 | 189,443 | - | 266 |
| **ໄຕມາດ 2** | **1,040,693** | **1,002,972** | **959,209** | **1,059,584** | **1,166,082** | **-** | **-** | **211,547** |
| ເມສາ | 416,628 | 363,538 | 346,559 | 376,133 | 404,945 | - | - | 122 |
| ພຶດສະພາ | 325,095 | 343,162 | 314,344 | 339,165 | 392,491 | - | - | 36,006 |
| ມິຖຸນາ | 298,970 | 296,272 | 298,306 | 344,286 | 368,646 | - | - | 175,419 |
| **ໄຕມາດ 3** | **1,158,084** | **922,826** | **822,418** | **964,806** | **1,218,128** | **-** | **-** | **437,186** |
| ກໍລະກົດ | 337,805 | 296,242 | 278,971 | 282,602 | 418,537 | - | - | 133,673 |
| ສິງຫາ | 358,358 | 323,603 | 280,983 | 386,911 | 437,586 | - | - | 157,489 |
| ກັນຍາ | 461,921 | 302,981 | 262,464 | 295,293 | 362,005 | - | - | 146,024 |
| **ໄຕມາດ 4** | **1,200,756** | **1,065,232** | **1,041,882** | **1,094,346** | **1,344,478** | **-** | **-** | **645,208** |
| ຕຸລາ | 400,054 | 336,863 | 325,574 | 348,281 | 413,251 | - | - | 211,000 |
| ພະຈິກ | 420,650 | 367,964 | 358,997 | 352,225 | 473,648 | - | - | 228,550 |
| ທັນວາ | 380,052 | 360,405 | 357,311 | 393,840 | 457,579 | - | - | 205,658 |

## ຕາຕະລາງທີ 13: ປະເພດນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ໃນແຕ່ລະເດືອນ 2018-2022

| ເດືອນ | 2018 | 2019 | 2020 | 2021 | 2022 | | |
|---|---|---|---|---|---|---|---|
| | | | | | ນັກທ່ອງທ່ຽວສາກົນ | ນັກທ່ອງທ່ຽວຊາຍແດນ/ພາກພື້ນ | ລວມທັງໝົດ |
| **ລວມທັງໝົດ** | **4,186,432** | **4,791,065** | **886,447** | **-** | **1,058,439** | **235,926** | **1,294,365** |
| ມັງກອນ | 358,248 | 331,524 | 351,104 | - | 30 | | **30** |
| ກຸມພາ | 347,227 | 337,356 | 345,900 | - | 128 | | **128** |
| ມີນາ | 362,221 | 393,497 | 189,443 | - | 266 | | **266** |
| ເມສາ | 376,133 | 404,945 | - | - | 122 | | **122** |
| ພຶດສະພາ | 339,165 | 392,491 | - | - | 25,604 | 10,402 | **36,006** |
| ມິຖຸນາ | 344,286 | 368,646 | - | - | 136,588 | 38,831 | **175,419** |
| ກໍລະກົດ | 282,602 | 418,537 | - | - | 116,647 | 17,026 | **133,673** |
| ສິງຫາ | 386,911 | 437,586 | - | - | 133,244 | 24,245 | **157,489** |
| ກັນຍາ | 295,293 | 362,005 | - | - | 126,740 | 19,284 | **146,024** |
| ຕຸລາ | 348,281 | 413,251 | - | - | 168,589 | 42,411 | **211,000** |
| ພະຈິກ | 352,225 | 473,648 | - | - | 186,637 | 41,913 | **228,550** |
| ທັນວາ | 393,840 | 457,579 | - | - | 163,844 | 41,814 | **205,658** |

## ເສັ້ນສະແດງທີ 5: 10ອັນດັບຂອງນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ປີ 2022




## ເສັ້ນສະແດງທີ 6: ຈຳນວນນັກທ່ອງທ່ຽວຕ່າງປະເທດແຕ່ລະໄຕມາດ ໃນປີ 2022



## ຊ່ອງທາງການເດີນທາງ ເຂົ້າ-ອອກ ຂອງນັກທ່ອງທ່ຽວ

ນັກທ່ອງທ່ຽວ ເຂົ້າ-ອອກ ຜ່ານ 4 ຊ່ອງທາງຫຼັກ ໂດຍລຽງລໍາດັບຕາມຈໍານວນຂອງນັກທ່ອງທ່ຽວທີ່ຜ່ານດ່ານ ຄື: 1) ດ່ານຂົວມິດຕະພາບລາວ-ໄທ 1 ດ່ານຊາຍແດນເຊື່ອມຕໍ່ລະຫວ່າງ ນະຄອນຫຼວງວຽງຈັນ ກັບ ແຂວງໜອງຄາຍ, ມີຈໍານວນນັກທ່ອງທ່ຽວຜ່ານດ່ານທັງໝົດ 350,987 ເທື່ອຄົນ, ສະເລ່ຍ 27.12%. 2) ດ່ານຂົວມິດຕະພາບລາວ-ໄທ 2 ເປັນດ່ານທີ່ເຊື່ອມຕໍ່ລະຫວ່າງ ແຂວງຄໍາມ່ວນ ກັບ ແຂວງນະຄອນພະນົມ , ມີຈໍານວນນັກທ່ອງທ່ຽວ ຜ່ານທັງໝົດ 142,173 ເທື່ອຄົນ, ສະເລ່ຍເປັນ 11.03%. 3) ສະໜາມບິນສາກົນວັດໄຕ ມີຈໍານວນນັກທ່ອງທ່ຽວຜ່ານດ່ານທັງໝົດ 117,177 ເທື່ອຄົນ, ສະເລ່ຍ 9.05%, ແລະ 4) ດ່ານແດນສະຫວັນ ເປັນດ່ານເຊື່ອມຕໍ່ລະຫວ່າງແຂວງສະຫວັນນະເຂດ ແລະ ແຂວງກວາງຈິ (ປະເທດ ຫວຽດນາມ), ມີນັກທ່ອງທ່ຽວທັງໝົດ 112,596 ເທື່ອຄົນ, ສະເລ່ຍ 8.59%.

ນັກທ່ອງທ່ຽວເຂົ້າ ສປປ ລາວ ໃນປີ 2022 ທີ່ແມ່ນນັກທ່ອງທ່ຽວຊາຍແດນ ຕິດກັບ ສປປ ລາວ ມີຈໍານວນທັງໝົດ 1,026,190 ເທື່ອຄົນ, ສະເລ່ຍ 79.28%. ໃນນີ້, ນັກທ່ອງທ່ຽວຈາກປະເທດໄທ ເຂົ້າມາທ່ຽວຫຼາຍທີ່ສຸດ ໂດຍເຂົ້າມາທາງດ່ານຂົວມິດຕະພາບລາວ-ໄທ 1 ແລະ ດ່ານຂົວມິດຕະພາບລາວ-ໄທ 2. ສໍາລັບນັກທ່ອງທ່ຽວທີ່ມາຈາກ ສສ ຫວຽດນາມ ຈະໃຊ້ຊ່ອງທາງດ່ານແດນສະຫວັນ ເປັນຊ່ອງທາງຫຼັກໃນການເດີນທາງເຂົ້າມາໃນ ສປປ ລາວ. ສໍາລັບນັກທ່ອງທ່ຽວສາກົນ, ແມ່ນເດີນທາງເຂົ້າມາຫຼາຍຊ່ອງທາງ ຄື: ເດີນທາງຜ່ານສະໜາມບິນສາກົນວັດໄຕ ຊຶ່ງເປັນດ່ານສາກົນທີ່ມີນັກທ່ອງທ່ຽວຈາກ 4 ປະເທດເຂົ້າມາໃນ ສປປ ລາວ ຫຼາຍທີ່ສຸດ. ຊຶ່ງນັກທ່ອງທ່ຽວຈາກ ສປ ຈີນ ຈໍານວນ 17,680 ເທື່ອຄົນ, ນັກທ່ອງທ່ຽວຈາກປະເທດໄທ ຈໍານວນ 17,508 ເທື່ອຄົນ, ນັກທ່ອງທ່ຽວຈາກ ສ. ເກົາຫຼີ ຈໍານວນ 17,382 ເທື່ອຄົນ ແລະ ນັກທ່ອງທ່ຽວຈາກ ສສ ຫວຽດນາມ ຈໍານວນ 12,990 ເທື່ອຄົນ. ເນື່ອງຈາກວ່າມີສາຍການບິນໂດຍກົງກັບ 4 ປະເທດດັ່ງກ່າວຫຼາຍເສັ້ນທາງ ຈຶ່ງເຮັດໃຫ້ການເດີນທາງເຂົ້າມາໃນ ສປປ ລາວ ມີຄວາມສະດວກ.

ແຕ່ຢ່າງໃດກໍຕາມ ສະໜາມບິນສາກົນວັດໄຕ ຍັງແມ່ນຊ່ອງທາງທີ່ຮັບນັກທ່ອງທ່ຽວສາກົນຫຼາຍທີ່ສຸດ ໂດຍການຕໍ່ເຮືອບິນຈາກບັນດາປະເທດທີ່ໃກ້ຄຽງ ເພື່ອເດີນທາງເຂົ້າມາ ສປປ ລາວ. ນັກທ່ອງທ່ຽວທີ່ມາຈາກທາງພາກພື້ນເອີຣົບເດີນທາງມາທ່ຽວປະເທດໄທ ແລະ ສສ ຫວຽດນາມ ແລ້ວເດີນທາງຕໍ່ເຂົ້າມາທ່ຽວຢູ່ ສປປ ລາວ, ໂດຍການໃຊ້ເສັ້ນທາງຜ່ານດ່ານຊາຍແດນຕ່າງໆ. ນັກທ່ອງທ່ຽວຈາກພາກພື້ນເອີຣົບ ທີ່ໃຊ້ເສັ້ນທາງຜ່ານປະເທດໄທ ທາງດ່ານຂົວມິດຕະພາບ 1 ຈໍານວນ 4,821 ເທື່ອຄົນ ແລະ ນັກທ່ອງທ່ຽວຈາກ ອາເມລິກາ ຈໍານວນ 4,233 ເທື່ອຄົນ, ນັກທ່ອງທ່ຽວຈາກເອີຣົບ ເຂົ້າມາໂດຍຜ່ານດ່ານແດນສະຫວັນ ຈໍານວນ 1,324 ເທື່ອຄົນ ແລະ ດ່ານສະໜາມບິນສາກົນຫຼວງພະບາງ ຈໍານວນ 5,930 ເທື່ອຄົນ ແລະ ຈາກ ອາເມລິກາ ຈໍານວນ 2,656 ເທື່ອຄົນ.

ຈຸດໝາຍປາຍທາງທີ່ນັກທ່ອງທ່ຽວເຂົ້າມາຢ້ຽມຢາມ ສປປ ລາວ ຫຼາຍທີ່ສຸດ ແບ່ງອອກເປັນ 3 ກຸ່ມ ຄື: ກຸ່ມທີ່ ໜຶ່ງ ຊຶ່ງເປັນກຸ່ມເປົ້າໝາຍຫຼັກມີ: ນະຄອນຫຼວງວຽງຈັນ, ຫຼວງພະບາງ ແລະ ສະຫວັນນະເຂດ ໂດຍມີນັກທ່ອງທ່ຽວສາກົນເຂົ້າມາທ່ຽວຫຼາຍກວ່າ 200,000 ເທື່ອຄົນຕໍ່ປີ, ນະຄອນຫຼວງວຽງຈັນ ຖືເປັນປະຕູທາງເຂົ້າຕົ້ນຕໍຂອງນັກທ່ອງທ່ຽວ ທີ່ມາທ່ຽວຢູ່ ສປປ ລາວ, ນັກທ່ອງທ່ຽວສ່ວນຫຼາຍຈະເລີ່ມຕົ້ນຈາກນະຄອນຫຼວງວຽງຈັນ ແລ້ວຈຶ່ງເດີນທາງໄປຍັງຈຸດໝາຍປາຍທາງການທ່ອງທ່ຽວອື່ນໆ ໂດຍສະເພາະແມ່ນແຂວງຫຼວງພະບາງ ຊຶ່ງອັດຕາສ່ວນຂອງນັກທ່ອງທ່ຽວທີ່ເຂົ້າມາໃນ 3 ແຂວງດັ່ງກ່າວ ມີອັດຕາສ່ວນໃກ້ຄຽງກັບປີ 2019 ຫຼື ຊ່ວງໄລຍະກ່ອນເກີດພະຍາດໂຄວິດ-19. ກຸ່ມທີ່ສອງ ທີ່ມີນັກທ່ອງທ່ຽວເຂົ້າມາຕັ້ງແຕ່ 50,000-200,000 ເທື່ອຄົນ ປະກອບມີ: ແຂວງບໍ່ແກ້ວ, ແຂວງບໍລິຄໍາໄຊ, ແຂວງຈໍາປາສັກ, ແຂວງຄໍາມ່ວນ, ແຂວງວຽງຈັນ ແລະ ແຂວງໄຊຍະບູລີ, ຊຶ່ງແຂວງທີ່ມີການສົ່ງເສີມການທ່ອງທ່ຽວຂ້ອນຂ້າງຫຼາຍ ມີແຂວງວຽງຈັນ ແລະ ແຂວງຈໍາປາສັກ. ສໍາລັບແຂວງບໍ່ແກ້ວ ແມ່ນມີເຂດເສດຖະກິດພິເສດ ທີ່ມີກິດຈະກໍາການທ່ອງທ່ຽວຫຼາຍປະເພດ. ແຂວງຄໍາມ່ວນ ຕິດກັບແຂວງນະຄອນພະນົມ (ປະເທດໄທ) ເດີນທາງຜ່ານຂົວມິດຕະພາບລາວ-ໄທ 3, ມີສະຖານທີ່ທ່ອງ

ທ່ຽວທາງທຳມະຊາດ ແລະ ການຜະຈົນໄພຫຼາຍແຫ່ງ ທີ່ເປັນການດຶງດູດນັກທ່ອງທ່ຽວ ເຊັ່ນ: ພູຜາມ່ານ ແລະ ວົງຈອນ The Loop (ແຂວງບໍລິຄຳໄຊ - ຄຳມ່ວນ) ເປັນຕົ້ນ. ແຂວງຈຳປາສັກ ມີວັດພູຈຳປາສັກ, ນ້ຳຕົກຕາດຄອນພະເພັງ, ນ້ຳຕົກຕາດສົມພະມິດ (ຫຼີ່ຜີ), ດອນເດດ-ດອນຄອນ, ກຸ່ມນ້ຳຕົກຕາດທີ່ສວຍງາມຫຼາຍແຫ່ງຢູ່ເຂດເມືອງປາກຊ່ອງ ແລະ ສວນກາເຟຢູ່ເຂດພູພຽງບໍລະເວນ; ແຂວງໄຊຍະບູລີ ກໍມີການເປີດການໃຊ້ເສັ້ນທາງໃໝ່ທີ່ເຊື່ອມຕໍ່ຈາກ ແຂວງຫຼວງພະບາງ ໄປແຂວງນ່ານ (ປະເທດໄທ) ທີ່ເຮັດໃຫ້ເຂົ້າເຖິງໄດ້ສະດວກ. ສຳລັບກຸ່ມທີສາມ ແມ່ນໄປທ່ຽວບັນດາຕົວເມືອງນ້ອຍ ເປັນກຸ່ມທີ່ນັກທ່ອງທ່ຽວສາກົນໄປທ່ຽວໜ້ອຍກວ່າ 50,000 ເທື່ອຄົນ ຊຶ່ງສ່ວນຫຼາຍຈະເປັນພື້ນທີ່ ທີ່ມີ ສະຖານທີ່ທ່ອງທ່ຽວໜ້ອຍ ແລະ ການເດີນທາງຍັງບໍ່ມີຄວາມສະດວກສະບາຍ.

## ຕາຕະລາງທີ 14: ນັກທ່ອງທ່ຽວທີ່ຜ່ານດ່ານສາກົນເຂົ້າ–ອອກເມືອງ ແຍກຕາມດ່ານ ແຕ່ປີ 2017-2022

| ດ່ານເຂົ້າ-ອອກເມືອງ | 2017 | 2018 | 2019 | 2020 | 2021 | 2022 | ນັກທ່ອງທ່ຽວຊາຍແດນ/ພາກພື້ນ | ອັດຕາສ່ວນກອມຕະຫຼາດເປີເຊັນ | ອັດຕາເພີ່ມເປີເຊັນ |
|---|---|---|---|---|---|---|---|---|---|
| **ລວມທັງໝົດ** | **3,838,157** | **4,186,432** | **4,791,065** | **886,447** | **-** | **1,294,365** | **1,026,190** | **% Δ 100** | **% ∇ 22/19** |
| ສະໜາມບິນສາກົນວັດໄຕ | 364,714 | 355,621 | 574,137 | 103,559 | - | 117,177 | - | 9.05 | -80 |
| ສະໜາມບິນສາກົນສະຫວັນນະເຂດ | 3,709 | 18,236 | 2,966 | 643 | - | - | - | - | -100 |
| ສະໜາມບິນສາກົນປາກເຊ | 12,378 | 14,567 | 12,545 | 5,152 | - | - | - | - | -100 |
| ສະໜາມບິນສາກົນຫຼວງພະບາງ | 139,375 | 224,543 | 202,159 | 65,844 | - | 20,639 | - | 1.59 | -90 |
| ຂົວມິດຕະພາບ I | 863,642 | 1,124,613 | 1,321,006 | 212,499 | - | 350,987 | 308,386 | 27.12 | -73 |
| ສະຖານີລົດໄຟທ່ານາແລ້ງ | 4,048 | 17,310 | 2,923 | 730 | - | - | - | - | -100 |
| ບໍ່ເຕັນ | 493,308 | 485,873 | 536,906 | 79,827 | - | 8,289 | 8,289 | 0.64 | -98 |
| ຂົວມິດຕະພາບ IV | 174,161 | 156,677 | 156,478 | 41,998 | - | 91,386 | 77,682 | 7.06 | -42 |
| ສາມຫຼ່ຽມຄຳ | - | 163,544 | 240,777 | 22,909 | - | 36,902 | 22,958 | 2.85 | -85 |
| ບ້ານເມືອງມອມ | - | 21,304 | 19,478 | 540 | - | 499 | 482 | 0.04 | -97 |
| ຂົວມິດຕະພາບ II | 517,903 | 419,304 | 405,031 | 79,427 | - | 142,713 | 126,795 | 11.03 | -65 |
| ແດນສະຫວັນ | 208,626 | 215,190 | 236,403 | 42,446 | - | 112,526 | 99,076 | 8.69 | -52 |
| ວັງເຕົ່າ | 181,587 | 200,149 | 206,030 | 50,012 | - | 61,980 | 56,340 | 4.79 | -70 |
| ໜອງນົກຂຽນ | 28,915 | 31,332 | 51,904 | 10,721 | - | 15,657 | 8,677 | 1.21 | -70 |
| ນ້ຳພາວ | 168,933 | 177,238 | 128,093 | 27,034 | - | 66,233 | 63,436 | 5.12 | -48 |
| ທ່າເຮືອປາກຊັນ | 28,294 | 32,299 | 40,410 | 5,576 | - | 12,756 | 12,410 | 0.99 | -68 |
| ຂົວມິດຕະພາບ III | 153,076 | 73,293 | 94,017 | 20,624 | - | 50,225 | 43,682 | 3.88 | -47 |
| ນາເພົ້າ | 141,574 | 112,589 | 135,667 | 33,019 | - | 60,795 | 58,548 | 4.70 | -55 |
| ຂົວມິດຕະພາບນ້ຳເຫືອງ | 42,857 | 40,276 | 69,827 | 8,492 | - | 13,087 | 12,796 | 1.01 | -81 |
| ນ້ຳເງິນ | 50,303 | 52,099 | 53,351 | 13,337 | - | 21,932 | 21,336 | 1.69 | -59 |
| ພູດູ່ | 15,849 | 10,579 | 9,371 | 1,537 | - | 3,431 | 3,264 | 0.27 | -63 |
| ນ້ຳກັ່ນ | 73,406 | 45,361 | 61,261 | 13,328 | - | 20,296 | 19,807 | 1.57 | -67 |
| ນ້ຳໂສຍ | 16,943 | 10,913 | 14,766 | 4,289 | - | 9,157 | 8,079 | 0.71 | -38 |
| ປາງຫົກ | 33,983 | 34,311 | 45,597 | 8,587 | - | 15,486 | 14,057 | 1.20 | -66 |
| ລານຕຸ້ຍ | 6,420 | 19,451 | 33,176 | 2,365 | - | 1,793 | 1,469 | 0.14 | -95 |
| ພູເກືອ | 64,044 | 55,917 | 61,664 | 9,643 | - | 29,831 | 28,893 | 2.30 | -52 |
| ລະໄລ | 50,109 | 73,843 | 75,122 | 22,309 | - | 20,894 | 20,316 | 1.61 | -72 |
| ດາກຕາອອກ | - | - | - | - | - | 4,868 | 4,670 | 0.38 | - |
| ປາງມອນ | - | - | - | - | - | 4,826 | 4,742 | 0.37 | - |
| ທ່າບົກ ທ່ານາແລ້ງ | - | - | - | - | - | - | - | - | - |
| ສະຖານີທາງລົດໄຟລາວ-ຈີນ | - | - | - | - | - | - | - | - | - |

# ຕາຕະລາງທີ 15: ນັກທ່ອງທ່ຽວທີ່ຜ່ານດ່ານສາກົນເຂົ້າ–ອອກເມືອງ ແຍກຕາມສັນຊາດ ໃນປີ 2022

| ປະເທດ / ປີ | ດ່ານເຂົ້າ-ອອກເມືອງ | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| | ອັດຕະປື | ບໍ່ແກ້ວ | | | ບໍລິຄຳໄຊ | | ຈຳປາສັກ | | | ຫົວພັນ | ຄຳມ່ວນ | | ຫຼວງພະບາງ | ຫຼວງນ້ຳທາ | |
| | ພູເກືອ | ຂົວມິດຕະພາບ IV | ສາມຫຼ່ຽມຄຳ | ບ້ານເມືອງມອມ | ທ່າເຮືອປາກຊັນ | ນ້ຳພາວ | ວັງເຕົ່າ | ສະໜາມບິນສາກົນປາກເຊ | ໜອງນົກຂຽນ | ນ້ຳໂສຍ | ຂົວມິດຕະພາບ III | ນາເພົ້າ | ສະໜາມບິນສາກົນຫຼວງພະບາງ | ບໍ່ເຕັນ | ສະຖານີທາງລົດໄຟລາວ-ຈີນ |
| **ລວມ** | **29,831** | **91,386** | **36,902** | **499** | **12,756** | **66,233** | **61,931** | **49** | **15,657** | **9,157** | **50,225** | **60,795** | **20,639** | **8,289** | **-** |
| **ອາຊຽນ** | **29,549** | **78,610** | **25,895** | **483** | **12,654** | **65,164** | **58,636** | **49** | **12,677** | **8,805** | **48,821** | **60,474** | **10,084** | **-** | **-** |
| ບຣູນາຍ | - | 1 | - | - | - | - | - | - | 3 | - | - | - | 12 | - | - |
| ກຳປູເຈຍ | 7 | 19 | 102 | - | 11 | 14 | 245 | - | 8,677 | 3 | 21 | - | 126 | - | - |
| ອິນໂດເນເຊຍ | 1 | 38 | 488 | - | 3 | 35 | 9 | - | 53 | 5 | 26 | - | 102 | - | - |
| ມາເລເຊຍ | 2 | 172 | 538 | - | 32 | 15 | 129 | - | 29 | 16 | 103 | 8 | 148 | - | - |
| ມຽນມາ | - | 31 | 146 | - | 4 | 3 | 37 | - | 9 | 8 | 16 | 6 | 91 | - | - |
| ຟິລິບປິນ | 14 | 97 | 264 | - | 1 | 153 | 85 | - | 30 | 1 | 22 | 8 | 134 | - | - |
| ສິງກະໂປ | - | 136 | 153 | - | 43 | 22 | 72 | - | 17 | 5 | 223 | 2 | 114 | - | - |
| ໄທ | 632 | 77,682 | 22,958 | 482 | 12,410 | 1,486 | 56,340 | 14 | 250 | 688 | 43,682 | 1,902 | 9,118 | - | - |
| ຫວຽດນາມ | 28,893 | 434 | 1,246 | 1 | 150 | 63,436 | 1,719 | 35 | 3,609 | 8,079 | 4,728 | 58,548 | 239 | - | - |
| **ອາຊີ ແລະ ປາຊີຟິກ** | **77** | **1,840** | **9,722** | **-** | **15** | **331** | **1,043** | **-** | **1,081** | **107** | **671** | **83** | **1,648** | **8,289** | **-** |
| ອົດສະຕຣາລີ | 11 | 592 | 46 | - | - | 18 | 149 | - | 64 | 9 | 69 | 1 | 505 | - | - |
| ຈີນ | 18 | 355 | 8,533 | - | 1 | 53 | 216 | - | 357 | 43 | 412 | 38 | 225 | 8,289 | - |
| ອິນເດຍ | 5 | 52 | 333 | - | - | 69 | 119 | - | 161 | 18 | 29 | 17 | 158 | - | - |
| ຍີ່ປຸ່ນ | 7 | 240 | 74 | - | 13 | 62 | 195 | - | 60 | 6 | 75 | 8 | 451 | - | - |
| ເກົາຫລີໃຕ້ | 35 | 368 | 155 | - | 1 | 104 | 306 | - | 68 | 25 | 48 | 17 | 181 | - | - |
| ນິວຊີແລນ | - | 161 | 6 | - | - | 2 | 22 | - | 14 | - | 17 | - | 64 | - | - |
| ໄຕ້ຫວັນ | - | 11 | 326 | - | - | 14 | 13 | - | 121 | 6 | 6 | 1 | 21 | - | - |
| ອື່ນໆ | 1 | 61 | 249 | - | - | 9 | 23 | - | 236 | - | 15 | 1 | 43 | - | - |
| **ເອີຣົບ** | **116** | **9,019** | **322** | **-** | **9** | **630** | **1,357** | **-** | **1,522** | **138** | **435** | **23** | **5,930** | **-** | **-** |
| ໂອຕຼິດ | - | 125 | 2 | - | - | 9 | 2 | - | 21 | 3 | 6 | - | 132 | - | - |
| ແບນຊິກ | 2 | 292 | 6 | - | - | 28 | 54 | - | 60 | 16 | 26 | - | 201 | - | - |
| ເດນມາກ | 1 | 304 | 7 | - | - | 15 | 45 | - | 22 | - | 6 | 2 | 124 | - | - |
| ແຟງລັງ | - | 65 | 2 | - | - | 2 | 23 | - | 10 | - | 6 | - | 47 | - | - |
| ຝຣັ່ງ | 13 | 965 | 35 | - | 4 | 159 | 571 | - | 537 | 15 | 51 | 15 | 1,343 | - | - |
| ເຢຍລະມັນ | 3 | 1,251 | 24 | - | - | 77 | 213 | - | 218 | 15 | 90 | 2 | 790 | - | - |
| ເກຼັກ | - | 15 | - | - | - | - | - | - | 14 | - | - | - | 11 | - | - |
| ອິຕາລີ | 3 | 294 | 2 | - | - | 20 | 30 | - | 32 | 7 | 17 | - | 197 | - | - |
| ໂຮນລັງ | 2 | 892 | 10 | - | - | 46 | 57 | - | 129 | 10 | 28 | - | 291 | - | - |
| ນອກແວ | 1 | 87 | 2 | - | - | 5 | 18 | - | 15 | 1 | 19 | - | 26 | - | - |
| ລັດເຊຍ | 82 | 168 | 76 | - | 1 | 40 | 27 | - | 9 | 6 | 10 | - | 90 | - | - |
| ແອດສະປາຍ | 1 | 399 | 12 | - | - | 23 | 26 | - | 63 | 12 | 20 | - | 359 | - | - |
| ຊູແອັດ | - | 179 | 6 | - | - | 6 | 27 | - | 7 | 8 | 9 | - | 65 | - | - |
| ສະວິດສະແລນ | 1 | 291 | 3 | - | 2 | 7 | 58 | - | 62 | 11 | 35 | 2 | 314 | - | - |
| ອັງກິດ | 4 | 2,776 | 39 | - | - | 131 | 145 | - | 181 | 28 | 71 | 2 | 1,004 | - | - |
| ອື່ນໆ | 3 | 916 | 96 | - | 2 | 62 | 61 | - | 142 | 6 | 41 | - | 936 | - | - |
| **ອາເມລິກາ** | **75** | **1,518** | **733** | **-** | **2** | **82** | **862** | **-** | **245** | **56** | **254** | **212** | **2,656** | **-** | **-** |
| ການາດາ | - | 378 | 21 | - | - | 20 | 132 | - | 38 | 5 | 67 | 6 | 304 | - | - |
| ສະຫະລັດອາເມລິກາ | 7 | 891 | 158 | - | - | 32 | 698 | - | 140 | 18 | 159 | 4 | 2,090 | - | - |
| ອື່ນໆ | 68 | 249 | 554 | - | 2 | 30 | 32 | - | 67 | 33 | 28 | 202 | 262 | - | - |
| **ອາຟຣິກາ ແລະ ຕາເວັນອອກກາງ** | **14** | **399** | **230** | **16** | **76** | **26** | **33** | **-** | **132** | **51** | **44** | **3** | **321** | **-** | **-** |
| ອິດສະຣາແອນ | - | 307 | 7 | - | - | 15 | 15 | - | 89 | - | 18 | - | 263 | - | - |
| ອື່ນໆ | 14 | 92 | 223 | 16 | 76 | 11 | 18 | - | 43 | 51 | 26 | 3 | 58 | - | - |

| ດ່ານເຂົ້າ-ອອກເມືອງ | | | | | | | | | | | | | | | | ລວມທັງໝົດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| ຜົ້ງສາລີ | | ສະຫວັນນະເຂດ | | | ເຊກອງ | ສາລະວັນ | ນະຄອນຫຼວງວຽງຈັນ | | | | ໄຊຍະບູລີ | | | | ຊຽງຂວາງ | |
| ລານຕຸ້ຍ | ປາງຫົກ | ຂົວມິດ ຕະພາບ II | ແດນ ສະຫວັນ | ສະໜາມ ບິນສາກົນ ສະຫວັນ ນະເຂດ | ດາກຕະ ອອກ | ລະໄລ | ຂົວມິດ ຕະພາບ I | ສະຖານີ ລົດໄຟ ທ່ານາ ແລ້ງ | ສະໜາມ ບິນສາກົນ ວັດໄຕ | ທ່າບົກ ທ່ານາແລ້ງ | ຂົວມິດຕະ ພາບນໍ້າ ເຫືອງ | ນໍ້າເງິນ | ພູດູ່ | ປາງມອນ | ນໍ້າກັ່ນ | |
| **1,793** | **15,486** | **142,713** | **112,526** | **-** | **4,868** | **20,894** | **350,987** | **-** | **117,175** | **2** | **13,087** | **21,932** | **3,431** | **4,826** | **20,296** | **1,294,365** |
| **324** | **14,853** | **133,924** | **107,074** | **-** | **4,838** | **20,834** | **328,370** | **-** | **39,404** | **-** | **12,871** | **21,765** | **3,410** | **4,773** | **20,035** | **1,124,376** |
| - | - | 1 | - | - | - | - | 96 | - | 59 | - | - | - | - | - | - | 172 |
| - | 2 | 57 | 24 | - | - | 5 | 941 | - | 1,227 | - | 8 | 4 | 48 | - | 2 | 11,543 |
| - | 5 | 28 | 21 | - | - | - | 535 | - | 773 | - | 1 | 10 | - | - | 1 | 2,134 |
| - | 17 | 341 | 117 | - | 2 | - | 1,509 | - | 3,153 | - | 11 | 32 | 1 | 3 | 4 | 6,382 |
| - | - | 319 | 11 | - | - | - | 894 | - | 767 | - | - | 4 | - | - | 2 | 2,348 |
| - | 5 | 1,267 | 131 | - | - | - | 1,571 | - | 1,186 | - | 8 | 8 | - | - | 1 | 4,986 |
| - | 5 | 600 | 67 | - | 1 | - | 1,610 | - | 1,741 | - | 43 | 97 | 32 | 27 | 2 | 5,012 |
| - | 762 | 126,795 | 7,627 | - | 165 | 513 | 308,386 | - | 17,508 | - | 12,796 | 21,336 | 3,264 | 4,742 | 216 | 731,754 |
| 324 | 14,057 | 4,516 | 99,076 | - | 4,670 | 20,316 | 12,828 | - | 12,990 | - | 4 | 274 | 65 | 1 | 19,807 | 360,045 |
| **1,469** | **102** | **5,541** | **1,919** | **-** | **17** | **34** | **12,742** | **-** | **46,334** | **-** | **80** | **27** | **12** | **51** | **62** | **93,297** |
| - | 9 | 88 | 261 | - | 2 | 1 | 1,228 | - | 3,442 | - | - | 2 | - | - | 4 | 6,501 |
| 1,469 | 14 | 4,199 | 157 | - | 3 | 2 | 3,101 | - | 17,680 | - | 11 | 13 | 7 | 43 | 10 | 45,249 |
| - | 4 | 248 | 155 | - | - | 1 | 401 | - | 1,790 | - | 5 | - | - | - | 3 | 3,568 |
| - | 36 | 271 | 109 | - | 5 | 6 | 1,582 | - | 3,585 | - | 40 | 7 | - | 2 | 14 | 6,848 |
| - | 34 | 242 | 1,134 | - | 7 | 24 | 5,818 | - | 17,382 | - | 22 | 5 | 4 | 6 | 22 | 26,008 |
| - | 1 | 20 | 47 | - | - | - | 123 | - | 383 | - | 1 | - | - | - | 3 | 864 |
| - | - | 62 | 7 | - | - | - | 178 | - | 742 | - | - | - | - | - | 6 | 1,514 |
| - | 4 | 411 | 49 | - | - | - | 311 | - | 1,330 | - | 1 | - | 1 | - | - | 2,745 |
| **-** | **492** | **2,036** | **2,157** | **-** | **12** | **15** | **4,821** | **-** | **17,442** | **2** | **23** | **48** | **7** | **2** | **171** | **46,729** |
| - | 10 | 8 | 11 | - | - | - | 57 | - | 181 | - | - | - | - | - | 1 | 568 |
| - | 32 | 28 | 26 | - | - | 2 | 216 | - | 496 | - | - | - | - | - | 7 | 1,492 |
| - | 2 | 21 | 46 | - | - | - | 100 | - | 286 | - | - | - | - | - | 4 | 985 |
| - | 3 | 26 | 21 | - | - | - | 74 | - | 175 | - | - | - | - | - | - | 454 |
| - | 243 | 377 | 420 | - | - | 8 | 381 | - | 5,141 | - | 6 | 6 | - | - | 65 | 10,355 |
| - | 37 | 120 | 223 | - | 1 | - | 688 | - | 2,316 | - | - | 8 | 1 | - | - | 6,077 |
| - | - | 2 | 16 | - | - | - | 30 | - | 40 | - | - | - | - | - | - | 128 |
| - | 9 | 48 | 73 | - | 3 | - | 141 | - | 439 | - | - | 2 | - | - | 3 | 1,320 |
| - | 68 | 67 | 121 | - | - | 1 | 246 | - | 567 | - | 7 | 3 | - | - | 19 | 2,564 |
| - | - | 36 | 35 | - | - | - | 112 | - | 141 | - | - | - | - | - | 2 | 500 |
| - | 8 | 699 | 193 | - | 6 | - | 984 | - | 1,996 | - | 5 | 3 | 4 | 2 | 1 | 4,410 |
| - | 25 | 10 | 53 | - | - | - | 77 | - | 325 | - | - | - | - | - | 11 | 1,416 |
| - | 2 | 35 | 46 | - | - | - | 121 | - | 253 | - | - | - | - | - | 3 | 767 |
| - | 16 | 45 | 25 | - | 1 | - | 219 | - | 434 | 1 | 2 | 5 | 1 | - | 2 | 1,537 |
| - | 18 | 303 | 594 | - | 1 | - | 729 | - | 2,614 | 1 | 2 | 4 | - | - | 17 | 8,664 |
| - | 19 | 211 | 254 | - | - | 4 | 646 | - | 2,038 | - | 1 | 17 | 1 | - | 36 | 5,492 |
| **-** | **22** | **952** | **1,342** | **-** | **1** | **11** | **4,233** | **-** | **12,121** | **-** | **23** | **16** | **2** | **-** | **22** | **25,440** |
| - | 1 | 100 | 154 | - | - | - | 511 | - | 1,227 | - | 2 | - | - | - | 8 | 2,974 |
| - | 10 | 641 | 616 | - | 1 | 7 | 3,042 | - | 9,888 | - | 19 | 14 | - | - | 12 | 18,447 |
| - | 11 | 211 | 572 | - | - | 4 | 680 | - | 1,006 | - | 2 | 2 | 2 | - | 2 | 4,019 |
| **-** | **17** | **260** | **34** | **-** | **-** | **-** | **821** | **-** | **1,874** | **-** | **90** | **76** | **-** | **-** | **6** | **4,523** |
| - | 6 | 28 | 10 | - | - | - | 63 | - | 345 | - | - | - | - | - | 4 | 1,170 |
| - | 11 | 232 | 24 | - | - | - | 758 | - | 1,529 | - | 90 | 76 | - | - | 2 | 3,353 |

### ຕາຕະລາງທີ 16: ນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມໃນແຕ່ລະແຂວງ ແຕ່ປີ 2016-2022

| ແຂວງ | 2016 | 2017 | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|---|---|
| **ລວມທັງໝົດ** | **6,783,874** | **6,372,514** | **6,553,315** | **7,358,039** | **1,490,073** | **-** | **2,012,152** |
| ອັດຕະປື | 130,773 | 71,924 | 98,720 | 164,139 | 22,445 | - | 40,309 |
| ບໍ່ແກ້ວ | 219,603 | 207,864 | 331,477 | 637,842 | 155,359 | - | 134,432 |
| ບໍລິຄໍາໄຊ | 231,920 | 181,710 | 215,513 | 157,607 | 60,449 | - | 114,088 |
| ຈໍາປາສັກ | 621,870 | 831,779 | 979,264 | 1,077,645 | 17,807 | - | 92,642 |
| ຫົວພັນ | 50,039 | 50,154 | 39,877 | 58,757 | 10,723 | - | 13,018 |
| ຄໍາມ່ວນ | 538,027 | 464,584 | 283,494 | 444,396 | 39,283 | - | 138,541 |
| ຫຼວງນໍ້າທາ | 531,366 | 600,369 | 573,145 | 661,852 | 79,998 | - | 15,747 |
| ຫຼວງພະບາງ | 643,319 | 472,942 | 576,610 | 638,101 | 142,435 | - | 256,896 |
| ອຸດົມໄຊ | 192,496 | 186,351 | 130,540 | 118,468 | 40,817 | - | 39,862 |
| ຜົ້ງສາລີ | 103,583 | 144,012 | 135,593 | 160,012 | 35,064 | - | 33,502 |
| ສາລະວັນ | 88,325 | 92,550 | 37,453 | 112,770 | 23,895 | - | 17,356 |
| ສະຫວັນນະເຂດ | 866,630 | 724,243 | 603,623 | 650,339 | 144,914 | - | 292,432 |
| ເຊກອງ | 34,024 | 38,429 | 30,720 | 55,438 | 1,711 | - | 6,925 |
| ນະຄອນຫຼວງວຽງຈັນ | 1,643,692 | 1,347,866 | 2,018,174 | 1,868,985 | 520,758 | - | 633,726 |
| ວຽງຈັນ | 589,948 | 592,650 | 295,583 | 329,857 | 129,419 | - | 87,943 |
| ໄຊສົມບູນ | 26,465 | 15,831 | 8,069 | 21,252 | 561 | - | 968 |
| ໄຊຍະບູລີ | 197,628 | 218,995 | 118,190 | 117,172 | 42,497 | - | 70,835 |
| ຊຽງຂວາງ | 74,166 | 130,261 | 77,270 | 83,407 | 21,938 | - | 22,930 |

## ຄົນລາວທີ່ເດີນທາງໄປຕ່າງປະເທດ

ການເດີນທາງຂອງຄົນລາວທີ່ເດີນທາງໄປຕ່າງປະເທດ ແຕ່ກ່ອນປີ 2018 ສ່ວນຫຼາຍຈະເປັນການເດີນທາງຂ້າມຊາຍແດນໄປເມືອງໃກ້ຄຽງ ເພື່ອໄປຊື້ສິນຄ້າອຸປະໂພກ-ບໍລິໂພກ, ໄປໃຊ້ ບໍລິການທາງການແພດ ແລະ ຢ້ຽມຢາມຄອບຄົວ ແຕ່ກໍມີແນວໂນ້ມຫຼຸດລົງ ເລີ່ມແຕ່ປີ 2019 ເປັນຕົ້ນມາ. ເນື່ອງຈາກມີຮ້ານຈໍາໜ່າຍສິນຄ້າຍ່ອຍໃນປະເທດເພີ່ມຂຶ້ນເປັນຈໍານວນຫຼາຍ ເຮັດໃຫ້ມີຄວາມສະດວກໃນການຊື້ສິນຄ້າຫຼາຍຂຶ້ນ. ຈົນຮອດ ເດືອນ ເມສາປີ 2020 ໄດ້ມີການປະກາດປິດປະເທດ ເຮັດໃຫ້ຄົນລາວບໍ່ສາມາດເດີນທາງໄປຕ່າງປະເທດໄດ້. ຈົນເຖິງວັນທີ 9 ພຶດສະພາ 2022 ຈຶ່ງມີຄົນລາວເດີນທາງອອກນອກປະເທດ ມີເຖິງ 1,023,389 ເທື່ອຄົນ, ເມື່ອທຽບກັບປີ 2019 ກ່ອນທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19 ແມ່ນມີຈໍານວນ 2,690,430 ເທື່ອຄົນ ສະເລ່ຍ 38.04%. ເນື່ອງຈາກວ່າການເດີນທາງຂ້າມຊາຍແດນ ຍັງມີຂໍ້ຈໍາກັດຫຼາຍໃນຊ່ວງໄລຍະທໍາອິດ ເປັນຕົ້ນ: ກວດກາໃບຢັ້ງຢືນສັກຢາວັກຊີນ, ກວດອຸນຫະພູມ ແລະ ການຊື້ປະກັນສຸຂະພາບ. ນອກຈາກນັ້ນ, ຍັງມີບັນຫາກ່ຽວກັບການປ່ຽນແປງຂອງອັດຕາແລກປ່ຽນຂອງເງິນຕາຕ່າງປະເທດ ເຮັດໃຫ້ຄ່າໃຊ້ຈ່າຍໃນການເດີນທາງໄປຕ່າງປະເທດມີຄ່າໃຊ້ຈ່າຍທີ່ເພີ່ມຂຶ້ນຫຼາຍ.

ຊ່ອງທາງຫຼັກ ທີ່ຄົນລາວເດີນທາງອອກໄປຕ່າງປະເທດ ແມ່ນດ່ານຂົວມິດຕະພາບລາວ-ໄທ 1 ນະຄອນຫຼວງວຽງຈັນ-ໜອງຄາຍ ມີຈໍານວນ 528,783 ເທື່ອຄົນ ໂດຍການໃຊ້ບັດຜ່ານແດນ ແລະ ໜັງສືຜ່ານແດນ. ລໍາດັບທີສອງ

ການເດີນທາງອອກຕ່າງປະເທດຂອງຄົນລາວ ແມ່ນດ່ານ ສະຫວັນນະເຂດ - ມຸກດາຫານ (ປະເທດໄທ) ມີຈຳນວນທັງໝົດ 98,034 ເທື່ອຄົນ ໂດຍໃຊ້ບັດຜ່ານແດນ ຈຳນວນ 20,820 ເທື່ອຄົນ ແລະ ໃຊ້ໜັງສືເດີນທາງ 77,214 ເທື່ອຄົນ. ລຳດັບທີສາມ ແມ່ນດ່ານ ໄຊຍະບູລີ - ນ່ານ (ປະເທດໄທ) ມີຄົນລາວຜ່ານດ່ານ ຈຳນວນ 85,746 ເທື່ອຄົນ, ໃຊ້ບັດຜ່ານແດນຈຳນວນ 37,987 ເທື່ອຄົນ ແລະ ໃຊ້ໜັງສືຜ່ານແດນ 47,759 ເທື່ອຄົນ. ລຳດັບທີ 4 ແມ່ນດ່ານ ຈຳປາສັກ - ອຸບົນລາດຊະທານີ (ປະເທດໄທ) ມີຈຳນວນ 85,371 ເທື່ອຄົນ ໃຊ້ບັດຜ່ານແດນຈຳນວນ 24,709 ເທື່ອຄົນ ແລະ ໃຊ້ໜັງສືເດີນທາງຈຳນວນ 60,662 ເທື່ອຄົນ. ລຳດັບ ທີ 5 ແມ່ນດ່ານ ຄຳມ່ວນ - ນະຄອນພະນົມ (ປະເທດໄທ) ມີຄົນລາວເດີນທາງທັງໝົດ 72,964 ເທື່ອຄົນ ໃຊ້ບັດຜ່ານແດນຈຳນວນ 27,014 ເທື່ອຄົນ ແລະ ໜັງສືເດີນທາງຈຳນວນ 45,950 ເທື່ອຄົນ.

ເຫັນໄດ້ວ່າ ການເດີນທາງອອກໄປຕ່າງປະເທດຂອງຄົນລາວໂດຍສ່ວນຫຼາຍ ແມ່ນເດີນທາງໄປປະເທດໄທ ເນື່ອງຈາກມີຄວາມສະດວກໃນການຄົມມະນາຄົມ, ການໃຊ້ພາສາທີ່ເຂົ້າໃຈງ່າຍ, ສາມາດຊື້ສິນຄ້າອຸປະໂພກ-ບໍລິໂພກໄດ້ຢ່າງສະດວກ ແລະ ມີການເຊື່ອມຕໍ່ໃນການເດີນທາງໄປປະເທດອື່ນໄດ້ງ່າຍ ໂດຍການໃຊ້ສາຍການບິນພາຍໃນປະເທດ ໄທ ເພື່ອເດີນທາງໄປຍັງປະເທດອື່ນໆ.

## ຕາຕະລາງທີ 17: ຄົນລາວໃນແຕ່ລະແຂວງທີ່ເດີນທາງໄປຕ່າງປະເທດ ແຕ່ປີ 2016-2022

| ແຂວງທີ່ມີດ່ານເຂົ້າ-ອອກເມືອງ | 2016 | 2017 | 2018 | 2019 | 2020 | % ∇ | 2021 | 2022 |
|---|---|---|---|---|---|---|---|---|
| **ລວມທັງໝົດ** | **3,058,815** | **3,049,152** | **3,206,870** | **2,690,430** | **706,904** | **-73.7** | **-** | **1,023,389** |
| ອັດຕະປື | 5,249 | 5,569 | 4,322 | 3,842 | 1,648 | -57.1 | - | **3,665** |
| ບໍ່ແກ້ວ | 54,223 | 43,222 | 83,887 | 65,602 | 20,904 | -68.1 | - | **38,947** |
| ບໍລິຄຳໄຊ | 105,683 | 103,780 | 118,121 | 86,243 | 30,367 | -64.8 | - | **41,541** |
| ຈຳປາສັກ | 216,080 | 260,246 | 261,998 | 217,821 | 74,552 | -65.8 | - | **85,371** |
| ຫົວພັນ | 5,617 | 2,293 | 5,632 | 3,710 | 1,422 | -61.7 | - | **2,736** |
| ຄຳມ່ວນ | 495,540 | 393,197 | 92,312 | 68,488 | 23,406 | -65.8 | - | **72,964** |
| ຫຼວງນ້ຳທາ | 130,575 | 113,235 | 145,205 | 106,106 | 24,451 | -77.0 | - | **-** |
| ຫຼວງພະບາງ | 1,890 | 1,801 | 8,873 | 7,878 | 1,368 | -82.6 | - | **-** |
| ຜົ້ງສາລີ | 4,756 | 4,721 | 30,536 | 32,682 | 8,767 | -73.2 | - | **7,165** |
| ສາລະວັນ | | 11,384 | 9,964 | 11,506 | 3,491 | -69.7 | - | **4,341** |
| ສະຫວັນນະເຂດ | 329,345 | 389,178 | 604,589 | 381,415 | 133,122 | -65.1 | - | **98,034** |
| ນະຄອນຫຼວງວຽງຈັນ | 1,543,693 | 1,535,634 | 1,635,403 | 1,331,654 | 311,563 | -76.6 | - | **577,128** |
| ໄຊຍະບູລີ | 159,343 | 174,752 | 197,276 | 366,915 | 68,874 | -81.2 | - | **85,746** |
| ຊຽງຂວາງ | 6,821 | 10,140 | 8,752 | 6,568 | 2,969 | -54.8 | - | **4,378** |
| ເຊກອງ | - | - | - | - | - | - | - | **1,373** |

# ຕາຕະລາງທີ 18: ຈຸດປະສົງຂອງຄົນລາວທີ່ເດີນທາງໄປຕ່າງປະເທດ ແຕ່ປີ 2019-2022

| ດ່ານເຂົ້າ-ອອກ | ລວມທັງໝົດ | | | 2022 | | | | | ລວມທັງໝົດ |
|---|---|---|---|---|---|---|---|---|---|
| ເມືອງ | 2019 | 2020 | 2021 | ທາງການ | ຢ້ຽມຢາມ | ທ່ອງທ່ຽວ | ທຸລະກິດ | ອື່ນໆ | 2022 |
| **ລວມທັງໝົດ** | **2,690,430** | **706,904** | **-** | **2,233** | **366,863** | **555,342** | **26,603** | **72,348** | **1,023,389** |
| **ຂົວມິດຕະພາບ I** | **1,189,344** | **271,086** | **-** | **-** | **251,712** | **229,908** | **-** | **47,163** | **528,783** |
| ບັດຜ່ານແດນ | 345,353 | 124,450 | - | - | 236,953 | 17,073 | - | - | 254,026 |
| ໜັງສືຜ່ານແດນ | 843,991 | 146,636 | - | - | 14,759 | 212,835 | - | 47,163 | 274,757 |
| **ສະໜາມບິນສາກົນວັດໄຕ** | **142,310** | **40,477** | **-** | **-** | **-** | **39,950** | **-** | **8,395** | **48,345** |
| ບັດຜ່ານແດນ | - | - | - | - | - | - | - | - | - |
| ໜັງສືຜ່ານແດນ | 142,310 | 40,477 | - | - | - | 39,950 | - | 8,395 | 48,345 |
| **ຫຼວງນ້ຳທາ** | **106,106** | **24,451** | **-** | **-** | **-** | **-** | **-** | **-** | **-** |
| ບັດຜ່ານແດນ | 98,093 | 23,400 | - | - | - | - | - | - | - |
| ໜັງສືຜ່ານແດນ | 8,013 | 1,051 | - | - | - | - | - | - | - |
| **ບໍລິຄຳໄຊ** | **86,243** | **30,367** | **-** | **59** | **18,764** | **18,106** | **3,554** | **1,058** | **41,541** |
| ບັດຜ່ານແດນ | 29,312 | 12,017 | - | - | 3,645 | 3,673 | 3,554 | 1,058 | **11,930** |
| ໜັງສືຜ່ານແດນ | 56,931 | 18,350 | - | 59 | 15,119 | 14,433 | - | - | 29,611 |
| **ຄຳມ່ວນ** | **68,488** | **23,406** | **-** | **112** | **11,421** | **51,676** | **4,135** | **5,620** | **72,964** |
| ບັດຜ່ານແດນ | 6,523 | 772 | - | | 11,421 | 6,790 | 3,183 | 5,620 | 27,014 |
| ໜັງສືຜ່ານແດນ | 61,965 | 22,634 | - | 112 | - | 44,886 | 952 | - | 45,950 |
| **ສະຫວັນນະເຂດ** | **380,913** | **132,841** | **-** | **803** | **16,719** | **78,190** | **705** | **1,617** | **98,034** |
| ບັດຜ່ານແດນ | 156,857 | 65,013 | - | 5 | 12,232 | 6,353 | 682 | 1,548 | 20,820 |
| ໜັງສືຜ່ານແດນ | 224,056 | 67,828 | - | 798 | 4,487 | 71,837 | 23 | 69 | 77,214 |
| **ສະໜາມບິນສາກົນສະຫວັນນະເຂດ** | **502** | **281** | **-** | **-** | **-** | **-** | **-** | **-** | **-** |
| ບັດຜ່ານແດນ | - | - | - | - | - | - | - | - | - |
| ໜັງສືຜ່ານແດນ | 502 | 281 | - | - | - | - | - | - | - |
| **ບໍ່ແກ້ວ** | **65,602** | **20,904** | **-** | **82** | **2,983** | **34,930** | **140** | **812** | **38,947** |
| ບັດຜ່ານແດນ | 31,826 | 9,408 | - | 82 | 2,895 | 24,394 | 140 | 812 | 28,323 |
| ໜັງສືຜ່ານແດນ | 33,776 | 11,496 | - | - | 88 | 10,536 | - | - | 10,624 |
| **ຈຳປາສັກ** | **202,715** | **66,847** | **-** | **10** | **402** | **84,959** | **-** | **-** | **85,371** |
| ບັດຜ່ານແດນ | 75,586 | 24,720 | - | - | 132 | 24,577 | - | - | 24,709 |
| ໜັງສືຜ່ານແດນ | 127,129 | 42,127 | - | 10 | 270 | 60,382 | - | - | 60,662 |
| **ສະໜາມບິນສາກົນຈຳປາສັກ** | **15,106** | **7,705** | **-** | **-** | **-** | **-** | **-** | **-** | **-** |
| ບັດຜ່ານແດນ | - | - | - | - | - | - | - | - | - |
| ໜັງສືຜ່ານແດນ | 15,106 | 7,705 | - | - | - | - | - | - | - |
| **ໄຊຍະບູລີ** | **366,915** | **68,874** | **-** | **7** | **60,080** | **1,624** | **17,072** | **6,963** | **85,746** |
| ບັດຜ່ານແດນ | 156,187 | 27,653 | - | - | 13,952 | - | 17,072 | 6,963 | 37,987 |
| ໜັງສືຜ່ານແດນ | 210,728 | 41,221 | - | 7 | 46,128 | 1,624 | - | - | 47,759 |
| **ຫົວພັນ** | **3,710** | **1,422** | **-** | **707** | **803** | **993** | **180** | **53** | **2,736** |
| ບັດຜ່ານແດນ | 939 | 362 | - | 113 | 246 | 504 | 180 | 53 | 1,096 |
| ໜັງສືຜ່ານແດນ | 2,771 | 1,060 | - | 594 | 557 | 489 | - | - | 1,640 |
| **ສະໜາມບິນສາກົນຫຼວງພະບາງ** | **7,878** | **1,368** | **-** | **-** | **-** | **-** | **-** | **-** | **-** |
| ບັດຜ່ານແດນ | - | - | - | - | - | - | - | - | - |
| ໜັງສືຜ່ານແດນ | 7,878 | 1,368 | - | - | - | - | - | - | - |
| **ຊຽງຂວາງ** | **6,568** | **2,969** | **-** | **59** | **485** | **3,819** | **15** | **-** | **4,378** |
| ບັດຜ່ານແດນ | 1,189 | 529 | - | 2 | 350 | 1,385 | 8 | - | 1,745 |
| ໜັງສືຜ່ານແດນ | 5,379 | 2,440 | - | 57 | 135 | 2,434 | 7 | - | 2,633 |
| **ອັດຕະປື** | **3,842** | **1,648** | **-** | **8** | **610** | **3,047** | **-** | **-** | **3,665** |
| ບັດຜ່ານແດນ | 260 | 77 | - | - | 194 | 756 | - | - | 950 |
| ໜັງສືຜ່ານແດນ | 3,582 | 1,571 | - | 8 | 416 | 2,291 | - | - | 2,715 |
| **ຜົ້ງສາລີ** | **32,682** | **8,767** | **-** | **337** | **1,027** | **4,334** | **800** | **667** | **7,165** |
| ບັດຜ່ານແດນ | 25,407 | 7,322 | - | - | 261 | 2,646 | 800 | 667 | 4,374 |
| ໜັງສືຜ່ານແດນ | 7,275 | 1,445 | - | 337 | 766 | 1,688 | - | - | 2,791 |
| **ສາລະວັນ** | **11,506** | **3,491** | **-** | **24** | **617** | **3,700** | **-** | **-** | **4,341** |
| ບັດຜ່ານແດນ | 3,853 | 1,088 | - | - | - | 647 | - | - | 647 |
| ໜັງສືຜ່ານແດນ | 7,653 | 2,403 | - | 24 | 617 | 3,053 | - | - | 3,694 |
| **ເຊກອງ** | **-** | **-** | **-** | **25** | **1,240** | **106** | **2** | **-** | **1,373** |
| ບັດຜ່ານແດນ | - | - | - | - | 38 | - | - | - | 38 |
| ໜັງສືຜ່ານແດນ | - | - | - | 25 | 1,202 | 106 | 2 | - | 1,335 |

## ການທ່ອງທ່ຽວຢູ່ຫຼວງພະບາງ

ແຂວງຫຼວງພະບາງມີສະຖານທ່ອງທ່ຽວທີ່ມີຊື່ສຽງລະດັບໂລກ ເປັນຕົ້ນ ເມືອງມໍລະດົກໂລກ (ນະຄອນຫຼວງພະບາງ) ໂດຍ UNESCO ໃນປີ 1995. ເຮັດໃຫ້ໄດ້ຮັບຄວາມສົນໃຈຈາກນັກທ່ອງທ່ຽວທົ່ວໂລກ ໂດຍສະເພາະການຮັກສາເອກະລັກຂອງຄວາມເປັນລາວໃນຮູບແບບຂອງຫຼວງພະບາງ ຈຶ່ງເປັນຈຸດໝາຍປາຍທາງທີ່ສຳຄັນ ໃນການເດີນທາງຂອງນັກທ່ອງທ່ຽວພາຍໃນ ແລະ ສາກົນ. ສະພາບການທ່ອງທ່ຽວຂອງແຂວງຫຼວງພະບາງໃນປີ 2022 ກໍຄ້າຍຄືກັນກັບສະພາບການທ່ອງທ່ຽວຂອງພາກພື້ນ ແລະ ສາກົນ ນັກທ່ອງທ່ຽວຈາກຕ່າງປະເທດເລີ່ມເຂົ້າມາຫຼາຍໃນຊ່ວງກາງປີ ພາຍ ຫຼັງທີ່ເປີດປະເທດແບບເຕັມຮູບແບບ ຈຶ່ງເຮັດໃຫ້ຈຳນວນນັກທ່ອງທ່ຽວ ຍັງບໍ່ທັນຫຼາຍເທົ່າກັບໄລຍະກ່ອນການແຜ່ລະ ບາດຂອງພະຍາດໂຄວິດ-19.

ແຕ່ເຖິງຢ່າງໃດກໍຕາມ, ສະພາບການທ່ອງທ່ຽວຢູ່ແຂວງຫຼວງພະບາງ ໄດ້ມີການຟື້ນຕົວຢ່າງໄວວາ ເປັນຕົ້ນແມ່ນນັກທ່ອງທ່ຽວພາຍໃນປະເທດ. ຊຶ່ງປັດໄຈທີ່ສຳຄັນທີ່ຊ່ວຍໃຫ້ຟື້ນຕົວໄດ້ຢ່າງໄວວາ ແມ່ນການເປີດນຳໃຊ້ລົດໄຟ ລາວ-ຈີນ ເລີ່ມແຕ່ວັນທີ 2 ທັນວາ 2021 ເປັນຕົ້ນມາ, ເຮັດໃຫ້ການເດີນທາງໄປເມືອງມໍລະດົກໂລກ (ນະຄອນຫຼວງພະບາງ) ສະດວກສະບາຍຫຼາຍຂຶ້ນກວ່າເກົ່າ. ຖ້າຫາກເດີນທາງດ້ວຍການຂັບລົດສ່ວນຕົວຕ້ອງໃຊ້ເວລາປະມານ 6-8 ຊົ່ວໂມງ, ຖ້າເດີນທາງດ້ວຍລົດສາທາລະນະ ຕ້ອງໃຊ້ເວລາປະມານ 11-13 ຊົ່ວໂມງ, ຖ້າເດີນທາງດ້ວຍເຮືອບິນ ຈະມີຄ່າໃຊ້ຈ່າຍຂ້ອນຂ້າງສູງ. ການເດີນທາງໄປຫຼວງພະບາງໃນເມື່ອກ່ອນ ຕ້ອງໃຊ້ເວລາ ໄປ-ກັບ ປະມານ 3-5 ວັນ, ແຕ່ຫຼັງຈາກທີ່ມີການເປີດນຳໃຊ້ລົດໄຟ ລາວ-ຈີນ ແລ້ວ, ການເດີນທາງເຫຼືອພຽງ 2 ຊົ່ວໂມງ 30 ນາທີ ສາມາດເດີນທາງໄປກັບໄດ້ໃນເວລາ 2 ວັນ ເຮັດໃຫ້ກິດຈະກຳການທ່ອງທ່ຽວ ແລະ ການເດີນທາງໄປ-ມາ ໄດ້ງ່າຍຂຶ້ນຫຼາຍ.

ກ່ອນການແຜ່ລະບາດຂອງພະຍາດໂຄວິດ-19, ໃນປີ 2017 ມີນັກທ່ອງທ່ຽວມາທ່ຽວແຂວງຫຼວງພະບາງ ທັງໝົດ 655,412 ເທື່ອຄົນ, ປີ 2018 ມີຈຳນວນ 757,019 ເທື່ອຄົນ ແລະ ປີ 2019 ຈຳນວນ 880,035 ເທື່ອຄົນ ຊຶ່ງເພີ່ມຂຶ້ນໃນທຸກປີ. ໃນວັນທີ 19 ເດືອນ ມີນາ ປີ 2020, ໄດ້ມີການປະກາດຫ້າມການເດີນທາງເຂົ້າ-ອອກປະເທດ ແລະ ຫ້າມປະຊາຊົນ ອອກຈາກທີ່ພັກອາໄສຂອງຕົນປະມານ 2 ເດືອນ ເຮັດໃຫ້ຈຳນວນນັກທ່ອງທ່ຽວ ທັງໝົດມີພຽງ 275,847 ເທື່ອຄົນ. ຫຼັງຈາກນັ້ນ, ໃນປີ 2021 ໄດ້ມີມາດຕະການ ປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ການເດີນທາງລະຫວ່າງແຂວງຫາແຂວງມີການຈຳກັດພື້ນທີ່ຢ່າງເຂັ້ມງວດ ມີການປິດການໃຫ້ບໍລິການທີ່ພັກເປັນຈຳນວນຫຼາຍ ຈຶ່ງເຮັດໃຫ້ນັກທ່ອງທ່ຽວທີ່ໄປຫຼວງພະບາງ ມີແຕ່ນັກທ່ອງທ່ຽວພາຍໃນປະເທດ ຈຳນວນທັງໝົດພຽງແຕ່ 69,731 ເທື່ອຄົນ. ແຕ່ພາຍຫຼັງເປີດຮັບນັກທ່ອງທ່ຽວຈາກຕ່າງປະເທດ, ນັກທ່ອງທ່ຽວສາມາດເດີນທາງພາຍໃນປະເທດໄດ້ ພ້ອມກັບການເປີດນຳໃຊ້ລົດໄຟ ລາວ-ຈີນ, ປີ 2022 ການທ່ອງທ່ຽວຈຶ່ງສາມາດຟື້ນຕົວໄດ້ໃນລະດັບສູງສາມາດຕ້ອນຮັບນັກທ່ອງທ່ຽວໄດ້ເຖິງ 301,482 ເທື່ອຄົນ.

ໃນການເດີນທາງເຂົ້າມາຢ້ຽມຢາມນະຄອນຫຼວງພະບາງນັ້ນ ຖ້າແຍກເປັນນັກທ່ອງທ່ຽວພາຍໃນປະເທດ ພົບວ່າປີ 2017 ຈຳນວນ 182,470 ເທື່ອຄົນ, ປີ 2018 178,409 ເທື່ອຄົນ, ປີ 2019 221,934 ເທື່ອຄົນ, ປີ 2020 133,212 ເທື່ອຄົນ, ປີ 2021 69,731 ເທື່ອຄົນ ແລະ ປີ 2022 280,823 ເທື່ອຄົນ ນັບວ່າເປັນຈຳນວນນັກທ່ອງທ່ຽວທີ່ສູງສຸດນັບຕັ້ງແຕ່ປີ 2017 ເປັນຕົ້ນມາ. ສຳລັບນັກທ່ອງທ່ຽວຕ່າງປະເທດໃນຊ່ວງກ່ອນການແຜ່ລະບາດຂອງພະຍາດໂຄວິດ-19 ຕົ້ນຕໍແມ່ນມາຈາກປະເທດໄທ, ສປ ຈີນ, ສະຫະລັດອາເມລິກາ, ຝຣັ່ງ, ເຢຍລະມັນ ແລະ ອັງກິດ. ເປັນກຸ່ມນັກທ່ອງທ່ຽວທີ່ເຂົ້າມາແຂວງຫຼວງພະບາງຫຼາຍທີ່ສຸດ ທັງນີ້ເນື່ອງຈາກປະເທດໄທ ແລະ ສປ ຈີນ ມີຄວາມສະດວກໃນການເດີນທາງຫຼາຍທີ່ສຸດ ເມື່ອທຽບກັບກຸ່ມນັກທ່ອງທ່ຽວຈາກປະເທດອື່ນໆ. ສຳລັບສະຫະລັດອາເມລິກາ ໄດ້ຮັບຄວາມສົນໃຈໃນການ

ມາຢ້ຽມຢາມເພີ່ມຂຶ້ນ ຕັ້ງແຕ່ມີການມາຢ້ຽມຢາມຂອງຜູ້ນຳສະຫະລັດອາເມລິກາໃນປີ 2016 ເຊິ່ງມີຈຳນວນເພີ່ມຂຶ້ນຢ່າງຊັດເຈນໃນປີ 2019 ທີ່ເພີ່ມຂຶ້ນ 66.33% ຈາກປີ 2018 ຫຼື ຈຳນວນ 57,020 ເທື່ອຄົນ ໃນປີ 2022.

ເຖິງຢ່າງໃດກໍຕາມ, ໃນປີ 2019 ກ່ອນມີການແຜ່ລະບາດຂອງພະຍາດໂຄວິດ-19 ກຸ່ມນັກທ່ອງທ່ຽວທີ່ມີຄວາມສຳຄັນຫຼາຍທີ່ສຸດຂອງແຂວງຫຼວງພະບາງແມ່ນ ກຸ່ມນັກທ່ອງທ່ຽວຈາກເອີຣົບ ຈຳນວນ 213,850 ເທື່ອຄົນ ແລະ ກຸ່ມນັກທ່ອງທ່ຽວຈາກອາເມລິກາ ຈຳນວນ 115,682 ເທື່ອຄົນ. ທັງ 2 ພາກພື້ນນີ້ເປັນນັກທ່ອງທ່ຽວທີ່ໃຊ້ເວລາໃນການພັກຜ່ອນທີ່ດົນກວ່າໝູ່ ແລະ ມີການໃຊ້ຈ່າຍຕໍ່ຄົນຕໍ່ວັນ ສູງກວ່ານັກທ່ອງທ່ຽວຈາກພາກພື້ນອື່ນໆ. ຖືວ່າເປັນນັກທ່ອງທ່ຽວທີ່ມີມູນຄ່າທາງດ້ານເສດຖະກິດສູງ, ແຕ່ນັກທ່ອງທ່ຽວກຸ່ມນີ້ຍັງບໍ່ທັນເດີນທາງກັບເຂົ້າມາຢ້ຽມຢາມແຂວງຫຼວງພະບາງຫຼາຍ ໃນປີ 2022. ຊຶ່ງນັກທ່ອງທ່ຽວຈາກເອີຣົບ ເດີນທາງກັບມາຫຼວງພະບາງທັງໝົດ 5,930 ເທື່ອຄົນ ສະເລ່ຍເປັນ 2.77% ເມື່ອທຽບກັບປີ 2019 ແລະ ນັກທ່ອງທ່ຽວຈາກອາເມລິກາ ຈຳນວນ 2,656 ເທື່ອຄົນ, ສະເລ່ຍເປັນ 1.70%.

ສຳລັບນັກທ່ອງທ່ຽວຈາກພາກພື້ນອາຊີ ແລະ ປາຊີຟິກ ໃນປີ 2022, ນັກທ່ອງທ່ຽວທີ່ມາຈາກ ສປ ຈີນ ແລະ ສ. ເກົາຫຼີ ຍັງບໍ່ທັນເດີນທາງກັບເຂົ້າມາແຂວງຫຼວງພະບາງຫຼາຍເທົ່າທີ່ຄວນມີພຽງ ຈຳນວນ 1,648 ເທື່ອຄົນ, ສະເລ່ຍ 0.87% ເມື່ອທຽບກັບປີ 2019. ເນື່ອງຈາກ ສປ ຈີນ ຍັງບໍ່ທັນອານຸຍາດໃຫ້ປະຊາຊົນ ເດີນທາງອອກນອກປະເທດໄດ້ໃນປີ 2022 ຊຶ່ງກຸ່ມປະເທດທີ່ມີນັກທ່ອງທ່ຽວທີ່ກັບເຂົ້າມາຢ້ຽມຢາມ ແຂວງຫຼວງພະບາງໄດ້ໄວທີ່ສຸດແມ່ນ ກຸ່ມນັກທ່ອງທ່ຽວຈາກບັນດາປະເທດສະມາຊິກອາຊຽນ ໂດຍສະເພາະປະເທດໄທ. ໃນປີ 2022 ມີນັກທ່ອງທ່ຽວຈຳນວນ 10,084 ເທື່ອຄົນ ສະເລ່ຍ 9.29%, ໃນນີ້ມີນັກທ່ອງທ່ຽວຈາກປະເທດໄທ ຈຳນວນ 9,118 ເທື່ອຄົນ ຊຶ່ງເປັນນັກທ່ອງທ່ຽວສ່ວນໃຫຍ່ຂອງນັກທ່ອງທ່ຽວກຸ່ມນີ້ ເມື່ອທຽບກັບປີ 2019 ແລະ ມີອັດຕາສ່ວນ 11.71%.

# ຕາຕະລາງທີ 19: ຈຳນວນນັກທ່ອງທ່ຽວທີ່ຢ້ຽມຢາມແຂວງຫຼວງພະບາງ ແຕ່ປີ 2017-2022

| ປະເທດ | 2017 | | 2018 | | 2019 | | 2020 | | % ∇ | 2021 | 2022 |
|---|---|---|---|---|---|---|---|---|---|---|---|
| **ລວມທັງໝົດ** | **655,412** | | **755,019** | | **860,035** | | **275,647** | | **-68** | **69,731** | **301,462** |
| **ລາວ** | **182,470** | | **178,409** | | **221,934** | | **133,212** | | **-40** | **69,731** | **280,823** |
| **ນັກທ່ອງທ່ຽວສາກົນ** | **472,942** | **100%** | **576,610** | **100%** | **638,101** | **100%** | **142,435** | **100%** | **-78** | **-** | **20,639** |
| **ອາຊຽນ** | **73,719** | **15.59** | **84,827** | **14.71** | **105,496** | **16.53** | **31,471** | **22.09** | **-70** | **-** | **10,084** |
| ບຣູໄນ | 56 | 0.01 | 62 | 0.01 | 248 | 0.04 | 38 | 0.03 | -85 | - | 12 |
| ກຳປູເຈຍ | 737 | 0.16 | 290 | 0.05 | 882 | 0.14 | 325 | 0.23 | -63 | - | 126 |
| ອິນໂດເນເຊຍ | 146 | 0.03 | 150 | 0.03 | 1,454 | 0.23 | 382 | 0.27 | -74 | - | 102 |
| ມາເລເຊຍ | 124 | 0.03 | 349 | 0.06 | 4,884 | 0.77 | 1,146 | 0.80 | -77 | - | 148 |
| ມຽນມາ | 454 | 0.10 | 166 | 0.03 | 481 | 0.08 | 336 | 0.24 | -30 | - | 91 |
| ຟິລິບປິນ | 153 | 0.03 | 317 | 0.05 | 3,050 | 0.48 | 541 | 0.38 | -82 | - | 134 |
| ສິງກະໂປ | 162 | 0.03 | 226 | 0.04 | 6,985 | 1.09 | 2,348 | 1.65 | -66 | - | 114 |
| ໄທ | 64,372 | 13.61 | 75,035 | 13.01 | 77,892 | 12.21 | 24,418 | 17.14 | -69 | - | 9,118 |
| ຫວຽດນາມ | 7,515 | 1.59 | 8,232 | 1.43 | 9,620 | 1.51 | 1,937 | 1.36 | -80 | - | 239 |
| **ອາຊີ ແລະ ປາຊີຟິກ** | **136,530** | **28.87** | **171,726** | **29.78** | **188,725** | **29.58** | **44,173** | **31.01** | **-77** | **-** | **1,648** |
| ອົດສະຕຣາລີ | 15,883 | 3.36 | 18,719 | 3.25 | 19,301 | 3.02 | 3,440 | 2.42 | -82 | - | 505 |
| ຈີນ | 66,392 | 14.04 | 81,052 | 14.06 | 90,567 | 14.19 | 19,926 | 13.99 | -78 | - | 225 |
| ອິນເດຍ | 247 | 0.05 | 304 | 0.05 | 3,598 | 0.56 | 1,580 | 1.11 | -56 | - | 158 |
| ຍີ່ປຸ່ນ | 17,930 | 3.79 | 19,213 | 3.33 | 19,312 | 3.03 | 7,015 | 4.93 | -64 | - | 451 |
| ເກົາຫລີໃຕ້ | 34,578 | 7.31 | 38,470 | 6.67 | 38,531 | 6.04 | 2,666 | 1.87 | -93 | - | 181 |
| ນິວຊີແລນ | 257 | 0.05 | 616 | 0.11 | 2,729 | 0.43 | 305 | 0.21 | -89 | - | 64 |
| ໄຕ້ຫວັນ | 1,189 | 0.25 | 3,261 | 0.57 | 4,351 | 0.68 | 1,192 | 0.84 | -73 | - | 21 |
| ອື່ນໆ | 54 | 0.01 | 10,091 | 1.75 | 10,336 | 1.62 | 8,049 | 5.65 | -22 | - | 43 |
| **ເອີຣົບ** | **178,784** | **37.80** | **215,322** | **37.34** | **213,850** | **33.51** | **41,261** | **28.97** | **-81** | **-** | **5,930** |
| ໂອຕຼິດ | 3,415 | 0.72 | 4,549 | 0.79 | 4,738 | 0.74 | 1,031 | 0.72 | -78 | - | 132 |
| ແບນຊິກ | 1,127 | 0.24 | 1,248 | 0.22 | 4,190 | 0.66 | 1,133 | 0.80 | -73 | - | 201 |
| ເດນມາກ | 3,582 | 0.76 | 3,887 | 0.67 | 3,965 | 0.62 | 912 | 0.64 | -77 | - | 124 |
| ແຟງລັງ | 4,530 | 0.96 | 5,616 | 0.97 | 5,732 | 0.90 | 667 | 0.47 | -88 | - | 47 |
| ຝຣັ່ງ | 31,468 | 6.65 | 33,480 | 5.81 | 33,592 | 5.26 | 7,170 | 5.03 | -79 | - | 1,343 |
| ເຢຍລະມັນ | 30,749 | 6.50 | 32,291 | 5.60 | 32,561 | 5.10 | 6,342 | 4.45 | -81 | - | 790 |
| ເກຼັກ | 859 | 0.18 | 946 | 0.16 | 834 | 0.13 | 349 | 0.25 | -58 | - | 11 |
| ອີຕາລີ | 13,156 | 2.78 | 15,673 | 2.72 | 16,055 | 2.52 | 3,389 | 2.38 | -79 | - | 197 |
| ໂຮນລັງ | 8,953 | 1.89 | 9,725 | 1.69 | 10,601 | 1.66 | 1,885 | 1.32 | -82 | - | 291 |
| ນອກແວ | 4,382 | 0.93 | 4,697 | 0.81 | 4,732 | 0.74 | 1,011 | 0.71 | -79 | - | 26 |
| ລັດເຊຍ | 14,874 | 3.14 | 16,810 | 2.92 | 17,384 | 2.72 | 238 | 0.17 | -99 | - | 90 |
| ແອດສະປາຍ | 7,147 | 1.51 | 8,713 | 1.51 | 8,792 | 1.38 | 1,618 | 1.14 | -82 | - | 359 |
| ຊູແອັດ | 4,899 | 1.04 | 5,972 | 1.04 | 5,923 | 0.93 | 1,070 | 0.75 | -82 | - | 65 |
| ສະວິດສະແລນ | 9,367 | 1.98 | 9,757 | 1.69 | 9,538 | 1.49 | 2,113 | 1.48 | -78 | - | 314 |
| ອັງກິດ | 33,965 | 7.18 | 34,795 | 6.03 | 35,007 | 5.49 | 4,924 | 3.46 | -86 | - | 1,004 |
| ອື່ນໆ | 6,311 | 1.33 | 27,163 | 4.71 | 20,206 | 3.17 | 7,409 | 5.20 | -63 | - | 936 |
| **ອາເມລິກາ** | **74,407** | **15.73** | **90,926** | **15.77** | **115,682** | **18.13** | **23,425** | **16.45** | **-80** | **-** | **2,656** |
| ການາດາ | 21,937 | 4.64 | 22,497 | 3.90 | 25,973 | 4.07 | 3,323 | 2.33 | -87 | - | 304 |
| ສະຫະລັດອາເມລິກາ | 29,178 | 6.17 | 34,280 | 5.95 | 57,020 | 8.94 | 13,282 | 9.32 | -77 | - | 2,090 |
| ອື່ນໆ | 23,292 | 4.92 | 34,149 | 5.92 | 32,689 | 5.12 | 6,820 | 4.79 | -79 | - | 262 |
| **ອາຟຣິກາ ແລະ ຕາເວັນອອກກາງ** | **9,502** | **2.01** | **13,809** | **2.39** | **14,348** | **2.25** | **2,105** | **1.48** | **-85** | **-** | **321** |
| ອິດສະຣາແອນ | 5,324 | 1.13 | 5,791 | 1.00 | 5,130 | 0.80 | 692 | 0.49 | -87 | - | 263 |
| ອື່ນໆ | 4,178 | 0.88 | 8,018 | 1.39 | 9,218 | 1.44 | 1,413 | 0.99 | -85 | - | 58 |

## ສະພາບການທ່ອງທ່ຽວພາຍໃນປີ 2022

ນັບແຕ່ ປີ 2022 ມີນັກທ່ອງທ່ຽວພາຍໃນ ຈຳນວນ 1,685,359 ເທື່ອຄົນ, ເພີ່ມຂຶ້ນ 103% ຖ້າທຽບໃສ່ປີ 2021, ສ້າງລາຍຮັບໄດ້ 273,028,158 ໂດລາສະຫະລັດ, ເພີ່ມຂຶ້ນຈາກໄລຍະດຽວກັນຂອງ ປີ 2021 192%. ແຂວງທີ່ມີນັກທ່ອງທ່ຽວພາຍໃນ ເຂົ້າໄປທ່ອງທ່ຽວຫຼາຍທີ່ສຸດ ແມ່ນແຂວງຫຼວງພະບາງ, ແຂວງສະຫວັນນະເຂດ, ແຂວງວຽງຈັນ, ແຂວງຄຳມ່ວນ, ແຂວງອຸດົມໄຊ, ແຂວງຈຳປາສັກ ແລະ ແຂວງອື່ນໆ ຕາມລຳດັບ.

ການເປີດນຳໃຊ້ເສັ້ນທາງດ່ວນ ນະຄອນຫຼວງວຽງຈັນ-ວັງວຽງ ແລະ ການເປີດນຳໃຊ້ລົດໄຟ ລາວ-ຈີນ ເຮັດໃຫ້ການເດີນທາງມີຄວາມສະດວກສະບາຍຫຼາຍຂຶ້ນ ແລະ ເປັນການກະຕຸ້ນໃຫ້ນັກທ່ອງທ່ຽວພາຍໃນ ເດີນທາງຫຼາຍຂຶ້ນ ໂດຍສະເພາະແມ່ນຢູ່ແຂວງວຽງຈັນ ທີ່ມີທັງທາງດ່ວນ ແລະ ລົດໄຟເຂົ້າເຖິງ, ລວມທັງຈຸດໝາຍປາຍທາງການທ່ອງທ່ຽວໃຫມ່ຢູ່ ເມືອງເຟືອງ. ແຂວງຫຼວງພະບາງ ແລະ ອຸດົມໄຊ ມີ ລົດໄຟແລ່ນຜ່ານ ເຮັດໃຫ້ການເດີນທາງສະດວກຫຼາຍຂຶ້ນ ຈຶ່ງເຮັດໃຫ້ນັກທ່ອງທ່ຽວເຂົ້າໄປທ່ຽວໃນ 3 ແຂວງເພີ່ມຂຶ້ນໃນປີ 2022.

ໃນປີ 2019, ຢູ່ແຂວງຫຼວງພະບາງ ມີອັດຕາສ່ວນຂອງນັກທ່ອງທ່ຽວພາຍໃນ 6.33% ປ່ຽນເປັນ 16.66% ມີຈຳນວນທັງໝົດ 280,823 ເທື່ອຄົນ ເປັນຈຳນວນທີ່ສູງທີ່ສຸດຕັ້ງແຕ່ປີ 2016 ເປັນຕົ້ນມາ ນັກທ່ອງທ່ຽວພາຍໃນປະເທດໄປທ່ຽວແຂວງວຽງຈັນໃນອັດຕາສ່ວນ 12.69% ເປັນ 14.42% ແລະ ແຂວງອຸດົມໄຊ ມີນັກທ່ອງທ່ຽວພາຍໃນ ປີ 2019 ໃນອັດຕາສ່ວນ 2.91% ເປັນ 10.27%, ນອກນັ້ນແຂວງຄຳມ່ວນ ເປັນພື້ນທີ່ ທີ່ບໍ່ໄດ້ຢູ່ໃນເສັ້ນທາງຂອງທາງດ່ວນ ແລະ ທາງລົດໄຟ ແຕ່ກໍມີ ອັດຕາເພີ່ມຂຶ້ນເຊັ່ນດຽວກັນ ຈາກ 6,34% ເປັນ 13.28% ເນື່ອງຈາກການໄດ້ຮັບການສົ່ງເສີມໃຫ້ເກີດການທ່ອງທ່ຽວພາຍໃນປະເທດ ແລະ  ມີຜະລິດຕະພັນການທ່ອງທ່ຽວທີ່ໂດດເດັ່ນ ເຊັ່ນ: ພູຜາມ່ານ ທີ່ຢູ່ບໍ່ໄກຈາກນະຄອນຫຼວງວຽງຈັນ, ແຂວງສະຫວັນນະເຂດ ເປັນແຂວງທີ່ມີປະຊາກອນສູງທີ່ສຸດໃນ ສປປ ລາວ ການທ່ອງທ່ຽວພາຍໃນປະເທດເລີ່ມໄດ້ຮັບຄວາມນິຍົມຕັ້ງແຕ່ປີ 2020 ມີຈຳນວນ 274,122 ເທື່ອຄົນ ຊຶ່ງເປັນປີທີ່ມີການປິດປະເທດ ແລະ ຄົນລາວໄດ້ຫັນມາເດີນທາງພາຍໃນປະເທດຫຼາຍຂຶ້ນ ແຕ່ໃນປີ 2022 ມີຈຳນວນເຫຼືອພຽງ 223,823 ເທື່ອຄົນ, ສຳລັບແຂວງທີ່ມີອັດຕາສ່ວນຫຼຸດລົງແມ່ນ ແຂວງຈຳປາສັກ ຈາກປີ 2019 ມີອັດຕາສ່ວນທີ່ 11.69% ເຫຼືອ 5.89% ແລະ ແຂວງສະຫວັນນະເຂດ ມີອັດຕາສ່ວນໃນປີ 2019 ຢູ່ທີ່ 20.27% ເຫຼືອ 14.42%,ເນື່ອງຈາກມີການກໍ່ສ້າງຂະຫຍາຍເສັ້ນທາງເຮັດໃຫ້ການເດີນທາງມີຄວາມຫຍຸ້ງຍາກ.

ຮຽບຮຽງຄືນໃຫມ່

ຖ້າສັງເກດເປັນລາຍເດືອນ ພາຍໃນປີ 2022, ມີຂໍ້ສັງເກດທີ່ໜ້າສົນໃຈກ່ຽວກັບພຶດຕິກຳ ຂອງການທ່ອງທ່ຽວພາຍໃນປະເທດ ດັ່ງນີ້:

ແຂວງຫຼວງພະບາງ ມີນັກທ່ອງທ່ຽວພາຍໃນ ໄປທ່ອງທ່ຽວເປັນຈຳນວນຫຼາຍໃນຊ່ວງເດືອນ ທັນວາ ປີ 2021 ເຮັດໃຫ້ຄົນລາວຈຳນວນຫຼາຍທີ່ບໍ່ມີໂອກາດໄປແຂວງຫຼວງພະບາງ ໄດ້ມີໂອກາດໄປສະດວກຫຼາຍຂຶ້ນ ຈາກແຕ່ກ່ອນຕ້ອງຂັບລົດສ່ວນຕົວປະມານ 6-8 ຊົ່ວໂມງ ຫຼື ລົດໂດຍສານປະມານ 11-13 ຊົ່ວໂມງ ຫຼຸດລົງເຫຼືອພຽງແຕ່ 2 ຊົ່ວໂມງ 30 ນາທີ ແຕ່ຫຼັງຈາກມີການເປີດປະເທດຢ່າງເຕັມຮູບແບບ ຈຳນວນນັກທ່ອງທ່ຽວພາຍໃນປະເທດກໍຫຼຸດລົງ ເນື່ອງຈາກການເຂົ້າມາຂອງນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາໃຊ້ພື້ນທີ່ ແລະ ບໍລິການທີ່ພັກແຮມເປັນຈຳນວນຫຼາຍ ແລະ ມີການປັບຂຶ້ນລາຄາຕາມກົນໄກຕະຫຼາດ ເຮັດໃຫ້ນັກທ່ອງທ່ຽວພາຍໃນປະເທດຫຼຸດລົງຕັ້ງແຕ່ ເດືອນ ຕຸລາ ຈົນຮອດເດືອນທັນວາ ສະເລ່ຍ 13,000 ເທື່ອຄົນ ຈາກ 27,000 ເທື່ອຄົນ.

ແຂວງວຽງຈັນ ມີລັກສະນະການເພີ່ມຂຶ້ນຂອງນັກທ່ອງທ່ຽວໃນປະເທດຢ່າງເຫັນໄດ້ຊັດເຈນ ເນື່ອງຈາກມີການເປີດພື້ນທີ່ທ່ອງທ່ຽວໃໝ່ ມີການສ້າງໂຮງແຮມ ແລະ ສະຖານທີ່ຮອງຮັບນັກທ່ອງທ່ຽວເພີ່ມຂຶ້ນຢ່າງຕໍ່ເນື່ອງ ພ້ອມທັງມີການ

ປະຊາສຳພັນຢ່າງຕໍ່ເນື່ອງ ແລະ ສາມາດຂັບລົດຈາກນະຄອນຫຼວງວຽງຈັນໄປໄດ້ຢ່າງສະດວກ ທັງເມືອງວັງວຽງ ແລະ ເມືອງເຟືອງ ເຮັດໃຫ້ມີນັກທ່ອງທ່ຽວພາຍໃນປະເທດໃນເດືອນ ມັງກອນ ຈຳນວນ 6,078 ເທື່ອຄົນ ເພີ່ມຂຶ້ນເປັນ 24,789 ເທື່ອຄົນ ໃນເດືອນ ມິຖຸນາ ແລະ ເພີ່ມຂຶ້ນສູງສຸດໃນເດືອນ ທັນວາ ຢູ່ທີ່ 71,169 ເທື່ອຄົນ ເຫັນໄດ້ວ່າ ນັກທ່ອງທ່ຽວພາຍໃນປະເທດ ຈະມີການຍັບຍ້າຍຈາກແຂວງຫຼວງພະບາງທີ່ເປັນເມືອງມໍລະດົກໂລກ ມາທີ່ແຂວງວຽງຈັນທີ່ເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ ເນື່ອງຈາກມີຄວາມສະດວກສະບາຍ ແລະ ຄ່າໃຊ້ຈ່າຍທີ່ໜ້ອຍກວ່າໃນການທ່ອງທ່ຽວ.

ແຂວງຄຳມ່ວນ ເປັນແຫຼ່ງທ່ອງທ່ຽວທີ່ມີນັກທ່ອງທ່ຽວຕາມລະດູການ ໂດຍສະເພາະໃນຊ່ວງເທດສະການ ບຸນປີໃໝ່ລາວ ເປັນຊ່ວງວັນພັກລັດຖະການ ເຮັດໃຫ້ມີນັກທ່ອງທ່ຽວເຂົ້າໄປທ່ອງທ່ຽວ ຫຼາຍກວ່າປົກກະຕິ ຈາກ 11,000-17,000 ເທື່ອຄົນ ເປັນ 53,275 ເທື່ອຄົນ ເນື່ອງຈາກມີສະຖານທີ່ທ່ອງທ່ຽວຢູ່ໃກ້ກັນ ແລະ ມີກິດຈະກຳໃຫ້ນັກທ່ອງທ່ຽວໄດ້ເລືອກຢ່າງຫຼາກຫຼາຍ ແລະ ມີສະຖານທີ່ພັກແຮມເປັນຈຳນວນຫຼາຍແບບຫຼາຍລາຄາ.

## ຕາຕະລາງທີ 20: ນັກທ່ອງທ່ຽວພາຍໃນ ແຕ່ປີ 2016-2022

| ແຂວງ | 2016 | 2017 | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|---|---|
| **ລວມທັງໝົດ** | **1,986,738** | **2,236,914** | **2,818,576** | **2,350,851** | **1,581,100** | **828,592** | **1,685,359** |
| ອັດຕະປື | 27,571 | 28,840 | 85,549 | 66,793 | 41,247 | 16,585 | 58,039 |
| ບໍ່ແກ້ວ | 42,561 | 48,565 | 53,020 | 52,442 | 17,932 | 6,058 | 10,982 |
| ບໍລິຄໍາໄຊ | 60,875 | 60,950 | 73,115 | 134,169 | 68,926 | 28,228 | 50,736 |
| ຈໍາປາສັກ | 399,692 | 479,838 | 329,609 | 292,093 | 25,122 | 73,455 | 99,266 |
| ຫົວພັນ | 12,642 | 17,707 | 30,682 | 23,401 | 12,226 | 11,318 | 12,488 |
| ຄໍາມ່ວນ | 163,799 | 135,516 | 140,336 | 149,078 | 274,122 | 203,516 | 223,854 |
| ຫຼວງນໍ້າທາ | 14,754 | 242,883 | 182,392 | 40,549 | 36,955 | 23,586 | 35,750 |
| ຫຼວງພະບາງ | 173,733 | 182,470 | 178,409 | 221,934 | 133,212 | 69,731 | 280,823 |
| ອຸດົມໄຊ | 78,148 | 71,597 | 82,063 | 112,118 | 93,525 | 118,469 | 173,143 |
| ຜົ້ງສາລີ | 40,063 | 60,807 | - | 8,623 | 39,910 | 29,418 | 34,776 |
| ສາລະວັນ | 65,025 | 66,700 | 73,383 | 82,450 | 17,294 | 20,653 | 79,727 |
| ສະຫວັນນະເຂດ | 335,279 | 341,364 | 369,840 | 476,697 | 434,325 | 55,269 | 243,036 |
| ເຊກອງ | 13,121 | 10,764 | 26,409 | 53,559 | 38,289 | 17,266 | 23,075 |
| ນະຄອນຫຼວງວຽງຈັນ | 65,680 | 55,953 | 706,677 | 144,232 | 10,504 | 4,698 | 29,802 |
| ວຽງຈັນ | 363,061 | 353,874 | 357,836 | 382,139 | 261,562 | 104,599 | 230,865 |
| ໄຊສົມບູນ | 19,022 | 15,272 | 19,569 | 17,465 | 15,175 | 10,215 | 15,635 |
| ໄຊຍະບູລີ | 99,892 | 15,928 | 42,229 | 29,222 | 17,923 | 9,988 | 22,698 |
| ຊຽງຂວາງ | 11,820 | 47,886 | 67,458 | 63,887 | 42,851 | 25,540 | 60,664 |

## ເສັ້ນສະແດງທີ 7: ຈໍານວນນັກທ່ອງທ່ຽວພາຍໃນ ແຕ່ປີ 2016-2022



# ຕາຕະລາງທີ 21: ນັກທ່ອງທ່ຽວພາຍໃນທີ່ເຂົ້າມາຢ້ຽມຢາມແຂວງ ແຕ່ລະເດືອນ ໃນປີ 2022

| ແຂວງ | 2022 | | | | | | | | | | | | ລວມ |
|---|---|---|---|---|---|---|---|---|---|---|---|---|---|
| | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ | ທັງໝົດ |
| **ລວມ** | **108,214** | **99,459** | **112,701** | **193,426** | **147,125** | **146,046** | **133,429** | **144,814** | **133,770** | **119,843** | **147,394** | **199,138** | **1,685,359** |
| ອັດຕະປື | 1,115 | 1,464 | 2,982 | 4,104 | 7,594 | 7,006 | 6,114 | 6,529 | 6,309 | 5,122 | 4,934 | 4,766 | **58,039** |
| ບໍ່ແກ້ວ | 144 | 171 | 203 | 247 | 223 | 299 | 808 | 1,816 | 2,100 | 2,207 | 911 | 1,853 | **10,982** |
| ບໍລິຄຳໄຊ | 1,302 | 966 | 771 | 2,685 | 2,625 | 3,079 | 5,826 | 5,570 | 7,406 | 6,758 | 6,337 | 7,411 | **50,736** |
| ຈຳປາສັກ | 4,673 | 7,443 | 7,341 | 7,047 | 4,472 | 7,151 | 5,501 | 7,505 | 12,427 | 11,737 | 10,863 | 13,106 | **99,266** |
| ຫົວພັນ | 873 | 946 | 1,248 | 1,538 | 1,128 | 854 | 789 | 833 | 809 | 944 | 865 | 1,661 | **12,488** |
| ຄຳມ່ວນ | 12,176 | 11,031 | 13,153 | 53,275 | 33,921 | 17,012 | 13,339 | 17,915 | 16,632 | 11,026 | 12,424 | 11,950 | **223,854** |
| ຫຼວງນ້ຳທາ | 2,064 | 2,189 | 3,031 | 3,078 | 2,844 | 3,461 | 2,807 | 2,836 | 2,710 | 3,881 | 3,627 | 3,222 | **35,750** |
| ຫຼວງພະບາງ | 36,733 | 22,805 | 26,266 | 27,904 | 27,024 | 25,003 | 27,228 | 25,852 | 21,993 | 14,664 | 14,420 | 10,931 | **280,823** |
| ອຸດົມໄຊ | 15,210 | 14,814 | 17,311 | 18,715 | 14,265 | 13,489 | 13,313 | 12,734 | 11,613 | 13,546 | 13,991 | 14,142 | **173,143** |
| ຜົ້ງສາລີ | 1,850 | 1,965 | 2,470 | 3,639 | 3,926 | 3,213 | 3,501 | 2,412 | 1,627 | 3,731 | 4,217 | 2,225 | **34,776** |
| ສາລາວັນ | 4,114 | 4,555 | 5,608 | 23,733 | 5,599 | 4,761 | 4,778 | 3,890 | 6,341 | 5,929 | 6,969 | 3,450 | **79,727** |
| ສະຫວັນນະເຂດ | 16,370 | 17,055 | 15,192 | 26,806 | 20,933 | 24,001 | 20,910 | 30,484 | 19,324 | 15,517 | 16,704 | 19,740 | **243,036** |
| ເຊກອງ | 1,320 | 987 | 624 | 1,476 | 3,050 | 3,047 | 1,337 | 4,258 | 375 | 80 | 2,694 | 3,827 | **23,075** |
| ນະຄອນຫຼວງ | 283 | 577 | 626 | 1,037 | 2,127 | 2,690 | 2,561 | 3,527 | 3,359 | 4,882 | 4,176 | 3,957 | **29,802** |
| ແຂວງວຽງຈັນ | 6,078 | 8,076 | 10,796 | 10,638 | 10,732 | 24,789 | 16,781 | 12,286 | 13,087 | 11,638 | 34,795 | 71,169 | **230,865** |
| ໄຊສົມບູນ | 1,014 | 1,115 | 1,079 | 1,558 | 1,328 | 970 | 1,037 | 1,331 | 1,497 | 1,496 | 1,547 | 1,663 | **15,635** |
| ໄຊຍະບູລີ | - | - | - | 46 | 2,058 | 2,121 | 2,899 | 2,580 | 3,422 | 3,329 | 2,850 | 3,393 | **22,698** |
| ຊຽງຂວາງ | 2,895 | 3,300 | 4,000 | 5,900 | 3,276 | 3,100 | 3,900 | 2,456 | 2,739 | 3,356 | 5,070 | 20,672 | **60,664** |

**ເສັ້ນສະແດງທີ 8: ຈຳນວນນັກທ່ອງທ່ຽວພາຍໃນ ແຕ່ລະເດືອນ ໃນປີ 2022**




**ເສັ້ນສະແດງທີ 9: ຈຳນວນນັກທ່ອງທ່ຽວພາຍໃນ ແຕ່ລະໄຕມາດ ໃນປີ 2022**



## ເສັ້ນສະແດງທີ 10: ຈຳນວນນັກທ່ອງທ່ຽວພາຍໃນ ແຕ່ລະແຂວງໃນປີ 2022




## ຕາຕະລາງທີ 22: ລາຍຮັບຈາກການທ່ອງທ່ຽວພາຍໃນ ປີ 2022

| ປີ | ຈຳນວນນັກທ່ອງທ່ຽວພາຍໃນ | ໄລຍະພັກເຊົາສະເລ່ຍ (ມື້) | ກຳນົດການໃຊ້ຈ່າຍໂດຍສະເລ່ຍຕໍ່ຄົນ / ມື້ (ກີບ) | ກຳນົດການໃຊ້ຈ່າຍໂດຍສະເລ່ຍຕໍ່ຄົນ / ມື້ (ໂດລາ) | ລາຍຮັບຈາກການທ່ອງທ່ຽວ (ກີບ) | ລາຍຮັບຈາກການທ່ອງທ່ຽວ (ໂດລາ) |
|---|---|---|---|---|---|---|
| 2020 | 1,581,100 | 3 | 245,000 | 26 | 1,162,108,500,000 | 122,740,653 |
| 2021 | 828,592 | 2.51 | 530,000 | 45 | 1,102,275,937,600 | 93,589,466 |
| 2022 | 1,685,359 | 3 | 914,000 | 54 | 4,621,254,378,000 | 273,028,158 |

**ເສັ້ນສະແດງທີ 11: ອັດຕາການເພີ່ມຂຶ້ນຈຳນວນນັກທ່ອງທ່ຽວພາຍໃນ ແລະ ລາຍຮັບ ຈາກການທ່ອງທ່ຽວ**

| ຈຳນວນນັກທ່ອງທ່ຽວພາຍໃນ | | ລາຍຮັບ | |
|---|---|---|---|
| 2021 | 2022 | 2021 | 2022 |
| 828,592 | 1,685,359 | $ 93,589,466 | $ 273,028,158 |
| ອັດຕາເພີ່ມຂຶ້ນເປັນ % ▲ | | ອັດຕາເພີ່ມຂຶ້ນເປັນ % ▲ | |
| 103 | | 192 | |







## ການສະໜອງການບໍລິການດ້ານການທ່ອງທ່ຽວ

ການສະໜອງການບໍລິການດ້ານການທ່ອງທ່ຽວໝາຍເຖິງ: ສະຖານທີ່,ໂຮງແຮມ, ເຮືອນພັກ, ຣີສອດ, ອາພາດເມັ້ນ, ພັດຕະຄານ, ສວນອາຫານ, ຮ້ານອາຫານ, ຮ້ານຄາລະໂອເກະ ແລະ ຮ້ານບັນເທີງ ເພື່ອຮອງຮັບນັກທ່ອງທ່ຽວຈາກພາຍໃນ ແລະ ຕ່າງປະເທດ. ໂດຍລວມແລ້ວດ້ານຈຳນວນແມ່ນຍັງມີລັກສະນະຄົງຕົວ, ມີແຕ່ນະຄອນຫຼວງວຽງຈັນ ທີ່ມີການຂະຫຍາຍຕົວເພີ່ມຂຶ້ນເລັກນ້ອຍ. ລັກສະນະຂອງສະຖານທີ່ພັກແຮມສ່ວນຫຼາຍຈະເປັນລັກສະນະເຮືອນພັກ ເນື່ອງຈາກເປັນການລົງທຶນທີ່ບໍ່ສູງຫຼາຍ ແລະ ສາມາດບໍລິຫານຈັດການໄດ້ງ່າຍ. ຈຳນວນເຮືອນພັກຫຼາຍທີ່ສຸດແມ່ນຢູ່ແຂວງຫຼວງພະບາງ ເນື່ອງຈາກມີການປັບປຸງຈາກທີ່ພັກອາໃສຂອງປະຊາຊົນທ້ອງຖິ່ນມາເປັນເຮືອນພັກ ສ່ວນຫຼາຍແມ່ນຢູ່ໃນຕົວເມືອງ ເຂດມໍຣະດົກໂລກ, ນັກທ່ອງທ່ຽວທີ່ເຂົ້າພັກສ່ວນຫຼາຍເປັນນັກທ່ອງທ່ຽວພາຍໃນ, ນັກທ່ອງທ່ຽວຊາຍແດນ ແລະ ນັກທ່ອງທ່ຽວເປ້ກະເປົາເດີນທາງທ່ອງທ່ຽວ ຫຼື Back Packer ທີ່ຕ້ອງການໃກ້ຊິດກັບວິຖີຊີວິດຂອງປະຊາຊົນ ແລະ ມີລາຄາທີ່ຖືກກວ່າການພັກຢູ່ໂຮງແຮມ. ຮອງລົງມາແມ່ນຢູ່ ແຂວງວຽງຈັນ ໂດຍສະເພາະແມ່ນຢູ່ເມືອງວັງວຽງ ແລະ ເມືອງ

ເຟືອງ ຊຶ່ງເປັນຈຸດໝາຍປາຍທາງການທ່ອງທ່ຽວຍອດນິຍົມ ສຳລັບການທ່ອງທ່ຽວທາງທຳມະຊາດ ໃນມູມມອງຂອງນັກທ່ອງທ່ຽວພາຍໃນປະເທດ ແລະ ນັກທ່ອງທ່ຽວຈາກຕ່າງປະເທດ.

ສຳລັບນະຄອນຫຼວງວຽງຈັນ ແມ່ນມີໂຮງແຮມຫຼາຍທີ່ສຸດ ຍ້ອນວ່າເປັນຈຸດສູນກາງ ແລະ ເປັນປະຕູທາງເຂົ້າປະເທດຂອງນັກທ່ອງທ່ຽວຈາກຕ່າງປະເທດ. ນັກທ່ອງທ່ຽວຕ້ອງການ ການບໍລິການທີ່ມີຄຸນນະພາບສູງກວ່າເຮືອນພັກ ແລະ ຍັງເປັນເຂດສູນກາງທາງດ້ານເສດຖະກິດ-ການຄ້າ ຂອງປະເທດ ເຮັດໃຫ້ຄຸ້ມຄ່າກັບການລົງທຶນໃນທຸລະກິດໂຮງແຮມ ຫຼາຍກວ່າແຂວງອື່ນໆໃນ ສປປ ລາວ. ໂດຍສະເພາະຈຳນວນຫ້ອງພັກ ໃນປີ 2022 ມີເຖິງ 18,869 ຫ້ອງ, ສະເລ່ຍ 28% ຂອງຫ້ອງພັກທັງໝົດໃນປະເທດ. ນອກຈາກນັ້ນ, ຈຳນວນຫ້ອງພັກຍັງເພີ່ມຂຶ້ນທຸກໆປີ ນັບແຕ່ປີ 2017 ເຖິງປີ 2022 ມີອັດຕາການເພີ່ມຂຶ້ນສະເລ່ຍ 7.46%, ຈາກ 13,030 ຫ້ອງ ເພີ່ມຂຶ້ນເປັນ 18,896 ຫ້ອງ. ໂດຍສະເພາະໃນປີ 2021 ເພີ່ມຂຶ້ນຈາກ 14,066 ຫ້ອງ ເປັນ 16,372 ຫ້ອງ ສະເລ່ຍ 16.39% ແລະ ໃນປີ 2022 ເພີ່ມຂຶ້ນ ເປັນ 18,869 ຫ້ອງ ສະເລ່ຍເປັນ 15.25% ເຖິງວ່າໄລຍະດັ່ງກ່າວເປັນໄລຍະທີ່ປິດປະເທດຫ້າມເດີນທາງອອກປະເທດ. ທັງນີ້ກໍຍ້ອນວ່າໃນລະຫວ່າງປີ 2015-2019 ເປັນປີທີ່ມີນັກທ່ອງທ່ຽວເຂົ້າມາຢ້ຽມຢາມ ສປປ ລາວ ຫຼາຍທີ່ສຸດ, ຈຶ່ງເຮັດໃຫ້ການລົງທຶນສ້າງໂຮງແຮມໃນນະຄອນຫຼວງວຽງຈັນ ມີຈຳນວນຫຼາຍຂຶ້ນເພື່ອຮັບຮອງນັກທ່ອງທ່ຽວ. ແຕ່ເນື່ອງຈາກການລົງທຶນກໍ່ສ້າງໂຮງແຮມຕ້ອງໃຊ້ເວລາປະມານ 2-3 ປີ, ຈຶ່ງເຮັດໃຫ້ຈຳນວນຫ້ອງທີ່ເກີດຂຶ້ນໃນຊ່ວງເວລາການແຜ່ລະບາດຂອງພະຍາດໂຄວິດ-19 ເພີ່ມຂຶ້ນ.

ສຳລັບການສະໜອງຫ້ອງພັກຂອງສະຖານທີ່ພັກແຮມໃນ ສປປ ລາວ ມີອັດຕາການພັກແຮມປະມານ 40%-70% ໂດຍພື້ນທີ່ມີອັດຕາການ ພັກແຮມສູງທີ່ສຸດແມ່ນ ແຂວງຫຼວງພະບາງ ຢູ່ລະຫວ່າງ 69%-73% ເນື່ອງຈາກແຂວງຫວງພະບາງ ເປັນເມືອງມໍລະດົກໂລກ ຊຶ່ງມີພື້ນທີ່ຈຳກັດ, ຈຶ່ງເຮັດໃຫ້ການຂະຫຍາຍຕົວຂອງສະຖານທີ່ພັກແຮມ ມີຂໍ້ຈຳກັດຫຼາຍ. ສະແດງໃຫ້ເຫັນວ່າການທ່ອງທ່ຽວຢູ່ແຂວງຫຼວງພະບາງ ມີການນຳໃຊ້ຢູ່ໃນລະດັບເກືອບເຕັມຂີດຄວາມສາມາດຂອງເມືອງ. ສຳລັບພື້ນທີ່ທີ່ມີອັດຕາການພັກແຮມໜ້ອຍທີ່ສຸດແມ່ນແຂວງຜົ້ງສາລີ ມີອັດຕາການພັກແຮມຢູ່ລະຫວ່າງ 39%-47% ເນື່ອງຈາກເປັນພື້ນທີ່ທາງພາກເໜືອສຸດຂອງປະເທດ ການເດີນທາງກໍຍັງບໍ່ສະດວກ ທັງເສັ້ນທາງ ແລະ ສາຍການບິນ. ສຳລັບພື້ນທີ່ ທີ່ມີອັດຕາການເຕີບໂຕຂອງອັດຕາການພັກແຮມຫຼາຍທີ່ສຸດແມ່ນ ແຂວງຫຼວງນ້ຳທາ, ຈາກປີ 2016 ມີອັດຕາການພັກແຮມ 30%, ປີ 2019 ອັດຕາການພັກແຮມ 64% ເນື່ອງຈາກມີການເຊື່ອມຕໍ່ກັບ ສປ ຈີນ, ໂດຍສະເພາະມີການຂົນສົ່ງສິນຄ້າຜ່ານແດນ ແລະ ການເດີນທາງຂ້າມແດນທີ່ມາຈາກ ສປ ຈີນ ຫຼາຍຂຶ້ນ.

ສຳລັບອັດຕາການພັກແຮມໃນປີ 2022 ມີຄວາມສອດຄ່ອງກັບຈຳນວນນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ຽວ ສປປ ລາວ ເນື່ອງຈາກເລີ່ມແຕ່ການເປີດປະເທດແບບເຕັມຮູບແບບ ໃນວັນທີ 09 ພຶດສະພາ 2022 ຈົນຮອດເດືອນທັນວາ ຂອງປີ 2022 ແມ່ນມີນັກທ່ອງທ່ຽວເດີນທາງເຂົ້າມາຢ່າງຕໍ່ເນື່ອງ, ມີອັດຕາການພັກແຮມຢູ່ລະຫວ່າງ 42%-60%. ອັດຕາສ່ວນດັ່ງກ່າວຊີ້ໃຫ້ເຫັນວ່າ ໃນໄລຍະທ້າຍປີ 2022 ມີອັດຕາການເຂົ້າພັກຢູ່ໃນລະດັບສູງ ຫຼື ໃກ້ຄຽງກັບລະດັບສູງສຸດ ຂອງຂີດຄວາມສາມາດໃນການໃຫ້ບໍລິການທີ່ພັກແຮມຢູ່ແຕ່ລະພື້ນທີ່.

ສປປ ລາວ ມີແຫຼ່ງທ່ອງທ່ຽວທີ່ຮອງຮັບການເດີນທາງຂອງນັກທ່ອງທ່ຽວທັງໝົດ 2,199 ແຫ່ງ, ແຂວງທີ່ມີແຫຼ່ງທ່ອງທ່ຽວຫຼາຍທີ່ສຸດແມ່ນ ແຂວງຫຼວງພະບາງ ມີຈຳນວນ 224 ແຫ່ງ, ແຂວງຈຳປາສັກ ມີ 217 ແຫ່ງ, ແຂວງຄຳມ່ວນ ມີ 207 ແຫ່ງ ແລະ ແຂວງວຽງຈັນ ມີ 200 ແຫ່ງ. ຊຶ່ງແຫຼ່ງທ່ອງທ່ຽວສ່ວນຫຼາຍຂອງ ສປປ ລາວ ເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ ຈຳນວນ 1,314 ແຫ່ງ, ໃນນີ້ຢູ່ແຂວງວຽງຈັນ, ແຂວງຄຳມ່ວນ ແລະ ແຂວງຈຳປາສັກ ມີຫຼາຍທີ່ສຸດ. ສຳລັບແຂວງຫຼວງພະບາງ ມີແຫຼ່ງທ່ອງທ່ຽວທາງວັດທະນະທຳ ຈຳນວນ 77 ແຫ່ງ, ເປັນອັນດັບສອງ, ໃນອະນາຄົດ ການພັດທະນາແຫຼ່ງທ່ອງທ່ຽວຂອງ ສປປ ລາວ ຍັງມີຄວາມອາດສາມາດຫຼາຍ ເນື່ອງຈາກມີແຫຼ່ງທ່ອງທ່ຽວທີ່ສຳຫຼວດແລ້ວອີກ 1,040 ແຫ່ງ

ແລະ ໄດ້ມີການເປີດໃຫ້ບໍລິການແລ້ວຈຳນວນ 963 ແຫ່ງ ແລະ ໃນຈຳນວນນີ້ໄດ້ຮັບການພັດທະນາເປັນສະຖານທີ່ທ່ອງທ່ຽວແລ້ວ ຈຳນວນ 587 ແຫ່ງ.

ນອກຈາກສະຖານທີ່ທ່ອງທ່ຽວ ທີ່ມີໄວ້ຮອງຮັບການບໍລິການນັກທ່ອງທ່ຽວແລ້ວ, ລັດຖະບານ ແຫ່ງ ສປປ ລາວ ຍັງມີນະໂຍບາຍພັດທະນາເຮືອນພັກປະຊາຊົນ (Homestay) ໄວ້ຮອງຮັບນັກທ່ອງທ່ຽວທີ່ຕ້ອງການສຳພັດປະສົບການຮ່ວມກັບປະຊາຊົນທ້ອງຖິ່ນ ໂດຍມີການຈັດຕັ້ງເຮືອນພັກປະຊາຊົນໃນ 14 ແຂວງ, 30 ເມືອງ, 39 ບ້ານ, ມີຈຳນວນຜູ້ໃຫ້ບໍລິການທັງໝົດ 335 ຫຼັງຄາ, ໃຫ້ບໍລິການໄດ້ 439 ຫ້ອງ ແລະ 1,115 ຕຽງ. ການໃຫ້ບໍລິການເຮືອນພັກປະຊາຊົນ ແມ່ນເນັ້ນໃສ່ການໃຫ້ບໍລິການ ໃນເຂດທີ່ບໍ່ມີການບໍລິການທ່ອງທ່ຽວທີ່ໜາແໜ້ນ ເພື່ອເຕີມເຕັມການໃຫ້ບໍລິການດ້ານການທ່ອງທ່ຽວໃນເຂດທີ່ມີໂຮງແຮມ ແລະ ເຮືອນພັກຈຳກັດ. ໃນນີ້, ແຂວງທີ່ມີການໃຫ້ບໍລິການ Homestay ຫຼາຍທີ່ສຸດແມ່ນແຂວງຄຳມ່ວນ ມີຈຳນວນ 64 ຫຼັງຄາ, ມີ 75 ຫ້ອງ ແລະ ມີ 238 ຕຽງ. ເນື່ອງຈາກແຂວງຄຳມ່ວນ ມີພື້ນທີ່ການທ່ອງທ່ຽວທີ່ເປັນລັກສະນະການທ່ອງທ່ຽວທາງທຳມະຊາດເປັນຈຳນວນຫຼາຍ ແລະ ມີການພັດທະນາສະຖານທີ່ທ່ອງທ່ຽວໃໝ່ຢ່າງຕໍ່ເນື່ອງ. ລຳດັບທີ 2 ແມ່ນ ແຂວງສະຫວັນນະເຂດ ມີຈຳນວນ 40 ຫຼັງຄາ, ມີ 61 ຫ້ອງ, ມີ 183 ຕຽງ, ແລະ ລຳດັບທີ 3 ແມ່ນແຂວງໄຊຍະບູລີ ມີເຮືອນພັກປະຊາຊົນ ຈຳນວນ 50 ຫຼັງຄາ, ມີ 51 ຫ້ອງ, ມີ 104 ຕຽງ. ສຳລັບແຂວງທີ່ບໍ່ມີເຮືອນພັກປະຊາຊົນແມ່ນ ແຂວງອັດຕະປື, ແຂວງບໍ່ແກ້ວ, ແຂວງໄຊສົມບູນ ແລະ ນະຄອນຫຼວງວຽງຈັນ.

ສຳລັບບໍລິສັດນຳທ່ຽວ ຕັ້ງແຕ່ປີ 2017-2019 ໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຈາກການເພີ່ມຂຶ້ນຂອງຈຳນວນນັກທ່ອງທ່ຽວຕ່າງປະເທດ ບໍລິສັດນຳທ່ຽວຈຶ່ງເພີ່ມຂຶ້ນຈາກ 422 ບໍລິສັດ ໃນປີ 2017 ມາເປັນ 549 ບໍລິສັດ ໃນປີ 2019. ແຕ່ເມື່ອຮອດໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ບໍລິສັດນຳທ່ຽວບໍ່ໄດ້ເພີ່ມຂຶ້ນ ເນື່ອງຈາກວ່າບໍ່ມີ ນັກທ່ອງທ່ຽວຕ່າງປະເທດ. ບໍລິສັດເຫຼົ່ານີ້ສ່ວນຫຼາຍບໍ່ໄດ້ປິດຕົວ, ເນື່ອງຈາກລໍຖ້າການເປີດຮັບນັກທ່ອງທ່ຽວຫຼັງຈາກການລະບາດພະຍາດໂຄວິດ-19. ໃນປີ 2022, ສັງເກດເຫັນໄດ້ວ່າ ມີບໍລິສັດນຳທ່ຽວ ຈົດທະບຽນໃໝ່ເພີ່ມອີກ 10 ບໍລິສັດ, ລວມເປັນ 559 ບໍລິສັດ, ຊຶ່ງເພີ່ມຂຶ້ນຢູ່ນະຄອນຫຼວງວຽງຈັນ 7 ບໍລິສັດ, ແຂວງໄຊຍະບູລີ 2 ບໍລິສັດ ແລະ ແຂວງຜົ້ງສາລີ 1 ບໍລິສັດ.

## ຕາຕະລາງທີ 23: ຈຳນວນໂຮງແຮມ, ເຮືອນພັກ, ຣີສອດ, ອາພາດເມັ້ນ, ພັດຕະຄານ, ສວນອາຫານ, ຮ້ານອາຫານ, ຮ້ານຄາລະໂອເກະ ແລະ ຮ້ານບັນເທີງ ໃນປີ 2022

| ແຂວງ | ປະເພດ | | | | | | | | | ລວມ |
|---|---|---|---|---|---|---|---|---|---|---|
| | ໂຮງແຮມ | ເຮືອນພັກ | ຣີສອດ | ອາພາດເມັ້ນ | ພັດຕະຄານ | ສວນອາຫານ | ຮ້ານອາຫານ | ຮ້ານຄາລະໂອເກະ | ຮ້ານບັນເທີງ | 2022 |
| **ລວມ** | **759** | **2244** | **87** | **5** | **27** | **33** | **2944** | **191** | **139** | **6429** |
| ອັດຕະປື | 22 | 28 | 1 | 0 | 1 | 0 | 88 | 0 | 3 | 143 |
| ບໍ່ແກ້ວ | 22 | 120 | 3 | 0 | 1 | 6 | 89 | 96 | 2 | 339 |
| ບໍລິຄຳໄຊ | 37 | 108 | 7 | 0 | 2 | 0 | 200 | 9 | 11 | 374 |
| ຈຳປາສັກ | 72 | 216 | 8 | 0 | 0 | 2 | 430 | 0 | 17 | 745 |
| ຫົວພັນ | 12 | 44 | 1 | 0 | 2 | 0 | 202 | 2 | 1 | 264 |
| ຄຳມ່ວນ | 25 | 104 | 8 | 0 | 0 | 0 | 155 | 11 | 4 | 307 |
| ຫຼວງນໍ້າທາ | 14 | 115 | 2 | 1 | 3 | 6 | 150 | 0 | 4 | 295 |
| ຫຼວງພະບາງ | 95 | 266 | 6 | 0 | 0 | 0 | 89 | 8 | 10 | 474 |
| ອຸດົມໄຊ | 27 | 118 | 7 | 0 | 2 | 6 | 95 | 18 | 6 | 279 |
| ຜົ້ງສາລີ | 10 | 60 | 0 | 0 | 3 | 0 | 126 | 0 | 3 | 202 |
| ສາລະວັນ | 8 | 44 | 1 | 0 | 1 | 0 | 78 | 8 | 23 | 163 |
| ສະຫວັນນະເຂດ | 50 | 194 | 2 | 0 | 5 | 0 | 185 | 0 | 7 | 443 |
| ເຊກອງ | 9 | 28 | 3 | 0 | 0 | 4 | 46 | 12 | 2 | 104 |
| ນະຄອນຫຼວງວຽງຈັນ | 273 | 198 | 5 | 4 | 4 | 4 | 144 | 16 | 16 | 664 |
| ວຽງຈັນ | 53 | 216 | 23 | 0 | 1 | 0 | 467 | 0 | 10 | 770 |
| ໄຊສົມບູນ | 3 | 68 | 0 | 0 | 0 | 1 | 110 | 0 | 1 | 183 |
| ໄຊຍະບູລີ | 7 | 192 | 6 | 0 | 0 | 0 | 114 | 8 | 17 | 344 |
| ຊຽງຂວາງ | 20 | 125 | 4 | 0 | 2 | 4 | 176 | 3 | 2 | 336 |

ແຫຼ່ງຂໍ້ມູນຈາກ: ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ

## ຕາຕະລາງທີ 24: ຈຳນວນສະຖານທີ່ພັກແຮມ ແລະ ຫ້ອງນອນ ແຕ່ປີ 2017-2022

| ແຂວງ | ຈຳນວນທີ່ພັກ | | | | | | ຈຳນວນຫ້ອງນອນ | | | | | |
|---|---|---|---|---|---|---|---|---|---|---|---|---|
| | 2017 | 2018 | 2019 | 2020 | 2021 | 2022 | 2017 | 2018 | 2019 | 2020 | 2021 | 2022 |
| **ລວມທັງໝົດ** | **2,734** | **3,102** | **2,920** | **3,237** | **3,261** | **3,095** | **50,600** | **56,825** | **55,541** | **56,347** | **60,840** | **67,370** |
| ອັດຕະປື | 59 | 54 | 56 | 56 | 57 | 51 | 960 | 1,013 | 823 | 873 | 940 | 977 |
| ບໍ່ແກ້ວ | 85 | 86 | 90 | 87 | 94 | 145 | 1,332 | 1,297 | 1,412 | 1,536 | 1,516 | 2,501 |
| ບໍລິຄຳໄຊ | 126 | 160 | 159 | 128 | 127 | 152 | 2,388 | 2,884 | 2,913 | 2,314 | 2,365 | 2,662 |
| ຈຳປາສັກ | 235 | 285 | 283 | 297 | 299 | 296 | 4,059 | 5,182 | 3,793 | 4,995 | 5,165 | 5,165 |
| ຫົວພັນ | 68 | 74 | 73 | 84 | 84 | 57 | 883 | 956 | 984 | 1,038 | 1,072 | 731 |
| ຄຳມ່ວນ | 135 | 139 | 139 | 138 | 138 | 137 | 2,174 | 2,261 | 2,286 | 1,824 | 2,333 | 2,323 |
| ຫຼວງນໍ້າທາ | 107 | 105 | 110 | 109 | 110 | 132 | 1,545 | 1,519 | 1,509 | 1,837 | 1,802 | 1,985 |
| ຫຼວງພະບາງ | 313 | 477 | 348 | 491 | 501 | 367 | 5,368 | 5,276 | 6,746 | 6,447 | 6,799 | 5,477 |
| ອຸດົມໄຊ | 107 | 134 | 130 | 146 | 150 | 152 | 1,906 | 2,271 | 2,231 | 2,224 | 2,507 | 2,677 |
| ຜົ້ງສາລີ | 71 | 73 | 74 | 80 | 65 | 70 | 746 | 905 | 915 | 1,154 | 973 | 1,009 |
| ສາລະວັນ | 54 | 58 | 55 | 62 | 61 | 53 | 517 | 814 | 816 | 840 | 868 | 919 |
| ສະຫວັນນະເຂດ | 205 | 223 | 210 | 222 | 223 | 246 | 4,521 | 4,482 | 4,686 | 4,362 | 4,479 | 5,257 |
| ເຊກອງ | 52 | 46 | 44 | 47 | 43 | 40 | 628 | 599 | 706 | 619 | 609 | 561 |
| ນະຄອນຫຼວງວຽງຈັນ | 459 | 483 | 452 | 476 | 527 | 480 | 13,030 | 14,244 | 14,013 | 14,066 | 16,372 | 18,869 |
| ວຽງຈັນ | 312 | 344 | 340 | 404 | 399 | 292 | 5,592 | 6,203 | 6,372 | 6,370 | 7,017 | 10,008 |
| ໄຊສົມບູນ | 38 | 45 | 38 | 60 | 63 | 71 | 336 | 475 | 336 | 575 | 713 | 716 |
| ໄຊຍະບູລີ | 181 | 173 | 185 | 192 | 173 | 205 | 2,257 | 2,343 | 2,557 | 2,422 | 2,533 | 2,721 |
| ຊຽງຂວາງ | 127 | 143 | 134 | 158 | 147 | 149 | 2,358 | 4,101 | 2,443 | 2,851 | 2,777 | 2,812 |

ແຫຼ່ງຂໍ້ມູນຈາກ: ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ

## ຕາຕະລາງທີ 25: ຈຳນວນໂຮງແຮມ, ເຮືອນພັກ, ຣີສອດ, ອາພາດເມັ້ນ, ຫ້ອງນອນ ແລະ ຕຽງ ໃນປີ 2022

| ແຂວງ | ໂຮງແຮມ | | | ເຮືອນພັກ | | | ຣີສອດ | | | ອາພາດເມັ້ນ | | | ລວມທັງໝົດ | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| | ຈຳນວນ | ຫ້ອງນອນ | ຕຽງ | ຈຳນວນ | ຫ້ອງນອນ | ຕຽງ | ຈຳນວນ | ຫ້ອງນອນ | ຕຽງ | ຈຳນວນ | ຫ້ອງນອນ | ຕຽງ | ຈຳນວນ | ຫ້ອງນອນ | ຕຽງ |
| **ລວມ** | **759** | **27,914** | **37,185** | **2,244** | **37,267** | **41,749** | **87** | **2,090** | **2,832** | **5** | **99** | **117** | **3,095** | **67,370** | **81,883** |
| ອັດຕະປື | 22 | 651 | 972 | 28 | 299 | 370 | 1 | 27 | 35 | - | - | - | 51 | 977 | 1,377 |
| ບໍ່ແກ້ວ | 22 | 781 | 1,102 | 120 | 1,693 | 2,047 | 3 | 27 | 66 | - | - | - | 145 | 2,501 | 3,215 |
| ບໍລິຄຳໄຊ | 37 | 1,145 | 1,605 | 108 | 1,443 | 1,900 | 7 | 74 | 88 | - | - | - | 152 | 2,662 | 3,593 |
| ຈຳປາສັກ | 72 | 2,731 | 3,346 | 216 | 2,276 | 2,974 | 8 | 158 | 232 | - | - | - | 296 | 5,165 | 6,552 |
| ຫົວພັນ | 12 | 266 | 359 | 44 | 458 | 604 | 1 | 7 | 7 | - | - | - | 57 | 731 | 970 |
| ຄຳມ່ວນ | 25 | 912 | 1,222 | 104 | 1,224 | 1,575 | 8 | 187 | 250 | - | - | - | 137 | 2,323 | 3,047 |
| ຫຼວງນ້ຳທາ | 14 | 554 | 713 | 115 | 1,412 | 1,778 | 2 | 19 | 29 | 1 | - | - | 132 | 1,985 | 2,520 |
| ຫຼວງພະບາງ | 95 | 2,642 | 4,138 | 266 | 2,649 | 3,847 | 6 | 186 | 275 | - | - | - | 367 | 5,477 | 8,260 |
| ອຸດົມໄຊ | 27 | 1,037 | 1,502 | 118 | 1,416 | 2,059 | 7 | 224 | 294 | - | - | - | 152 | 2,677 | 3,855 |
| ຜົ້ງສາລີ | 10 | 318 | 492 | 60 | 691 | 1,035 | - | - | - | - | - | - | 70 | 1,009 | 1,527 |
| ສາລະວັນ | 8 | 196 | 300 | 44 | 708 | 885 | 1 | 15 | 24 | - | - | - | 53 | 919 | 1,209 |
| ສະຫວັນນະເຂດ | 50 | 2,195 | 2,797 | 194 | 2,934 | 3,426 | 2 | 128 | 157 | - | - | - | 246 | 5,257 | 6,380 |
| ເຊກອງ | 9 | 245 | 288 | 28 | 298 | 342 | 3 | 18 | 26 | - | - | - | 40 | 561 | 656 |
| ນະຄອນຫຼວງວຽງຈັນ | 273 | 10,533 | 12,851 | 198 | 8,148 | 5,162 | 5 | 89 | 74 | 4 | 99 | 117 | 480 | 18,869 | 18,204 |
| ວຽງຈັນ | 53 | 2,620 | 3,960 | 216 | 6,594 | 8,056 | 23 | 794 | 1,135 | - | - | - | 292 | 10,008 | 13,151 |
| ໄຊສົມບູນ | 3 | 54 | 72 | 68 | 662 | 709 | - | - | - | - | - | - | 71 | 716 | 781 |
| ໄຊຍະບູລີ | 7 | 241 | 340 | 192 | 2,410 | 2,658 | 6 | 70 | 76 | - | - | - | 205 | 2,721 | 3,074 |
| ຊຽງຂວາງ | 20 | 793 | 1,126 | 125 | 1,952 | 2,322 | 4 | 67 | 64 | - | - | - | 149 | 2,812 | 3,512 |

ແຫຼ່ງຂໍ້ມູນຈາກ: ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ

## ຕາຕະລາງທີ 26: ອັດຕາການພັກແຮມຢູ່ແຕ່ລະແຂວງ ແຕ່ປີ 2014-2022

| ແຂວງ | 2015 | 2016 | 2017 | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|---|---|---|
| **ສະເລ່ຍ** | **57%** | **51%** | **54%** | **53%** | **54%** | **-** | **-** | **50%** |
| ອັດຕະປື | 52% | 39% | 41% | 44% | 54% | - | - | 46% |
| ບໍ່ແກ້ວ | 56% | 47% | 50% | 51% | 67% | - | - | 51% |
| ບໍລິຄຳໄຊ | 45% | 42% | 45% | 46% | 47% | - | - | 53% |
| ຈຳປາສັກ | 56% | 45% | 56% | 53% | 49% | - | - | 46% |
| ຫົວພັນ | 51% | 43% | 46% | 41% | 40% | - | - | 42% |
| ຄຳມ່ວນ | 71% | 75% | 72% | 75% | 57% | - | - | 57% |
| ຫຼວງນ້ຳທາ | 56% | 30% | 48% | 54% | 64% | - | - | 47% |
| ຫຼວງພະບາງ | 73% | 75% | 71% | 70% | 69% | - | - | 60% |
| ອຸດົມໄຊ | 56% | 52% | 54% | 56% | 65% | - | - | 51% |
| ຜົ້ງສາລີ | 46% | 39% | 44% | 41% | 47% | - | - | 46% |
| ສາລະວັນ | 53% | 65% | 69% | 53% | 52% | - | - | 53% |
| ສະຫວັນນະເຂດ | 71% | 53% | 54% | 57% | 53% | - | - | 56% |
| ເຊກອງ | 48% | 47% | 52% | 42% | 51% | - | - | 49% |
| ນະຄອນຫຼວງວຽງຈັນ | 74% | 56% | 59% | 62% | 59% | - | - | 54% |
| ວຽງຈັນ | 65% | 62% | 65% | 63% | 61% | - | - | 51% |
| ໄຊສົມບູນ | 48% | 45% | 43% | 45% | 46% | - | - | 42% |
| ໄຊຍະບູລີ | 47% | 44% | 46% | 44% | 41% | - | - | 43% |
| ຊຽງຂວາງ | 56% | 53% | 57% | 55% | 51% | - | - | 54% |

ແຫຼ່ງຂໍ້ມູນຈາກ: ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ

## ຕາຕະລາງທີ 27: ຈຳນວນແຫຼ່ງທ່ອງທ່ຽວຢູ່ ສປປ ລາວ

| ແຂວງ | ແຫຼ່ງທ່ອງທ່ຽວ ທຳມະຊາດ | ແຫຼ່ງທ່ອງທ່ຽວ ວັດທະນະທຳ | ແຫຼ່ງທ່ອງທ່ຽວ ປະຫວັດສາດ | ລວມທັງໝົດ | ສຳຫລວດແລ້ວ | ໄດ້ຮັບການ ພັດທະນາ | ເປີດບໍລິການ ປີ 2019 | ເປີດບໍລິການ ປີ 2022 |
|---|---|---|---|---|---|---|---|---|
| **ລວມ** | **1,314** | **591** | **294** | **2,199** | **1,040** | **587** | **809** | **953** |
| ອັດຕະປື | 33 | 18 | 12 | 63 | 11 | 7 | 19 | 16 |
| ບໍ່ແກ້ວ | 53 | 14 | 10 | 77 | 40 | 41 | 18 | 23 |
| ບໍລິຄຳໄຊ | 100 | 12 | 3 | 115 | 47 | 7 | 30 | 35 |
| ຈຳປາສັກ | 127 | 55 | 35 | 217 | 13 | 16 | 217 | 29 |
| ຫົວພັນ | 43 | 28 | 62 | 133 | 83 | 4 | 15 | 61 |
| ຄຳມ່ວນ | 143 | 33 | 31 | 207 | 157 | 120 | 28 | 87 |
| ຫຼວງນ້ຳທາ | 55 | 47 | 7 | 109 | 68 | 15 | 62 | 49 |
| ຫຼວງພະບາງ | 114 | 77 | 33 | 224 | 90 | 25 | 24 | 158 |
| ອຸດົມໄຊ | 54 | 40 | 12 | 106 | 58 | 46 | 30 | 25 |
| ຜົ້ງສາລີ | 27 | 74 | 4 | 105 | 69 | 7 | 80 | 53 |
| ສາລະວັນ | 50 | 38 | 6 | 94 | 90 | 16 | 33 | 31 |
| ສະຫວັນນະເຂດ | 74 | 32 | 11 | 117 | 24 | 60 | 112 | 122 |
| ເຊກອງ | 19 | 6 | 9 | 34 | 17 | 14 | 5 | 6 |
| ນະຄອນຫຼວງວຽງຈັນ | 45 | 24 | 15 | 84 | 11 | 21 | 19 | 86 |
| ວຽງຈັນ | 171 | 25 | 4 | 200 | 168 | 165 | 44 | 58 |
| ໄຊສົມບູນ | 57 | 5 | 10 | 72 | 35 | 8 | 4 | 3 |
| ໄຊຍະບູລີ | 70 | 19 | 7 | 96 | 5 | 13 | 49 | 68 |
| ຊຽງຂວາງ | 79 | 44 | 23 | 146 | 54 | 2 | 20 | 43 |

(ຂໍ້ມູນຈາກການສຳຫຼວດໃນປີ 2019)

## ຕາຕະລາງທີ 28: ຈຳນວນເຮືອນພັກແຮມປະຊາຊົນ ຢູ່ ສປປ ລາວ ໃນປີ 2022

| ແຂວງ | ເຮືອນພັກແຮມປະຊາຊົນ | | | | |
|---|---|---|---|---|---|
| | ເມືອງ | ບ້ານ | ຈຳນວນ | ຫ້ອງນອນ | ຕຽງ |
| **ລວມ** | **30** | **39** | **335** | **438** | **1,115** |
| ອັດຕະປື | - | - | - | - | - |
| ບໍ່ແກ້ວ | - | - | - | - | - |
| ບໍລິຄຳໄຊ | 2 | 3 | 22 | 28 | 44 |
| ຈຳປາສັກ | 4 | 5 | 38 | 66 | 113 |
| ຫົວພັນ | 1 | 1 | 2 | 9 | 15 |
| ຄຳມ່ວນ | 3 | 4 | 64 | 75 | 238 |
| ຫຼວງນ້ຳທາ | 1 | 3 | 26 | 34 | 34 |
| ຫຼວງພະບາງ | 2 | 2 | 36 | 36 | 106 |
| ອຸດົມໄຊ | 3 | 4 | 33 | 33 | 180 |
| ຜົ້ງສາລີ | 2 | 2 | 6 | 6 | 24 |
| ສາລະວັນ | 1 | 1 | 1 | 4 | 4 |
| ສະຫວັນນະເຂດ | 4 | 5 | 40 | 61 | 183 |
| ເຊກອງ | 1 | 1 | 2 | 5 | 10 |
| ນະຄອນຫຼວງວຽງຈັນ | - | - | - | - | - |
| ວຽງຈັນ | 2 | 2 | 13 | 26 | 52 |
| ໄຊສົມບູນ | - | - | - | - | - |
| ໄຊຍະບູລີ | 3 | 5 | 50 | 51 | 104 |
| ຊຽງຂວາງ | 1 | 1 | 2 | 4 | 8 |

# ຕາຕະລາງທີ 29: ຈຳນວນບໍລິສັດທ່ອງທ່ຽວລາວ ແຕ່ປີ 2017-2022

| ແຂວງ | ຈຳນວນບໍລິສັດທ່ອງທ່ຽວ | | | | | | ຈຳນວນສາຂາບໍລິສັດທ່ອງທ່ຽວ | | | | | |
|---|---|---|---|---|---|---|---|---|---|---|---|---|
| | 2017 | 2018 | 2019 | 2020 | 2021 | 2022 | 2017 | 2018 | 2019 | 2020 | 2021 | 2022 |
| **ລວມ** | **422** | **503** | **539** | **549** | **549** | **559** | **45** | **36** | **36** | **34** | **32** | **33** |
| ອັດຕະປື | 3 | 3 | 3 | 3 | 3 | 3 | 0 | 0 | 0 | 0 | 0 | 0 |
| ບໍ່ແກ້ວ | 17 | 15 | 15 | 15 | 15 | 15 | 1 | 1 | 1 | 1 | 1 | 1 |
| ບໍລິຄຳໄຊ | 4 | 4 | 6 | 6 | 6 | 6 | 0 | 0 | 0 | 0 | 0 | 0 |
| ຈຳປາສັກ | 30 | 32 | 27 | 27 | 27 | 27 | 7 | 7 | 7 | 7 | 7 | 7 |
| ຫົວພັນ | 2 | 2 | 2 | 2 | 2 | 3 | 0 | 0 | 0 | 0 | 0 | 0 |
| ຄຳມ່ວນ | 5 | 6 | 6 | 5 | 5 | 5 | 2 | 1 | 1 | 0 | 0 | 0 |
| ຫຼວງນ້ຳທາ | 7 | 7 | 7 | 9 | 9 | 9 | 1 | 1 | 1 | 1 | 1 | 1 |
| ຫຼວງພະບາງ | 67 | 78 | 81 | 81 | 81 | 81 | 20 | 17 | 16 | 16 | 14 | 14 |
| ອຸດົມໄຊ | 3 | 3 | 5 | 5 | 5 | 9 | 0 | 0 | 0 | 0 | 0 | 0 |
| ຜົ້ງສາລີ | 1 | 3 | 2 | 2 | 2 | 3 | 1 | 0 | 0 | 0 | 0 | 0 |
| ສາລະວັນ | 2 | 2 | 2 | 2 | 2 | 2 | 0 | 0 | 0 | 0 | 0 | 0 |
| ສະຫວັນນະເຂດ | 11 | 11 | 10 | 10 | 10 | 10 | 0 | 0 | 0 | 0 | 0 | 0 |
| ເຊກອງ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| ນະຄອນຫຼວງວຽງຈັນ | 238 | 292 | 317 | 327 | 327 | 330 | 8 | 3 | 5 | 4 | 4 | 4 |
| ວຽງຈັນ | 18 | 25 | 32 | 32 | 32 | 32 | 2 | 3 | 3 | 3 | 3 | 3 |
| ໄຊສົມບູນ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| ໄຊຍະບູລີ | 8 | 12 | 16 | 15 | 15 | 17 | 0 | 0 | 0 | 0 | 0 | 0 |
| ຊຽງຂວາງ | 6 | 8 | 8 | 8 | 8 | 7 | 3 | 3 | 2 | 2 | 2 | 3 |

ແຫຼ່ງຂໍ້ມູນຈາກ: ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ

## ພາກທີ II: ການສຳຫຼວດນັກທ່ອງທ່ຽວ ໃນປີ 2022

## ການສຳຫຼວດນັກທ່ອງທ່ຽວຕ່າງປະເທດ

ຕາຕະລາງລຸ່ມນີ້ແມ່ນການລາຍງານຜົນການສຳຫຼວດ ໂດຍໄດ້ສຳພາດນັກທ່ອງທ່ຽວພາຍໃນຈຳນວນ 922 ເທື່ອຄົນ ໃນລະຫວ່າງ ເດືອນ ກຸມພາ – ທັນວາ 2022 ຢູ່ນະຄອນຫຼວງວຽງຈັນ ເຊັ່ນ: ສະໜາມບິນສາກົນວັດໄຕ, ຂົວມິດຕະພາບ 1 ແລະ ສະຖານທີ່ທ່ອງທ່ຽວ ຢູ່ແຂວງ ຫຼວງພະບາງ, ແຂວງວຽງຈັນ ແລະ ແຂວງຈຳປາສັກ ຜູ້ທີ່ຖືກສຳພາດແມ່ນເປັນຕົວແທນນັກທ່ອງທ່ຽວທັງໝົດ ທີ່ເດີນທາງມາຢ້ຽມຢາມ ສປປ ລາວ.

ໃນການສຳຫຼວດນັກທ່ອງທ່ຽວເຫຼົ່ານີ້ ເພື່ອເປັນການເກັບກຳລວບລວມຂໍ້ມູນພື້ນຖານສ່ວນບຸກຄົນຂອງນັກທ່ອງທ່ຽວ ແລະ ພຶດຕິກຳການທ່ອງທ່ຽວຂອງນັກທ່ອງທ່ຽວຕ່າງປະເທດເປັນການອະທິບາຍພາບລວມຂອງລາຍລະອຽດຕ່າງໆ ໂດຍນັກທ່ອງທ່ຽວສາກົນ.

ນັກທ່ອງທ່ຽວສາກົນທີ່ເຂົ້າມາ ສປປ ລາວ ໃນປີ 2022 ເປັນເພດຊາຍກວມເອົາ 62.4%, ຫຼາຍກວ່າເພດຍິງ 37.6% ຊຶ່ງອັດຕາສ່ວນຂອງເພດຊາຍເພີ່ມຂຶ້ນຈາກປີ 2019 ມີ 52.8%. ໂດຍສ່ວນຫຼາຍ ອາຍຸໃນຊ່ວງເຮັດວຽກປະມານ 20-29 ປີ ກວມເອົາ 20.1%, ອາຍຸ 30-39 ປີ ກວມເອົາ 31.2% ແລະ ອາຍຸ 40-49 ປີ ກວມເອົາ 24.6%. ລວມທັງ 3 ກຸ່ມ ກວມເອົາ 75.9%. ຜູ້ຕອບແບບສອບຖາມສ່ວນຫຼາຍ ມີອາຊີບເປັນພະນັກງານສັງກັດເອກະຊົນ ກວມເອົາ 31.6% ແລະ ພະນັກງານລັດ 15.3%.

ການເດີນທາງຂອງນັກທ່ອງທ່ຽວຕ່າງປະເທດໄດ້ໃຊ້ວິທີການເດີນທາງທັງທາງບົກ ແລະ ທາງອາກາດ ກວມເອົາອັດຕາສ່ວນທີ່ໃກ້ຄຽງກັນ, ເດີນທາງທາງບົກກວມເອົາ 55.3% ແລະ ທາງອາກາດ 44.7%. ການເດີນທາງຜ່ານປະເທດໄທເຂົ້າມາໃນ ສປປ ລາວ ກວມເອົາ 71.6%, ເດີນທາງເຂົ້າມາໂດຍຜ່ານປະເທດ ກຳປູເຈຍ, ຈີນ, ຫວຽດນາມ ກວມເອົາ 38.4%. ສຳລັບນັກທ່ອງທ່ຽວທີ່ເດີນທາງເຂົ້າມາ ສປປ ລາວ ໂດຍກົງ ສ່ວນຫຼາຍມາຈາກຕົ້ນທາງທີ່ມີສາຍການບິນໂດຍກົງມາ ສປປ ລາວ ເຊັ່ນ: ສ. ເກົາຫຼີ.

ສຳລັບພຶດຕິກຳການທ່ອງທ່ຽວ ນັກທ່ອງທ່ຽວສ່ວນຫຼາຍຕ້ອງການມາທ່ອງທ່ຽວທຳມະຊາດທີ່ສວຍງາມ ຂອງ ສປປ ລາວ ມັກສຳພັດກິດຈະກຳທາງທຳມະຊາດ ເຊັ່ນ: ທ່ຽວຊົມຄວາມສວຍງາມຂອງທຳມະຊາດ ມີອັດຕາສ່ວນ 91.6%, ນັກທ່ອງທ່ຽວທີ່ມີຄວາມສົນໃຈ ທາງດ້ານປະຫວັດສາດຂອງລາວ ໃນຮູບແບບມໍຣະດົກໂລກໃນຫຼວງພະບາງ ອັດຕາສ່ວນ 71.1%, ຕ້ອງໄດ້ຮັບປະສົບການໂດຍກົງຈາກການຢ້ຽມຊົມມໍລະດົກໂລກ ອັດຕາສ່ວນ 52.7%, ທ່ຽວຊົມຄວາມງາມຂອງວັດວາອາຣາມ ແລະ ສະຖາປັດຕະຍະກຳຕ່າງໆ 57% ແລະ ການສ້າງປະສົບການດ້ານອາຫານລາວ ອັດຕາສ່ວນ 42.4%. ໂດຍລວມແລ້ວສະແດງໃຫ້ເຫັນຢ່າງຊັດເຈນວ່າ ນັກທ່ອງທ່ຽວສາກົນທີ່ເຂົ້າມາ ສປປ ລາວ ຕ້ອງການສ້າງປະສົບການໃໝ່ໆໃຫ້ກັບຕົນເອງ ທີ່ໄດ້ຮັບຮູ້ຂໍ້ມູນຂ່າວສານມາຈາກຊ່ອງທາງຕ່າງໆ.

ການຮັບຮູ້ຂໍ້ມູນຂ່າວສານດ້ານການທ່ອງທ່ຽວຂອງນັກທ່ອງທ່ຽວນັ້ນ ໄດ້ມີການປ່ຽນແປງພຶດຕິກຳຈາກແຕ່ກ່ອນແມ່ນໃຊ້ຊ່ອງທາງການຮັບຮູ້ຈາກໝູ່ເພື່ອນ ແລະ ບໍລິສັດທ່ອງທ່ຽວ. ແຕ່ໃນປີ 2022, ນັກທ່ອງທ່ຽວໄດ້ໃຊ້ຂໍ້ມູນຈາກເວັບໄຊ ແລະ ຊ່ອງທາງອອນລາຍຕ່າງໆ ເປັນຫຼັກສູງເຖິງ 73% ຂອງນັກທ່ອງທ່ຽວທີ່ໃຫ້ຂໍ້ມູນທັງໝົດ. ຮອງລົງມາເປັນຂໍ້ມູນສື່ສັງຄົມອອນລາຍ ເນື່ອງຈາກໃນຊ່ວງທີ່ມີການປິດປະເທດ ຜູ້ຄົນສ່ວນຫຼາຍໃນທົ່ວໂລກໄດ້ໃຊ້ເຄື່ອງມືການສື່ສານຜ່ານສື່ສັງຄົມອອນລາຍ ແລະ ມີການຄົ້ນຫາຂໍ້ມູນດ້ວຍຕົນເອງຫຼາຍຂຶ້ນ.

ເມື່ອນັກທ່ອງທ່ຽວມາຮອດ ສປປ ລາວ ແລ້ວ, ນັກທ່ອງທ່ຽວທີ່ເດີນທາງດ້ວຍຕົນເອງຫຼາຍຂຶ້ນ, ໄດ້ສະແດງອອກໃນການໃຊ້ບໍລິການລົດຕຸກໆ ອັດຕາສ່ວນ 46.7% ແລະ ລົດໂດຍສານ 45.6%. ນອກຈາກນັ້ນ, ຍັງມີການໃຊ້ລົດຖີບ

37.7% ລວມທັງການເດີນທາງແບບອື່ນໆ ຊຶ່ງລວມເຖິງລົດໄຟ ລາວ-ຈີນ  44.6%. ແຕ່ ສັງເກດເຫັນວ່າ ມີການໃຊ້ບໍລິການລົດແທັກຊີຂ້ອນຂ້າງໜ້ອຍ  ພຽງແຕ່  8.6%.  ເມື່ອພິຈາລະນາຕາມລັກສະນະຂອງການເດີນທາງເຂົ້າມາ  ເຫັນວ່າການເດີນທາງເຂົ້າມາສ່ວນຫຼາຍເປັນການເດີນທາງຄົນດຽວ ເຖິງ 38.7% ແລະ ເດີນທາງເປັນຄູ່ຜົວເມຍ 37.1%. ສໍາລັບການເດີນທາງມາກັບໝູ່  ມີພຽງ 15.9%. ໃນປີ 2022 ນັກທ່ອງທ່ຽວທີ່ເຂົ້າມາທ່ຽວ ສປປ ລາວ ເປັນຄັ້ງທໍາອິດມີເຖິງ 80.4%, ເພີ່ມຂຶ້ນຈາກປີ 2019 ແມ່ນ 61.8%. ມາທ່ຽວຄັ້ງທີ 2 ມີພຽງແຕ່ 9.7%, ທຽບໃສ່ປີ 2019 ມາທ່ຽວຄັ້ງທີ 2 ກວມ 23.9%

ຈາກຂໍ້ມູນທີ່ໄດ້ວິເຄາະມາຂ້າງເທິງ, ເຫັນໄດ້ຢ່າງຊັດເຈນວ່າ ການເຂົ້າມາທ່ອງທ່ຽວໃນ ສປປ ລາວ ຈະເປັນລັກສະນະການມາເປີດປະສົບການໃໝ່ທີ່ແຕກຕ່າງຈາກປະເທດຂອງເຂົາເຈົ້າ ແລະ ເປັນຮູບແບບການທ່ອງທ່ຽວພະຈົນໄພອີກຮູບແບບໜຶ່ງ. ຊຶ່ງເສັ້ນທາງທີ່ນັກທ່ອງທ່ຽວໃຊ້ໃນການທ່ອງທ່ຽວຢູ່ ສປປ ລາວ ສ່ວນຫຼາຍແມ່ນ ຫຼວງພະບາງ 93.6%, ນະຄອນຫຼວງວຽງຈັນ ມີອັດຕາສ່ວນ 78.4%  ແລະ ວັງວຽງ 69.2% ເມື່ອໄປເຖິງຈຸດໝາຍປາຍທາງແລ້ວ ຈະແບ່ງການພັກແຮມເປັນ 2 ກຸ່ມຄື: ກຸ່ມທີ່ຕ້ອງການຄວາມສະດວກສະບາຍຈະພັກຢູ່ໂຮງແຮມກວມເອົາ 51.1% ແລະ ກຸ່ມທີ່ຕ້ອງການປະຢັດຄ່າໃຊ້ຈ່າຍຈະພັກຢູ່ເຮືອນພັກ  49.9%.  ໃຊ້ເວລາໃນການເຂົ້າພັກສະເລ່ຍ  9.6  ມື້  ຊຶ່ງສະເລ່ຍຄ່າໃຊ້ຈ່າຍໃນການທ່ອງທ່ຽວ  ປະມານ  98.6  ໂດລາສະຫະລັດ/ມື້.  ມີຄວາມເພິ່ງພໍໃຈໃນການໃຊ້ຈ່າຍທີ່ມາຢ້ຽມຢາມ  ສປປ ລາວ ຫຼາຍ 42.3%, ພໍໃຈຫຼາຍທີ່ສຸດ 31.9%, ພໍໃຈປານກາງ 25.2% ແລະ ພໍໃຈໜ້ອຍ 0.7%.

## ຕາຕະລາງທີ 30: ລັກສະນະຂອງນັກທ່ອງທ່ຽວຕ່າງປະເທດທີ່ມາທ່ອງທ່ຽວ ແຕ່ປີ 2018-2022

| ລັກສະນະ | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|
| **ຮູບແບບການເດີນທາງ** | 100% | 100% | - | - | 100% |
| ທາງອາກາດ | 31.4 | 39.8 | - | - | 44.7 |
| ທາງບົກ | 68.5 | 60.2 | - | - | 55.3 |
| **ເພດ** | 100% | 100% | - | - | 100% |
| ຊາຍ | 52.4 | 52.8 | - | - | 62.4 |
| ຍິງ | 47.6 | 47.2 | - | - | 37.6 |
| **ອາຍຸ** | 100% | 100% | - | - | 100% |
| 15 ເຖິງ 19 | 3.7 | 3.1 | - | - | 1.2 |
| 20 ເຖິງ 29 | 35.9 | 25.3 | - | - | 20.1 |
| 30 ເຖິງ 39 | 24.2 | 31.9 | - | - | 31.2 |
| 40 ເຖິງ 49 | 10.1 | 18.6 | - | - | 24.6 |
| 50 ເຖິງ 59 | 11.3 | 11.3 | - | - | 6.4 |
| 60 ຂຶ້ນໄປ | 14.6 | 9.6 | - | - | 16.5 |
| **ອາຊີບ** | 100% | 100% | - | - | 100% |
| ພະນັກງານລັດ | 9.6 | 12.7 | - | - | 15.3 |
| ພະນັກງານເອກະຊົນ | 36.4 | 50.3 | - | - | 31.6 |
| ນັກສຶກສາ | 13.2 | 8.4 | - | - | 8.8 |
| ແມ່ບ້ານ | 2.8 | 2.4 | - | - | 5.2 |
| ບໍານານ | 11.7 | 8.5 | - | - | 15.6 |
| ຄ້າຂາຍ, ທຸລະກິດ | 10.1 | 8.7 | - | - | 16.7 |
| ອື່ນໆ | 15.9 | 9.0 | - | - | 6.8 |
| **ຈຸດປະສົງຂອງການຢ້ຽມຢາມ** | 100% | 100% | - | - | 100% |
| ທຸລະກິດ | 7.4 | 6.0 | - | - | 3.0 |
| ທ່ອງທ່ຽວ | 81 | 83.7 | - | - | 94 |
| ຢ້ຽມຢາມຄອບຄົວ | 3.3 | 1.3 | - | - | 1.3 |
| ທາງການ, ກອງປະຊຸມ ແລະ ສໍາມະນາ | 1.4 | 2.1 | - | - | 0.4 |
| ທັດສະນະສຶກສາ | 2.9 | 6.3 | - | - | - |
| ທາງຜ່ານ | 0.5 | - | - | - | 0.2 |
| ອື່ນໆ | 3.5 | 0.6 | - | - | 1.0 |

| ລັກສະນະ | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|
| **ຄົນທີ່ເດີນທາງມານຳ** | 100% | 100% | - | - | 100% |
| ຄົນດຽວ | 24.1 | 22.6 | - | - | 38.7 |
| ຜົວຫຼືເມຍ/ຜູ້ຮູ້ໃຈ | 39.4 | 27.1 | - | - | 37.1 |
| ເດັກ | 6.2 | 2.9 | - | - | 1.8 |
| ຜູ້ຮ່ວມງານ | 3.2 | 10.4 | - | - | 4.8 |
| ເພື່ອນ | 26.1 | 34.4 | - | - | 15.9 |
| ອື່ນໆ | 5.3 | 4.6 | - | - | 1.7 |
| **ເດີນທາງທ່ອງທ່ຽວໃນລາວ** | % | % | - | - | % |
| ໂດຍທາງເຮືອບິນ | 43.5 | 22.8 | - | - | 21.5 |
| ລົດໂດຍສານ | 48.6 | 74.9 | - | - | 45.6 |
| ທາງເຮືອ | 31.6 | 15.6 | - | - | 28 |
| ລົດຕຸກຕຸກ | 44.1 | 30.1 | - | - | 46.7 |
| ລົດເທັກຊີ້ | 32.4 | 17.6 | - | - | 8.6 |
| ລົດສ່ວນຕົວ | 20.8 | 16.9 | - | - | 6.8 |
| ທາງລົດຖີບ | 16.6 | 9.8 | - | - | 37.7 |
| ອື່ນໆ | 11.8 | 6.5 | - | - | 44.6 |
| **ມາຢ້ຽມຢາມລາວຈັກຄັ້ງ** | 100% | 100% | - | - | 100% |
| ມາຄັ້ງທຳອິດ | 78.2 | 61.8 | - | - | 80.4 |
| ມາຄັ້ງທີ່ສອງ | 7.9 | 23.9 | - | - | 9.7 |
| ມາຄັ້ງທີ່ສາມ ຫຼື ຫລາຍກວ່າສາມຄັ້ງ | 13.9 | 14.3 | - | - | 9.9 |
| **ແຫຼ່ງຂໍ້ມູນກ່ຽວກັບປະເທດລາວ** | % | % | - | - | % |
| ເວັບໄຊ | - | 47.6 | - | - | 73.0 |
| ທະວິດເຕີ | - | 71.1 | - | - | 4.0 |
| ເຟັດບຸກ | 16.4 | 11.5 | - | - | 12.8 |
| ປື້ມ ຫຼື ວາລະສານທົ່ວໄປ | 19.2 | 15.9 | - | - | 11.1 |
| ໂທລະພາບ ຫຼື ວິທະຍຸ | 3.5 | 3.4 | - | - | 2.7 |
| ໝູ່ເພື່ອນ | 28.4 | 40.6 | - | - | 14.4 |
| ບໍລິສັດທ່ອງທ່ຽວ | 17.3 | 27.8 | - | - | 5.6 |
| ອື່ນໆ | 8.2 | 4.3 | - | - | 8.9 |
| **ຜະລິດຕະພັນທີ່ນັກທ່ອງທ່ຽວສົນໃຈ** | % | % | - | - | % |
| ທຳມະຊາດ | 59 | 55.9 | - | - | 91.6 |
| ປະຫວັດສາດ | 44.1 | 54 | - | - | 71.1 |
| ວັດທະນະທຳ | 63.4 | - | - | - | - |
| ເມືອງມໍລະດົກໂລກ | 11.5 | 24.8 | - | - | 52.7 |
| ວິຖີຊີວິດຂອງປະຊາຊົນ | 12.4 | 9.5 | - | - | 33.7 |
| ທ່ອງທ່ຽວແບບອະນຸລັກ | 13.4 | 13.7 | - | - | 27.3 |
| ຊົນເຜົ່າ | 23.2 | 13.7 | - | - | 35.4 |
| ທ່ອງທ່ຽວແບບປະຈົນໄພ | 13.8 | 20.1 | - | - | 26.8 |
| ທ່ອງທ່ຽວແບບກະສິກຳ | 37.2 | 3.6 | - | - | 15.0 |
| ວັດ ແລະ ອະນຸສາວະລີ | 37.2 | 35.8 | - | - | 57.0 |
| ລ່ອງເຮືອ | 16 | 7.0 | - | - | 30.0 |
| ອາຫານ | 31 | 29.2 | - | - | 42.4 |
| ຊື້ເຄື່ອງ | 20.4 | 26.6 | - | - | 22.1 |
| ຈຸດໝາຍປາຍທາງໃໝ່ | 21.9 | 24 | - | - | 22.7 |
| ອື່ນໆ | 13 | 5.4 | - | - | 4.1 |

| ລັກສະນະ | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|
| **ປະເພດທີ່ພັກ** | % | % | - | - | % |
| ໂຮງແຮມ | 57.9 | 70.9 | - | - | 51.1 |
| ເຮືອນພັກ | 43.9 | 31.6 | - | - | 49.9 |
| ເຮືອນພັກປະຊາຊົນ | 7 | 5.5 | - | - | 2.3 |
| ເຮືອນສ່ວນຕົວ | 4 | 2.4 | - | - | 1.1 |
| ອື່ນໆ | 5.9 | 4.1 | - | - | 2.6 |
| **ແຂວງທີ່ໄປຢ້ຽມຢາມ** | % | % | - | - | % |
| ອັດຕະປື | 1.2 | 0.4 | - | - | 0.7 |
| ບໍ່ແກ້ວ | 4.8 | 4.3 | - | - | 15.7 |
| ບໍລິຄຳໄຊ | 2 | 1.1 | - | - | 2.1 |
| ຈຳປາສັກ | 10.2 | 11.1 | - | - | 21.4 |
| ຫົວພັນ | 1.3 | 0.7 | - | - | 6.7 |
| ຄຳມ່ວນ | 6.4 | 10.3 | - | - | 10.8 |
| ຫຼວງນ້ຳທາ | 4.3 | 3.2 | - | - | 4.7 |
| ຫຼວງພະບາງ | 79.4 | 45.4 | - | - | 93.6 |
| ອຸດົມໄຊ | 4.4 | 2.5 | - | - | 9.2 |
| ຜົ້ງສາລີ | 2.5 | 1.6 | - | - | 1 |
| ສາລະວັນ | 1.2 | 0.8 | - | - | 1.1 |
| ສະຫວັນນະເຂດ | 5.2 | 48.3 | - | - | 11 |
| ເຊກອງ | 1.8 | 1.2 | - | - | 1.4 |
| ນະຄອນຫຼວງວຽງຈັນ | 66.5 | 52.1 | - | - | 78.4 |
| ວຽງຈັນ | 38.2 | 32.5 | - | - | 16.1 |
| ໄຊສົມບູນ | 1.6 | 3.5 | - | - | - |
| ໄຊຍະບູລີ | 1.5 | 0.8 | - | - | 0.2 |
| ຊຽງຂວາງ | 5.3 | 4.1 | - | - | 14.3 |
| ເມືອງວັງວຽງ | - | - | - | - | 69.2 |
| **ປະເທດທີ່ໄດ້ເດີນທາງໄປທ່ອງທ່ຽວ** | % | % | - | - | % |
| ຢ້ຽມຢາມແຕ່ ສປປ ລາວ ເທົ່ານັ້ນ | 27.1 | 50.1 | - | - | 33 |
| ປະເທດໄທ | 53 | 58.0 | - | - | 71.6 |
| ກຳປູເຈຍ, ຈີນ ແລະ ຫວຽດນາມ | 46.2 | 35.0 | - | - | 38.4 |
| ປະເທດອາຊີຕາເວັນອອກສ່ຽງໃຕ້ | 24.1 | 16.6 | - | - | 15.4 |
| ບໍ່ມີຂໍ້ຽເຫຼົ່ານີ້ | 1.8 | 1.8 | - | - | 1.7 |
| **ລະດັບຄວາມເພິ່ງພໍໃຈໃນການໃຊ້ຈ່າຍທີ່ມາຢ້ຽມຢາມ ສປປ ລາວ** | **100%** | **100%** | - | - | **100%** |
| ຫຼາຍທີ່ສຸດ | 28.8 | 21.7 | - | - | 31.9 |
| ຫຼາຍ | 40.2 | 43.7 | - | - | 42.3 |
| ປານກາງ | 25.2 | 31.7 | - | - | 25.2 |
| ໜ້ອຍ | 4.3 | 2.6 | - | - | 0.7 |
| ໜ້ອຍທີ່ສຸດ | 1.5 | 0.3 | - | - | - |
| **ໄລຍະພັກເຊົາສະເລ່ຍ(ມື້)** | **7.9** | **7.9** | - | - | **9.6** |
| **ຄ່າໃຊ້ຈ່າຍສະເລ່ຍຕໍ່ຜູ້ໜຶ່ງ ຕໍ່ໜຶ່ງມື້(ໂດລາສະຫະລັດ)** | **90.7** | **83.6** | - | - | **98.6** |

## ການສຳຫຼວດນັກທ່ອງທ່ຽວພາຍໃນ

ຕາຕະລາງລຸ່ມນີ້ແມ່ນການລາຍງານຜົນການສຳຫຼວດ ໂດຍໄດ້ຈາກການສຳພາດນັກທ່ອງທ່ຽວພາຍໃນຈຳນວນ 1,600 ເທື່ອຄົນ ໃນລະຫວ່າງ ເດືອນ ມີນາ – ທັນວາ 2022 ທີ່ສະໜາມບິນພາຍໃນວັດໄຕ, ແຂວງຫຼວງພະບາງ, ແຂວງວຽງຈັນ ແລະ ແຂວງຈຳປາສັກ ຜູ້ທີ່ຖືກສຳພາດແມ່ນເປັນຕົວແທນນັກທ່ອງທ່ຽວພາຍໃນທັງໝົດ ທີ່ເດີນທາງໄປທ່ອງທ່ຽວໃນແຕ່ລະແຂວງ ຢູ່ ສປປ ລາວ.

ສຳລັບຜົນຂອງການວິເຄາະນັກທ່ອງທ່ຽວພາຍໃນເຫັນວ່າ ນັກທ່ອງທ່ຽວພາຍໃນທີ່ຕອບແບບສອບຖາມ ໃນຄັ້ງນີ້ມີເພດຊາຍກວມເອົາ 46.7% ແລະ ເພດຍິງ 53.3%. ອາຍຸລະຫວ່າງ 21-40 ປີ ກວມ 39.1%, ອາຍຸ 31-40 ປີ ກວມ 39.8%, ສ່ວນຫຼາຍແມ່ນອາຊີບພະນັກງານ ມີລາຍໄດ້ເປັນເງິນເດືອນ, ເປັນພະນັກງານລັດ 22.6%, ພະນັກງານເອກະຊົນ 32.5% ແລະ ພະນັກງານອົງການຈັດຕັ້ງ 39.8%. ສຳລັບລາຍໄດ້ຂອງຜູ້ຕອບແບບສອບຖາມສ່ວນຫຼາຍ ມີລາຍໄດ້ປະມານ 4,000,001-5,000,000 ກີບຕໍ່ເດືອນ, ສະເລ່ຍ 34% ແລະ ມີລາຍໄດ້ປະມານ 1,000,001-2,000,000 ກີບຕໍ່ເດືອນ ມີ 27.8%.

ການເດີນທາງສ່ວນຫຼາຍໃຊ້ລົດສ່ວນຕົວ ກວມ 53.9%, ຖ້າທຽບໃສ່ປີ 2021 ແມ່ນຫລຸດລົງຫຼາຍ ອັດຕາສ່ວນໃຊ້ລົດສ່ວນຕົວ ມີເຖິງ 90%. ເນື່ອງຈາກໃນທ້າຍປີ 2021 ມີການເປີດນຳໃຊ້ລົດໄຟ ລາວ-ຈີນ ເຮັດໃຫ້ການເດີນທາງຂອງນັກທ່ອງທ່ຽວພາຍໃນມີການປ່ຽນແປງ. ສຳລັບການເດີນທາງດ້ວຍລົດໄຟ ກວມ 22%, ສາເຫດຂອງການໃຊ້ລົດໃນການເດີນທາງ ແມ່ນມີຄວາມສະດວກສະບາຍຖ້າທຽບກັບການເດີນທາງດ້ວຍວິທີອື່ນໆ. ແຕ່ພາຍຫຼັງມີລົດໄຟ ລາວ-ຈີນ ການເດີນທາງດ້ວຍລົດໄຟມີຄວາມສະດວກສະບາຍຫຼາຍກວ່າ, ໃຊ້ເວລາເດີນທາງໄວກວ່າ ແລະ ປະຢັດຫຼາຍກວ່າຖ້າເດີນທາງເປັນກຸ່ມນ້ອຍ ຈຶ່ງເຮັດໃຫ້ມີການປ່ຽນແປງຢ່າງຊັດເຈນ. ນັກທ່ອງທ່ຽວສ່ວນຫຼາຍຈະເດີນທາງໄປກັບຄອບຄົວ ກວມ 34.6% ແລະ ເດີນທາງກັບໝູ່ເພື່ອນ 40.6% ຊຶ່ງເປັນອັດຕາສ່ວນທີ່ໃກ້ຄຽງກັບປີ 2020 ແລະ ປີ 2021 ສະແດງວ່າຮູບແບບການເດີນທາງຂອງນັກທ່ອງທ່ຽວພາຍໃນປະເທດ ຕ້ອງການເດີນທາງເປັນໝູ່ຄະນະຫຼາຍກວ່າການເດີນທາງຜູ້ດຽວ.

ໃນການເດີນທາງຂອງນັກທ່ອງທ່ຽວພາຍໃນປະເທດ ສ່ວນຫຼາຍແລ້ວມີຈຸດປະສົງເພື່ອການທ່ອງທ່ຽວ ກວມ 69.9%, ຢ້ຽມຢາມຄອບຄົວ 15.5%. ການພັກແຮມສ່ວນຫຼາຍໃຊ້ບໍລິການເຮືອນພັກ ກວມ 49.3% ເນື່ອງຈາກວ່າ ລາຄາບໍ່ແພງ, ປະຢັດຄ່າໃຊ້ຈ່າຍໃນການເດີນທາງ ແລະ ໄປພັກນຳເຮືອນພີ່ນ້ອງ 16.6% ເປັນການເດີນທາງເພື່ອຢ້ຽມຢາມພີ່ນ້ອງ ແລະ ໄດ້ທ່ອງທ່ຽວໄປພ້ອມ. ແຕ່ຢ່າງໃດກໍຕາມ, ມີນັກທ່ອງທ່ຽວພາຍໃນປະເທດຈຳນວນໜຶ່ງ ທີ່ຕ້ອງການຄວາມສະດວກສະບາຍ ໂດຍໃຊ້ບໍລິການພັກທີ່ໂຮງແຮມ ກວມ 30% ແລະ ຍັງເປັນອັດຕາສ່ວນທີ່ຍັງຄົງທີ່ ເມື່ອທຽບກັບປີ 2020 ແລະ ປີ 2021.

## ຕາຕະລາງທີ 26: ລັກສະນະຂອງນັກທ່ອງທ່ຽວພາຍໃນທີ່ມາທ່ອງທ່ຽວ ແຕ່ປີ 2020-2022

| ລັກສະນະ | | 2020 | 2021 | 2022 |
|---|---|---|---|---|
| **ເພດ** | | 100% | 100% | 100% |
| | ຊາຍ | 43.7 | 57.2 | 46.7 |
| | ຍິງ | 56.3 | 42.8 | 53.3 |
| **ອາຍຸ** | | 100% | 100% | 100% |
| | ຕ່ຳກວ່າ 20 | 7.0 | 10.1 | 6.2 |
| | 21 ເຖິງ 30 | 47.0 | 33.9 | 39.1 |
| | 31 ເຖິງ 40 | 28.0 | 37.2 | 39.8 |
| | 41 ເຖິງ 50 | 15.0 | 16.7 | 11.6 |
| | 51 ເຖິງ 60 | 2.0 | 2.0 | 3.0 |
| | 61 ຂຶ້ນໄປ | 1.0 | 0.1 | 0.4 |
| **ອາຊີບ** | | 100% | 100% | 100% |
| | ພະນັກງານລັດ | 26.6 | 15.8 | 22.6 |
| | ພະນັກງານເອກະຊົນ | 26.4 | 33.9 | 32.5 |
| | ອົງການຈັດຕັ້ງ | - | - | 26.9 |
| | ນັກສຶກສາ | 10.4 | 33.5 | 14.0 |
| | ແມ່ບ້ານ | 32.1 | 13.6 | - |
| | ບຳນານ | 1.7 | 0.8 | 1.2 |
| | ຄ້າຂາຍ, ທຸລະກິດ | 2.4 | 0.4 | 2.8 |
| | ອື່ນໆ | 0.4 | 2.0 | - |
| **ຈຸດປະສົງຂອງການຢ້ຽມຢາມ** | | % | % | % |
| | ທ່ອງທ່ຽວ | 84.7 | 87.4 | 69.9 |
| | ທຸລະກິດ | 6.0 | 7.7 | 3.1 |
| | ຢ້ຽມຢາມຄອບຄົວ | 6.7 | 19.4 | 15.5 |
| | ທາງການ, ກອງປະຊຸມ ແລະ ສຳມະນາ | 8.5 | 10.0 | 6.7 |
| | ທັດສະນະສຶກສາ | - | 0.2 | 3.1 |
| | ປິ່ນປົວ | 0.7 | 2.0 | - |
| | ສາດສະໜາ | 0.6 | 3.0 | 1.8 |
| | ອື່ນໆ | 0.3 | 1.2 | - |
| **ລາຍໄດ້ຕໍ່ເດືອນ** | | **100%** | **100%** | **100%** |
| | ຕ່ຳກວ່າ - 1,000,000 | 19.3 | 13.7 | 7.1 |
| | 1,000,001-2,000,000 | 10.2 | 4.4 | 27.8 |
| | 2,000,001-3,000,000 | 14.2 | 12.2 | 12.1 |
| | 3,000,001-4,000,000 | 19.5 | 16.6 | 19.0 |
| | 4,000,001-5,000,000 | 9.2 | 11.2 | 34.0 |
| | 5,000,001-6,000,000 | 12.4 | 18.4 | - |
| | ຫຼາຍກວ່າ 6,000,001 | 15.2 | 23.6 | - |

| ລັກສະນະ | | 2020 | 2021 | 2022 |
|---|---|---|---|---|
| **ເດີນທາງທ່ອງທ່ຽວ** | | % | % | % |
| | ໂດຍທາງເຮືອບິນ | 22.1 | 9.3 | 6.4 |
| | ລົດໂດຍສານ | 9.0 | 3.9 | 11.4 |
| | ລົດສ່ວນຕົວ | 67.1 | 90.0 | 53.9 |
| | ລົດທົວ | 1.2 | 1.3 | 6.1 |
| | ທາງເຮືອ | 2.2 | 0.9 | 0.1 |
| | ອື່ນໆ / ລົດໄຟ | 0.6 | 2.0 | 22.0 |
| **ເດີນທາງຮ່ວມກັບ** | | **%** | **%** | **%** |
| | ຄົນດຽວ | 13.6 | 9.0 | 7.6 |
| | ຄອບຄົວ | 39.0 | 46.1 | 34.6 |
| | ມານຳຄູ່ຮັກ/ມານຳຄົນຮູ້ໃຈ | - | 7.4 | 15.3 |
| | ເພື່ອນຮ່ວມງານ | - | 21.7 | 1.9 |
| | ມານຳໝູ່ເພື່ອນ | 46.7 | 25.6 | 40.6 |
| | ອື່ນໆ | 0.9 | 2.4 | - |
| **ສະຖານທີ່ພັກແຮມ** | | **%** | **%** | **%** |
| | ໂຮງແຮມ | 26.4 | 33.4 | 30 |
| | ເຮືອນພັກ | 45.7 | 11.2 | 49.3 |
| | ຣີສອດ | - | - | 3.6 |
| | ເຮືອນພັກສ່ວນຕົວ | 24.6 | 10.3 | - |
| | ເຮືອນພີ່ນ້ອງ | - | 5.2 | 16.6 |
| | ອື່ນໆ | 3.3 | 49.0 | 0.5 |
| **ຄ່າໃຊ້ຈ່າຍໃນການທ່ອງທ່ຽວຄັ້ງນີ້(ກີບ)** | | | | **2,743,776** |
| **ໄລຍະເວລາການພັກເຊົາໃນການທ່ອງທ່ຽວ(ວັນ)** | | **3** | **2.51** | **3** |

## ພາກທີ III: ການຄາດຄະເນສະຖິຕິການທ່ອງທ່ຽວ.

ຫຼັງຈາກທີ່ມີການປະກາດເປີດປະເທດໃຫ້ມີການເດີນທາງຂອງນັກທ່ອງທ່ຽວຕ່າງປະເທດ ແລະ ມີການຫຼຸດຜ່ອນມາດຕະການຕ່າງໆ ໃນການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19, ໃນປີ 2022 ບັນຍາກາດການທ່ອງທ່ຽວ ຢູ່ພາກພື້ນ, ສາກົນ ແລະ ສປປ ລາວ ໄດ້ກັບມາມີຊີວິດຊີວາອີກຄັ້ງໜຶ່ງ. ຊຶ່ງເປັນປີເລີ່ມຟື້ນຕົວຂອງຂະແໜງການທ່ອງທ່ຽວ, ລັດຖະບານແຫ່ງ ສປປ ລາວ ໄດ້ມີແຜນປະກາດເປັນປີທ່ອງທ່ຽວລາວ ໃນປີ 2024 ຊຶ່ງຈະລົງທຶນເຂົ້າໃນການປັບປຸງໂຄງລ່າງພື້ນຖານສິ່ງອຳນວຍຄວາມສະດວກ, ການປັບປຸງສະຖານທີ່ທ່ອງທ່ຽວ ບວກກັບການຟື້ນຟູຂອງບັນດາຫົວໜ່ວຍທຸລະກິດການທ່ອງທ່ຽວ ແລະ ການໂຄສະນາການທ່ອງທ່ຽວຢູ່ພາຍໃນ ແລະ ຕ່າງປະເທດ, ຄາດວ່າການທ່ອງທ່ຽວຂອງ ສປປ ລາວ ຈະຟື້ນຕົວເຕັມທີ່ໃນປີ 2026 ຖ້າຫາກບໍ່ມີຜົນກະທົບຈາກສະພາບແວດລ້ອມພາຍນອກ ຈຳນວນນັກທ່ອງທ່ຽວຕ່າງປະເທດ ອາດຈະເທົ່າກັບປີ 2019.

ຄາດການວ່າປີ 2023 ຈະມີນັກທ່ອງທ່ຽວຕ່າງປະເທດເຂົ້າມາຈຳນວນ 2,504,213 ເທື່ອຄົນ ເພີ່ມຂຶ້ນ 93.47% ຈາກປີ 2022, ມີລາຍຮັບຈາກ ນັກທ່ອງທ່ຽວຕ່າງປະເທດ 367,588,360 ໂດລາສະຫະລັດ ເພີ່ມຂຶ້ນ 37.97%, ມີໄລຍະເວລາການພັກແຮມ ສະເລ່ຍເພີ່ມຂຶ້ນເລັກນ້ອຍ ຈາກ 9.67 ວັນ ເປັນ 9.73 ວັນ. ປີ 2024 ເປັນປີທ່ອງທ່ຽວລາວ ຄາດວ່າຈະມີນັກທ່ອງທ່ຽວເພີ່ມຂຶ້ນ 2,728,181 ເທື່ອຄົນ, ມີລາຍຮັບເພີ່ມເປັນ 401,153,373 ໂດລາສະຫະລັດ. ປີ 2025 ຄາດວ່າຈະມີນັກທ່ອງທ່ຽວເພີ່ມຂຶ້ນ 2,952,148 ເທື່ອຄົນ, ມີລາຍຮັບເພີ່ມຂຶ້ນ 434,718,385 ໂດລາສະຫະລັດ ແລະ ປີ 2026 ຄາດການວ່າຈະມີນັກທ່ອງທ່ຽວຕ່າງປະເທດຈຳນວນ 3,176,116 ເທື່ອຄົນ ແລະ ມີລາຍຮັບ 468,283,398 ໂດລາສະຫະລັດ.

ຄາດຄະເນການເຂົ້າມາຂອງນັກທ່ອງທ່ຽວຕ່າງປະເທດ ຈະມີ 3 ໄລຍະ ຄື: ໄລຍະເດືອນ ມີນາ - ມິຖຸນາ ແມ່ນໄລຍະ ເທດສະການບຸນປີໃໝ່ລາວທີ່ມີຊື່ສຽງ ແລະ ເປັນວັນພັກຍາວຂອງພາກພື້ນ; ໄລຍະເດືອນ ສິງຫາ-ກັນຍາ ແມ່ນລະດູຝົນຕົກຂ້ອນຂ້າງຫຼາຍ (Green Season) ນັກທ່ອງທ່ຽວຈະຫຼຸດລົງ ເນື່ອງຈາກເປັນໄລຍະທີ່ມີຝົນຕົກຫຼາຍທີ່ສຸດຂອງປີ ເຮັດໃຫ້ການເດີນທາງບໍ່ສະດວກ ແລະ ຢູ່ເຂດເອີຣົບແມ່ນລະດູຮ້ອນ ແລະ ເປັນຊ່ວງການທ່ອງທ່ຽວຂອງບັນດາປະເທດເອີຣົບ ແລະ ອາເມລິກາ. ໃນໄລຍະເດືອນ ພະຈິກ ເຖິງ ເດືອນ ມັງກອນ ນັກທ່ອງທ່ຽວຈະກັບເຂົ້າມາອີກຄັ້ງເນື່ອງຈາກເປັນຊ່ວງລະດູໜາວຂອງເຂດເອີຣົບ ແລະ ອາເມລິກາ ບວກກັບໄລຍະເທດສະການວັນພັກຍາວໃນທ້າຍປີ. ຊຶ່ງໄລຍະນີ້ ຢູ່ທົ່ວປະເທດຂອງ ສປປ ລາວ ຈະມີອາກາດທີ່ເຢັນສະບາຍ, ການເດີນທາງສະດວກ ເປັນລະດູການທ່ອງທ່ຽວຈະເຮັດໃຫ້ການທ່ອງທ່ຽວຂອງ ສປປ ລາວ ມີສີສັນ ແລະ ຈະມີນັກທ່ອງທ່ຽວເຂົ້າມາທ່ຽວຫຼາຍຂຶ້ນ.

ຄາດວ່າການທ່ອງທ່ຽວພາຍໃນປະເທດ ຈະຟື້ນຕົວ ໃນປີ 2026, ຊຶ່ງປີ 2023 ການທ່ອງທ່ຽວພາຍໃນຈະຟື້ນຕົວຂ້ອນຂ້າງໄວ ເນື່ອງຈາກການປ່ຽນໂຄງສ້າງທາງຄົມມະນາຄົມ ເຊັ່ນ: ເສັ້ນທາງລົດໄຟ ລາວ-ຈີນ, ເສັ້ນທາງດ່ວນ, ການປັບປຸງ ເສັ້ນທາງສາຍຫຼັກຕ່າງໆ ແລະ ການເປີດສະໜາມບິນໜອງຄ້າງ ແຂວງຫົວພັນ ເຮັດໃຫ້ມີຄວາມສະດວກໃນການເດີນທາງຫຼາຍຂຶ້ນ. ໃນປີ 2023 ຄາດວ່າຈະມີນັກທ່ອງທ່ຽວພາຍໃນປະເທດທັງໝົດ 1,751,666 ເທື່ອຄົນ ເພີ່ມຂຶ້ນຈາກປີ 2022 ສະເລ່ຍ 5.86%, ຄາດວ່າ ປີ 2024 ຈະມີນັກທ່ອງທ່ຽວພາຍໃນປະເທດ 1,881,717 ເທື່ອຄົນ, ປີ 2025 ຈຳນວນ 2,011,768 ເທື່ອຄົນ ແລະ ປີ 2026 ຈ□ານວນ 2,141,819 ເທື່ອຄົນ. ແຕ່ໄລຍະເວລາການພັກແຮມ ຄາດວ່າຈະເພີ່ມຂຶ້ນເລັກໜ້ອຍ ຈາກ 2.51 ວັນ ເປັນ 3 ວັນ ເນື່ອງຈາກຄວາມສະດວກໃນການເດີນທາງ ເຮັດໃຫ້ສາມາດໄປທ່ອງທ່ຽວໄດ້ຫຼາຍບ່ອນ ແລະ ມີການພັກແຮມໄດ້ຫຼາຍວັນ ໂດຍຄາດວ່າລາຍຮັບຈາກນັກທ່ອງທ່ຽວພາຍໃນຈະເພີ່ມຈາກປີ 2022 ຈຳນວນ 273,028,360 ໂດລາສະຫະລັດ, ມາເປັນ 367,438,024 ໂດລາສະຫະລັດ ໃນປີ 2026 ເພີ່ມຂຶ້ນສະເລ່ຍຕໍ່ປີ 7.42%.

**ຕາຕະລາງທີ 31: ຄາດຄະເນຈຳນວນນັກທ່ອງທ່ຽວຕ່າງປະເທດ, ລາຍຮັບຈາກ ການທ່ອງທ່ຽວ ແລະ ສະເລ່ຍໄລຍະພັກເຊົາ, ແຕ່ປີ 2023-2026**

| ປີ | ຈຳນວນນັກທ່ອງທ່ຽວ | ລາຍຮັບຈາກ ການທ່ອງທ່ຽວ(ໂດລາ) | ໄລຍະພັກເຊົາສະເລ່ຍ ຂອງນັກທ່ອງທ່ຽວສາກົນ | ໝາຍເຫດ |
|---|---|---|---|---|
| 1993 | 102,946 | 6,280,000 | 3.5 | |
| 1994 | 146,155 | 7,557,600 | 5.1 | |
| 1995 | 346,460 | 24,738,480 | 4.3 | |
| 1996 | 403,000 | 43,592,263 | 4.1 | |
| 1997 | 463,200 | 73,276,904 | 5.0 | |
| 1998 | 500,200 | 79,960,145 | 5.0 | |
| 1999 | 614,278 | 97,265,324 | 5.5 | |
| 2000 | 737,208 | 113,898,285 | 5.5 | |
| 2001 | 673,823 | 103,786,323 | 8.0 | |
| 2002 | 735,662 | 113,409,883 | 6.5 | |
| 2003 | 636,361 | 87,302,412 | 6.0 | |
| 2004 | 894,806 | 118,947,707 | 6.5 | |
| 2005 | 1,095,315 | 146,770,074 | 7.0 | |
| 2006 | 1,215,106 | 173,249,896 | 7.0 | |
| 2007 | 1,623,943 | 233,304,695 | 7.0 | |
| 2008 | 1,736,787 | 275,515,758 | 6.5 | |
| 2009 | 2,008,363 | 267,700,224 | 7.0 | |
| 2010 | 2,513,028 | 381,669,031 | 7.0 | |
| 2011 | 2,723,564 | 406,184,338 | 7.0 | |
| 2012 | 3,330,072 | 506,022,586 | 7.2 | |
| 2013 | 3,779,490 | 595,909,127 | 8.4 | |
| 2014 | 4,158,719 | 641,636,543 | 7.9 | |
| 2015 | 4,684,429 | 725,365,681 | 7.5 | |
| 2016 | 4,239,047 | 724,191,957 | 7.57 | |
| 2017 | 3,868,838 | 648,067,008 | 8.39 | |
| 2018 | 4,186,432 | 811,010,661 | 7.99 | |
| 2019 | 4,791,065 | 934,710,409 | 7.93 | |
| 2020 | 886,447 | 213,367,141 | 7.93 | |
| 2021 | - | - | - | |
| 2022 | 1,294,365 | 264,511,231 | 9.67 | |
| 2023 | 2,504,213 | 367,588,360 | 9.73 | ຄາດຄະເນ |
| 2024 | 2,728,181 | 401,153,373 | 9.73 | ຄາດຄະເນ |
| 2025 | 2,952,148 | 434,718,385 | 9.73 | ຄາດຄະເນ |
| 2026 | 3,176,116 | 468,283,398 | 9.73 | ຄາດຄະເນ |

## ຕາຕະລາງທີ 32: ຄາດຄະເນຈຳນວນນັກທ່ອງທ່ຽວຕ່າງປະເທດໃນແຕ່ລະເດືອນ ແຕ່ປີ 2023-2026

| ປີ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ | ລວມທັງໝົດ |
|---|---|---|---|---|---|---|---|---|---|---|---|---|---|
| **2005** | 77,093 | 81,766 | 113,722 | 100,477 | 83,665 | 96,140 | 67,878 | 85,940 | 77,694 | 99,437 | 100,217 | 111,286 | **1,095,315** |
| **2006** | 111,917 | 112,520 | 104,675 | 99,928 | 94,017 | 85,016 | 79,525 | 93,045 | 86,762 | 108,720 | 111,747 | 127,234 | **1,215,106** |
| **2007** | 150,853 | 140,238 | 137,463 | 117,805 | 141,771 | 117,741 | 121,541 | 127,687 | 126,071 | 152,366 | 139,478 | 150,929 | **1,623,943** |
| **2008** | 158,776 | 149,744 | 140,256 | 142,321 | 150,314 | 149,299 | 133,355 | 122,636 | 128,427 | 134,943 | 158,673 | 168,043 | **1,736,787** |
| **2009** | 186,668 | 176,596 | 154,059 | 101,288 | 117,754 | 140,929 | 161,055 | 156,239 | 178,194 | 191,697 | 190,132 | 253,752 | **2,008,363** |
| **2010** | 229,032 | 196,746 | 210,337 | 224,753 | 179,168 | 140,929 | 182,876 | 201,273 | 195,318 | 220,925 | 237,692 | 265,613 | **2,484,662** |
| **2011** | 265,367 | 237,554 | 257,454 | 221,854 | 266,080 | 237,153 | 244,181 | 219,440 | 209,259 | 182,671 | 192,683 | 189,868 | **2,723,564** |
| **2012** | 298,227 | 283,945 | 285,583 | 314,494 | 287,100 | 267,306 | 213,953 | 238,725 | 228,186 | 275,948 | 347,212 | 289,393 | **3,330,072** |
| **2013** | 345,411 | 350,459 | 308,847 | 331,717 | 297,038 | 273,152 | 297,439 | 308,065 | 280,235 | 326,579 | 331,823 | 328,725 | **3,779,490** |
| **2014** | 367,980 | 384,664 | 360,675 | 366,610 | 339,580 | 232,400 | 316,631 | 304,725 | 368,666 | 382,064 | 365,824 | 368,900 | **4,158,719** |
| **2015** | 436,358 | 426,697 | 421,841 | 416,628 | 325,095 | 298,970 | 337,805 | 358,358 | 461,921 | 400,054 | 420,650 | 380,052 | **4,684,429** |
| **2016** | 400,140 | 450,902 | 396,975 | 363,538 | 343,162 | 296,272 | 296,242 | 323,603 | 302,981 | 336,863 | 367,964 | 360,405 | **4,239,047** |
| **2017** | 339,764 | 350,380 | 355,217 | 346,559 | 314,344 | 298,306 | 278,971 | 280,983 | 262,464 | 325,574 | 358,997 | 357,280 | **3,868,838** |
| **2018** | 358,248 | 347,227 | 362,221 | 376,133 | 339,165 | 344,286 | 282,602 | 386,911 | 295,293 | 348,281 | 352,225 | 393,840 | **4,186,432** |
| **2019** | 331,524 | 337,356 | 393,497 | 404,945 | 392,491 | 368,646 | 418,537 | 437,586 | 362,005 | 413,251 | 473,648 | 457,579 | **4,791,065** |
| **2020** | 351,104 | 345,900 | 189,443 | | | | | | | | | | **886,447** |
| **2021** | - | - | - | - | - | - | - | - | - | - | - | - | - |
| **2022** | 30 | 128 | 266 | 122 | 36,006 | 175,419 | 133,673 | 157,489 | 146,024 | 211,000 | 228,550 | 205,658 | **1,294,365** |
| **2023** | 173,282 | 176,331 | 205,675 | 211,658 | 205,149 | 192,685 | 218,763 | 228,719 | 189,214 | 216,000 | 247,568 | 239,169 | **2,504,213** |
| **2024** | 188,780 | 192,101 | 224,069 | 230,588 | 223,497 | 209,918 | 238,328 | 249,175 | 206,137 | 235,318 | 269,710 | 260,560 | **2,728,181** |
| **2025** | 204,278 | 207,871 | 242,464 | 249,518 | 241,844 | 227,152 | 257,893 | 269,631 | 223,059 | 254,636 | 291,851 | 281,950 | **2,952,148** |
| **2026** | 219,775 | 223,642 | 260,859 | 268,448 | 260,192 | 244,385 | 277,459 | 290,087 | 239,982 | 273,954 | 313,993 | 303,340 | **3,176,116** |

**ຕາຕະລາງທີ 33: ການຄາດຄະເນຈຳນວນນັກທ່ອງທ່ຽວພາຍໃນ, ລາຍຮັບຈາກການທ່ອງທ່ຽວ ແລະ ສະເລ່ຍໄລຍະພັກເຊົາ ແຕ່ປີ 2023-2026**

| ປີ | ຈຳນວນນັກທ່ອງທ່ຽວພາຍໃນ | ລາຍຮັບຈາກການທ່ອງທ່ຽວ(ໂດລາ) | ໄລຍະພັກເຊົາສະເລ່ຍຂອງນັກທ່ອງທ່ຽວ | ໝາຍເຫດ |
|---|---|---|---|---|
| 2016 | 1,986,738 | - | - | |
| 2017 | 2,236,914 | - | - | |
| 2018 | 2,818,576 | - | - | |
| 2019 | 2,350,851 | - | - | |
| 2020 | 1,581,100 | 122,740,653 | 3.00 | |
| 2021 | 828,592 | 93,589,466 | 2.51 | |
| 2022 | 1,654,688 | 273,028,158 | 3.00 | |
| 2023 | 1,751,666 | 283,830,360 | 3.00 | ຄາດຄະເນ |
| 2024 | 1,881,717 | 311,699,582 | 3.00 | ຄາດຄະເນ |
| 2025 | 2,011,768 | 339,568,803 | 3.00 | ຄາດຄະເນ |
| 2026 | 2,141,819 | 367,438,024 | 3.00 | ຄາດຄະເນ |

**ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.**
**ກົມພັດທະນາການທ່ອງທ່ຽວ**
**ຫ້ອງການສຳນັກງານໃຫຍ່**
**ຕູ້.ປ.ນ** : 3556
**ຖະໜົນລ້ານຊ້າງ**
**ນະຄອນຫຼວງວຽງຈັນ, ສປປ ລາວ**
**ໂທ** : (856-21)212251, 212769, 217910, 252961
**ແຟັກ** : (856-21)212769, 217910.

**Website:**
http://www.tourismlaos.org
http://www.ecotourismlaos.com

**ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ລະຫັດປະເທດ : 856**

| | | |
|---|---|---|
| ອັດຕະປື | ໂທ: (036) 211 056 | ແຟັກ: (036) 211 014 |
| ບໍ່ແກ້ວ | ໂທ: (084) 211 162 | ແຟັກ: (084) 211 162 |
| ບໍລິຄຳໄຊ | ໂທ: (054) 212 667 | ແຟັກ: (054) 212 667 |
| ຈຳປາສັກ | ໂທ: (031) 212 021 | ແຟັກ: (031) 212 021 |
| ຫົວພັນ | ໂທ: (064) 312 567 | ແຟັກ: (064) 312 567 |
| ຄຳມ່ວນ | ໂທ: (051) 212 512 | ແຟັກ: (051) 212 512 |
| ຫຼວງນ້ຳທາ | ໂທ: (086) 312 047 | ແຟັກ: (086) 312 047 |
| ຫຼວງພະບາງ | ໂທ: (071) 212 487 | ແຟັກ: (071) 252 904 |
| ອຸດົມໄຊ | ໂທ: (081) 211 797 | ແຟັກ: (081) 212 482 |
| ຜົ້ງສາລີ | ໂທ: (088) 210 098 | ແຟັກ: (088) 210 098 |
| ສາລະວັນ | ໂທ: (034) 211 528 | ແຟັກ: (034) 211 528 |
| ສະຫວັນນະເຂດ | ໂທ: (041) 212 755 | ແຟັກ: (041) 212 755 |
| ເຊກອງ | ໂທ: (038) 211 361 | ແຟັກ: (038) 211 013 |
| ນະຄອນຫຼວງວຽງຈັນ | ໂທ: (021) 222 971 | ແຟັກ: (021) 212 926 |
| ວຽງຈັນ | ໂທ: (023) 211 629 | ແຟັກ: (023) 211 629 |
| ໄຊສົມບູນ | ໂທ: (026) 210 030 | ແຟັກ: (026) 210 030 |
| ໄຊຍະບູລີ | ໂທ: (030) 5180095 | ແຟັກ: (074) 211 183 |
| ຊຽງຂວາງ | ໂທ: (061) 312 217 | ແຟັກ: (061) 312 217 |

## ຄະນະຈັດພິມປຶ້ມ

**ຄະນະທີ່ປຶກສາ:**

| | |
|---|---|
| ທ່ານ ນາງ ພອນມະລີ ອິນທະພິມ | ຫົວໜ້າກົມພັດທະນາການທ່ອງທ່ຽວ |
| ທ່ານ ໂອເງິນ ປັນຍານຸວົງ | ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ |
| ທ່ານ ສົມໄຊ ສີປະເສີດ | ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ |

**ຄະນະກວດແກ້ເນື້ອໃນ:**

| | |
|---|---|
| ທ່ານ ໂສພາບ ສົມສຸກ | ຫົວໜ້າພະແນກສະຖິຕິ ແລະ ວິໄຈການທ່ອງທ່ຽວ |
| ທ່ານ ບຸນທະວີ ສີສະວາ | ຮອງຫົວໜ້າພະແນກສະຖິຕິ ແລະ ວິໄຈການທ່ອງທ່ຽວ |
| ທ່ານ ໄຊນະລົງ ບຸນຕາ | ຮອງຫົວໜ້າພະແນກສະຖິຕິ ແລະ ວິໄຈການທ່ອງທ່ຽວ |

**ຄະນະປະສານງານຂັ້ນສູນກາງ:**

| | |
|---|---|
| ທ່ານ ນາງ ອ່າງຄຳ ໃຈມາວົງສັກ | ວິຊາການພະແນກສະຖິຕິ ແລະ ວິໄຈການທ່ອງທ່ຽວ |
| ທ່ານ ດາວຈັນ ສິງຄຳປອງ | ວິຊາການພະແນກສະຖິຕິ ແລະ ວິໄຈການທ່ອງທ່ຽວ |
| ທ່ານ ນາງ ເກດມະນີວອນ ບົວຄ່າສິດ | ວິຊາການພະແນກສະຖິຕິ ແລະ ວິໄຈການທ່ອງທ່ຽວ |
| ທ່ານ ທິນະຄອນ ພິມມະໄກສອນ | ວິຊາການພະແນກສະຖິຕິ ແລະ ວິໄຈການທ່ອງທ່ຽວ |
| ທ່ານ ນາງ ຕາບີ້ ແສງປະກາຍ | ວິຊາການພະແນກສະຖິຕິ ແລະ ວິໄຈການທ່ອງທ່ຽວ |

**ຄະນະປະສານງານຂັ້ນແຂວງ:**

| | |
|---|---|
| ນາງ ວາດສະໜາ ປ່ອງຄຳຕັນ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ອັດຕະປື |
| ທ້າວ ສຸລິສິດ ສົມສີ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ບໍ່ແກ້ວ |
| ທ້າວ ສອນວິໄຊ ສີຫາລາດ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ບໍລິຄຳໄຊ |
| ນາງ ຄຳພູວຽງ ຈັນທິລາດ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ຈຳປາສັກ |
| ທ້າວ ວັນນະສິນ ລີວົງແສງ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ຫົວພັນ |
| ນາງ ບຸນທະຫວາຍ ດຳລືຊາ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ຄຳມ່ວນ |
| ນາງ ຄອນ ກາລີຄຳ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ຫຼວງນ້ຳທາ |
| ນາງ ວິພາພອນ ໄຊແສງສຸກ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ຫຼວງພະບາງ |
| ທ້າວ ຄຳ ຈິດຕິວົງ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ອຸດົມໄຊ |
| ທ້າວ ອະນຸວົງ ແກ້ວນະຄອນ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ຜົ້ງສາລີ |
| ທ້າວ ປັນຍາຮັກ ມຸຊິກາ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ສາລະວັນ |
| ທ້າວ ຈັນທະຈັກ ກິດຕະວົງ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ສະຫວັນນະເຂດ |
| ທ້າວ ຂັນແພງ ສີປະເສີດ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ເຊກອງ |
| ນາງ ອ່ອນຈັນ ທິບພາວັນ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ |
| ທ້າວ ຕ່ອມ ສີນວນຈັນ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ວຽງຈັນ |
| ທ້າວ ກ້ອງປ່າງ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ໄຊສົມບູນ |
| ທ້າວ ບຸນສິງ ທອງຫຼຽນ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ໄຊຍະບູລີ |
| ນາງ ພັນທະພອນ ສາຍພູເຄືອ | ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ຊຽງຂວາງ |

